ການປະຕິບັດໜ້າທີ່ກຳນົດໝາຍຂອງແຜນການຫ້າປີເທື່ອທີ ສິບເອັດ, ຄົ້ນຄວ້າຕະຖານບ່ອນອີງ ເພື່ອຕີລາຄາ ລວມສົມບັດ ທາງດ້ານການເມືອງ ແລະຄວາມສາມາດນຳໃຊ້ຕົວຈິງ ຂອງ ພະນັກງານເສດຖະກິດ, ຄວາມສາມາດຂອງພວກເຂົາເຈົ້າໃນ ການເຮັດວຽກແບບໃໝ່, ໃນການດຳເນີນຍາດລັຽວໄປສູ່ການ ທະວີສຸມການຜະຫລິດ, ໃນການຮັບປະກັນການຍົກສູງປຸ ສິດ ທິພາບແລະການປັບປຸງລຸນນະພາບໃຫ້ດີ. ພວກເຮົາເຊື່ອ ໝັ້ນ ວ່າ ພະນັກງານເສດຖະກິດຂອງພວກເຮົາ ຈະສົມເປັນຜູ້ ໄວ້ ເນື້ອເຊື່ອໃຈຂອງພັກແລະປະຊາຊົນ! (ຕຸ໊ບມີ)

ມັນບໍ່ອາດຈະຄາດຄິດໄວ້ວ່າ ການເຄື່ອນໄຫວ ເສດຖະກິດ ແບບສັ່ງຕົ້ມນິຍົມອັນມີປະສິດທິພາບຈະເປັນໄປໄດ້ໂດຍບໍ່ມີການ ອີງໃສ່ຫມູ່ຄະນະ, ໂດຍຂາດການສຶກສາອົບຮົມທ່າທີແບບ ເປັນ ເຈົ້າຕົນເອງຕ້ອຽການ, ໂດຍບໍ່ມີການຈັດຕັ້ງເສດຖະກິດອັນດີ ແລະການຂາດສະມັດຖະພາບອັນດີໃນການເຮັດວຽກ ຂອງແຕ່ ລະຄົນ. ການເຄື່ອນໄຫວເສດຖະກິດຄືແນວນັ້ ຮຽກຮ້ອງໃຫ້ມີ ການຈັດຕັ້ງຢ່າງຈະແຈ້ງ ແລະມັນກໍ່ບໍ່ສອດຄ່ອງກັບ ຄວາມບໍ່ ເປັນລະບຽບ ແລະການລ່ວງລະເມີດວິໄນ, ຕ້ອງເຊັກໃຫ້ ແຕ່ ລະບ່ອນເຂົ້າລະບຽບ, ເຄັ່ງຄັດຕໍ່ຜູ້ອອກແຮງງານທີ່ບໍ່ ຕົ້ມຕົ໋ວ, ຊຸກຍູ້ຂະແຫນງການຫລ້າຫລັງ ໃຫ້ຂົ້ນເທົ່າທຽມກັນກັບ ບ່ອນ ອື່ນ, ນີ້ແຫລະບັນດາສະຫາຍ, ສິ່ງທີ່ເປັນສ່ວນປະກອບ ໃນ ຈຳ

ນວນຫລາຍອັນ ທີ່ອຳນວຍຄວາມອາດສາມາດຫລາຍຢ່າງເຂົ້າ ໃນການປັບປຸງຫມາກຜົນຂອງການຜະຫລິດ ໃຫ້ດີຂຶ້ນ.

ຢູ່ໃນເງື່ອນໄຂປັດຈຸບັນ, ການສືບຕໍ່ດຶງເອົາກຳມະກອນ, ຊາວນາລວມຫມູ່ແລະພາລະກອນ ເຂົ້າຮ່ວມໃນການ ຄຸ້ມຄອງ ການຜະຫລິດ, ການຍົກສູງບົດບາດຂອງອົງການກຳມະບານໃນ ຖານະ ເປັນອົງການຈັດຕັ້ງທີ່ເຕົ້າໂຮມມະຫາຊົນ ຫລາຍກວ່າ ຫມູ່ ເຂົ້າໃນການແກ້ໄຂຫນົດໝຸກບັນຫາກ່ຽວກັບການຜະຫລິດ, ການອອກແຮງງານ, ຊົ່ວໂມງປະຈຳວັນແລະການພັກຜ່ອນ ຂອງ ຊາວຜູ້ອອກແຮງງານ, ລ້ວນແຕ່ມີຄວາມຫມາຍອັນສຳຄັນອັນຍິ່ງ ໃຫຍ່ທາງດ້ານເສດຖະກິດແລະສັງຄົມ. ມື, ໃນໄລຍະ ທຳອິດ ທຳອ່ອງແຜນການຫ້າປີ, ມັນມີຄວາມຈຳເປັນທີ່ ຈະ ຕ້ອງເປີດ ກວ້າງຂອບເຂດຂອງການແຂ່ງຂັນສັງຄົມນິຍົມອອກຕື່ມ, ແລະ ຜັນຂະຫຍາຍຂະບວນການລົງທຶນປ່ອງຊົ່ວ ເພື່ອນຳໃຊ້ ຊັບພະ ຍາກອນຢ່າງຖືກຕ້ອງເຫມາະສົມ, ຫລຸດຜ່ອນການເສຍ ຫາຍ ແລະເສດເຫລືອໝຸກຢ່າງ, ຫລຸດຜ່ອນການໃຊ້ຈ່າຍທີ່ບໍ່ ຜະຫລິດ ຜົນ, ລົບລ້າງນ້ຳໃຈທີ່ບໍ່ເປັນເຈົ້າຕໍ່ການເຄື່ອນໄຫວເສດຖະກິດ ແລະການຟຸມເຟືອຍ ຢ່າງເຖິງກົກເຖິງຮາກ. ການອອກ ແຮງ ງານແຕ່ລະຊົ່ວໂມງ, ວັດຖຸດິບແຕ່ລະກິໂລ, ພະລັງງານ ແຕ່ລະ ກິໂລວັດ-ຊົ່ວໂມງ, ການລົງທຶນພັນຖານແຕ່ລະຫຣຸບ ຈະ ຕ້ອງ ໃຫ້ມີຜົນລາຍໄດ້ຫລາຍເທົ່າທີ່ຈະຫລາຍໄດ້ໃຫ້ແກ່ພາລະ ກິດ ລວມຂອງພວກເຮົາ(ຕົບມື). ບັນດາອົງການຈັດຕັ້ງ ຂອງພັກ, ຂອງອຳນາດໂຊວຽດ, ຂອງອົງການກຳມະບານແລະ ຂອງອົງ

ການກຸ່ມໂຊໂມນ ຈະຕ້ອງເອົາໃນໃສ່ຮ່ຳຮຽນຢ່າງຕັ້ງໜ້າບົດ ຮຽນທີ່ໄດ້ສະສົມມາ ສະເພາະບົດຮຽນໃນການເສີມຂະຫຍາຍ ຂະບວນການແຂ່ງຂັນເພື່ອຕ້ອນຮັບກອງປະຊຸມໃຫຍ່ຄັ້ງທີ XXVI ຂອງ ພ.ກ.ສ.ຊ., ສະຫລຸບຜົນສຳເລັດຂອງຜູ້ດີເດັ່ນແລະນຳ ເອົາໄປເຜີຍແຜ່ໃຫ້ໝົດທຸກຄົນ ໄດ້ຮ່ຳຮຽນນຳ.ບໍ່ຕ້ອງສົງໄສ ເລີຍວ່າ ແຜນການຫ້າປີເທື່ອທີ່ສິບເອັດ ຈະຕ້ອງເດັ່ນຂຶ້ນດ້ວຍ ໄຊຊະນະອັນໃຫມ່ຂອງຊົນຊັ້ນກຳມະກອນ ຜູ້ພິລະອາດຫານ ຂອງພວກເຮົາ, ຂອງຊົນຊັ້ນຊາວນາລອມໜ່ແລະຂອງ ປັນຍາ ຊົນ! (ຕົບມື)

ບັນດາສະຫາຍຜູ້ແທນ!

ແຜນການຫ້າປີທີ່ໄດ້ຜ່ານມາແລ້ວສິບເທື່ອ ໄດ້ຮັບໃຊ້ພາລະ ກິດອັນຍິ່ງໃຫຍ່ ໃນການກໍ່ສ້າງກອນມູນິດ ແລະການປັບປຸງສັນ ຕິພາບໃຫ້ໝັ້ນຄົງຢ່າງສົມກຽດ, ແລະໄດ້ເຮັດ ໃຫ້ ຊີວິດການ ເປັນຢູ່ຂອງຊາວໂຊວຽດມີການປັບປຸງດີຂຶ້ນກວ່າເກົ່າ. ແຜນ ການຫ້າປີເທື່ອທີ່ສິບເອັດຂອງພວກເຮົາ ກໍ່ແມ່ນແນໃສ່ ຮັບໃຊ້ ວັດຖຸປະສົງອັນດຽວກັນນີ້.

ໂຄງຮ່າງ "ທິດທາງພື້ນຖານແຫ່ງການຂະຫຍາຍຕົວທາງດ້ານ ເສດຖະກິດແລະສັງຄົມຂອງ ສ.ສ.ສ.ຊ.ສຳລັບປີ ໑໙໗໑ - ໑໙໗໕ ແລະສຳລັບໄລຍະຮອດປີ ໑໙໙໐" ທີ່ໄດ້ນຳມາສະເໜີ ໃຫ້ພວກສະຫາຍສຶກສາຄົ້ນຄວ້ານັ້ນ, ສະແດງເຖິງສິດເຜິ ປະ ໂຫຍດອັນເປັນຕາຍຂອງປະຊາຊົນທັງຫມົດ, ຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງຄວາມກ້າວໜ້າຂອງສັງຄົມໂຊ

ວຽດໃນທຸກໆດ້ານ.

ການປະຕິດສ້າງແລະສຸ້ມຕິພາບ, ແມ່ນສອງເມ້ອໃນທຸ່ ຕັດ ແຍກອຸອກຈາກກັນບໍ່ໄດ້, ທີ່ໃກ້ຊິດຕິດແທດກັນແລະເປັນສິ່ງຫວາ ແຫນທີ່ສຸດ ຂອງຊາວຜູ້ອອກແຮງງານແຕ່ລະຄົນ, ມັນກຳນົດ ເຖິງເມ້ອໃນຂອງແຜນການຂອງພວກເຮົາ. ຢູ່ໃນສະພາບແວດ ລ້ອມສາກົນ ອັນສຸດທີ່ສັບສົນໃນປັດຈຸບັນ ເຊິ່ງອິດທິກຳລັງປະຕິ ການແລະການຮຸກຮານຂອງຈັກກະພັດນິຍົມ ພວມເພີ່ມທະ ວີ ການເຄື່ອນໄຫວ, ສະຫະພາບໂຊວຽດ, ຄິດ ເລໂອນິດ ອີລິສ ເປສເມບ ໄດ້ເນັ້ນວ່າ, ຈະເຮັດທຸກສິ່ງທຸກຢ່າງເພື່ອປ້ອງກັນ ແລະເຮັດໃຫ້ສັນຕິພາບຫມັ້ນຄົງ, ສະກັດກັ້ນການເກີດ ສົງຄາມ ໂລກຄັ້ງໃຫມ່ ແລະຮັບປະກັນຢ່າງຫມັ້ນຄົງໃຫ້ປະຊາຊົນ ໂຊ ວຽດໄດ້ອອກແຮງງານໃນສັນຕິພາບ ແລະຢ່າງມີຫົວຄິດປະດິດ ສ້າງ. (ຕົບມືຍາວ). ໃນອະນາຄົດນັ້ນ, ພວກເຮົາຈະສືບ ຕໍ່ເອົາໃຈໃສ່ຢ່າງບໍ່ລົດລະ ຕໍ່ການປັບປຸງການປ້ອງກັນຊາດໃຫ້ ເຂັ້ມແຂງ. ເປັນອັນແນ່ນອນແລ້ວວ່າ ກຳລັງປະກອບອາວຸດ ທີ ສະຫງ່າອີງອຸາດຂອງພວກເຮົາ ປະກອບດ້ວຍທຸກພາຫະນະອັນ ຈຳເປັນ ເພື່ອເຮັດໃຫ້ທຸກຄວາມພະຍາຍາມຂອງອິດທິກຳ ລັງ ຈັກກະພັດ ໄດ້ຮັບການປະລາໄຊ ໃນການຂອກເອົາປຽບທາງ ທະຫານ. (ຕົບມື)

ພັກຂອງພວກເຮົາແລະປະຊາຊົນຂອງພວກເຮົາ ມີຄວາມ ທະນົງໃຈຕໍ່ຜົນສຳເລັດອັນຍິ່ງໃຫຍ່ທີ່ຊົນຊາດ ພວກ ເຮົາ ເຈົ້າເບິ່ງອະນາຄົດດ້ວຍຄວາມເຊື່ອຫມັ້ນອັນຫນັກແຫນ້ນ.

ເພື່ອກອມມູນິດ, ເພື່ອສັນຕິພາບ, ອຍກງານກໍ່ສ້າງອັນ ເຄິ່ງ ຮ້ອນພຸ່ມລໍຖ້າພວກເຮົາ!

ເພື່ອສຸຳເລັດວຽກງານກໍ່ສ້າງອັນກວ້າງໃຫຍ່ໄພສານ, ຄືດັ່ງ ເລນິນຜູ້ຍິ່ງໃຫຍ່ໄດ້ເຄີ້ນວ່າ ຕົນເອງຕ້ອງມີ: "ຄວາມ ຕື່ນຕົວ ແນວຄິດ, ນ້ຳໃຈເສັຍສະຫລະ, ຄວາມຫມັ້ນຫນຽວ ຢ່າງ ພຽງ ພໍ..."

ທຸກເສັ້ນທາງອັນ ພິລະອາດຫານແຫ່ງການຕໍ່ສູ້ ປະຕິ ວັດ, ແຫ່ງການກໍ່ສ້າງສັງຄົມໃຫມ່ ໄດ້ສະແດງໃຫ້ເຫັນວ່າ ລຸນສົມ ບັດອັນດີເດັ່ນດັ່ງກ່າວ ໄດ້ເຊື່ອມຊຶມເກີດຂຶ້ນຢູ່ໃນພັກເລນິນ, ຢູ່ ປະຊາຊົນໂຊວຽດທີ່ເປັນຜູ້ອອກແຮງງານ, ນັກຕໍ່ສູ້ ແລະນັກກໍ່ ສ້າງຜູ້ຍິ່ງໃຫຍ່! (ຕົບມື)

ຫົວຄິດປະດິດສ້າງອັນມີຊີວິດຊີວາຂອງມະຫາຊົນ, ທີ່ໄດ້ ຮັບ ການປຸກລະດົມ ໂດຍລຸດົມຄະຕິອັນສູງສົ່ງຂອງລັດທິກອມມູນິດ, ໄດ້ຮັບການຈັດຕັ້ງແລະນຳພາຈາກພັກ, ມີຄວາມຄ້ຳປະກັນ ອັນ ຫນັກແຫນ້ນວ່າ ມະຕິອັນເປັນປະຫວັດສາດຂອງກອງປະຊຸມຄັ້ງ ທີ XXVI ຂອງ ພ.ກ.ສ.ຊ. ຈະໄດ້ຮັບການປະຕິບັດໃຫ້ປາ ກົດຜົນເປັນຈິງ ຢ່າງມີໄຊ (ຕົບມືຍືດຍາວ.)

ຄວາມເປັນເອກະພາບອັນບໍ່ມີຫຍັງມາມ້າງເພໄດ້ລະຫວ່າງ ພັກ ກັບ ປະຊາຊົນ ຫມັ້ນຍືນ! (ຕົບມືຍືດຍາວ)

ປະຊາຊົນໂຊວຽດຫມັ້ນຍືນ! (ຕົບມືຍືດຍາວ). ກຽດສັກສີຈົ່ງ ເປັນຂອງພັກກອມມູນິດແຫ່ງສະຫະພາບໂຊວຽດ! (ຫມົດທຸກຄົນ ພ້ອມກັນລຸກຂຶ້ນແລະຕົບມືຢ່າງຟົດຟື້ນແລະຍືດຍາວ.)

ຄຳລັດ

ຂອງກອງປະຊຸມໃຫຍ່ ຄັ້ງທີ XXVI

ຂອງພັກກອມມູນິດແຫ່ງສະຫະພາບໂຊວຽດ

ກ່ຽວກັບຮ່າງ ຂອງຄະນະບໍລິຫານງານສູນກາງ ພ.ກ.ສ.ຊ.

ວ່າດ້ວຍ "ທິດທາງພົ້ນຖານ

ແຫ່ງການຂະຫຍາຍຕົວທາງດ້ານເສດຖະກິດແລະ

ສັງຄົມຂອງ ສ.ສ.ສ.ຊ. ສຳລັບປີ ໑໙໗໑-໑໙໗໕

ແລະ ໄລຍະຮອດປີ ໑໙໘໐"

ໄດ້ຖືກຮັບຮອງ ຢ່າງເປັນເອກະສັນ
ໃນວັນທີ ໔ ມີນາ ປີ ໑໙໗໑

ຜ່ານການຟັງ ແລະ ການພິຈາລະນາບົດລາຍງານຂອງສະ
ຫາຍ ຕີໂຄນົບ ນ.ອ.,ປະທານສະພາລັດຖະມົນຕີ ສ.ສ.ສ.
ຊ.ກ່ຽວກັບທິດທາງພົ້ນຖານ ແຫ່ງການຂະຫຍາຍຕົວທາງດ້ານ
ເສດຖະກິດ ແລະ ສັງຄົມຂອງ ສ.ສ.ສ.ຊ.ໃນປີ ໑໙໗໑-
໑໙໗໕ ແລະ ໃນ ໄລຍະ ຮອດ ປີ ໑໙໘໐, ກອງປະຊຸມ
ໃຫຍ່ຄັ້ງທີ XXVI ຂອງພັກກອມມູນິດ ແຫ່ງສະຫະພາບໂຊວຽດ
ຕີກລົງດັ່ງລຸ່ມນີ້ :

ຮັບຮອງເອົາທິດທາງພົ້ນຖານ ແຫ່ງການຂະຫຍາຍຕົວທາງ

ດ້ານເສດຖະກິດແລະສັງຄົມຂອງ ສ.ສ.ສ.ຊ.ໃນປີ ໑໙໗໑-໑໙໗໕ ແລະ ໃນໄລຍະຮອດປີ ໑໙໙໐.

ໂດຍສອດຄ່ອງກັບ ທິດທາງພື້ນຖານ ມອບໝາຍໃຫ້ສະພາລັດຖະມົນຕີ ສ.ສ.ສ.ຊ.ຮ່າງແຜນການແຫ່ງລັດກ່ຽວກັບການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມຂອງ ສ.ສ.ສ.ຊ. ແຕ່ປີ ໑໙໗໑ ຫາປີ ໑໙໗໕ ໂດຍມີການ ແຍກຮ່າງແຜນດັ່ງກ່າວອອກ ສຳລັບແຕ່ລະປີ, ສຳລັບແຕ່ລະກະຊວງທະບວງການ ຂອງ ສ.ສ.ສ.ຊ. ແລະສຳລັບ ແຕ່ລະສາທາລະນະລັດສະຫະພາບ ແລ້ວນຳເອົາມັນຂຶ້ນໃຫ້ສະພາໂຊວຽດ ສູງສຸດ ຂອງສ.ສ.ສ.ຊ. ພິຈາລະນາໃນເດືອນຕຸລາ ປີ ໑໙໗໑.

ໃນເວລາຮ່າງແຜນການຫ້າປີເທື່ອທີ ๑๑ ໃຫ້ພິຈາລະນາຂໍ້ສະເໜີຕ່າງໆ ທີ່ໄດ້ຍົກຂຶ້ນໃນກອງປະຊຸມໃຫຍ່ຄັ້ງທີ XXVI ຂອງພ.ກ.ສ.ຊ., ໃນກອງປະຊຸມໃຫຍ່ ຂອງພັກກອມມູນິດ ຂອງບັນດາສາທາລະນະລັດສະຫະພາບ, ໃນກອງປະຊຸມ ຂອງພັກຢູ້ຂັ້ນມີນທົນ ແລະ ແຂວງ ໃນກອງປະຊຸມຂອງນັກເຄື່ອນໄຫວຢ່າງຕັ້ງໜ້າຫ້າວຫັນແລະໃນກອງປະຊຸມຄົບຄະນະ ຂອງຄະນະພັກຂັ້ນຕາແສງ, ຂັ້ນເມືອງແລະຂັ້ນເຂດປົກຄອງຕົນເອງ ຢູ່ໃນໝູ່ຄະນະຊາວຜູ້ອອກແຮງງານແລະຢູ່ໃນໜັງສືພິມກໍ່ຄື ຢູ່ໃນຈົດໝາຍຂອງພວກກຳມະກອນ, ສະມາຊິກສະຫະກອນກະເສດ, ນັກວິສາການ ແລະ ນັກປາດອາຈານ.

ກອງປະຊຸມໃຫຍ່ຄັ້ງທີ XXVI ຂອງ ພ.ກ.ສ.ຊ.ຖືວ່າການປະຕິບັດໂຄງການອັນກ້ວາງຂວາງ ແຫ່ງການເສີມ ຂະຫຍາຍ

ປະເທດຊາດ ທາງດ້ານເສດຖະກິດ ແລະ ສັງຄົມ ໃນໄລຍະ ແຜນການຫ້າປີເທື່ອໃຫມ່ນີ້ ເປັນໜ້າທີ່ທາງດ້ານ ເສດຖະກິດ ແລະ ການເມືອງ ອັນສຳຄັນຍິ່ງ ຂອງບັນດາອົງການ ຈັດຕັ້ງ ຂອງພັກ,ຂອງອຳນາດການປົກຄອງໂຊວຽດ,ຂອງອົງການກຳ ມະບານ ແລະຊາວໜຸ່ມກົມໂຊໂມນ ແລະຂອງອົງການຈັດຕັ້ງ ເສດຖະກິດທັງໝົດ.ກອງປະຊຸມໃຫຍ່ສະແດງຄວາມເຊື່ອໝັ້ນ ວ່າ ພາຍໃຕ້ການນຳພາຂອງພັກເລນິນິດຊາວຜູ້ອອກແຮງງານ ໃນທຸກຂະແໜງການ ຂອງເສດຖະກິດແຫ່ງຊາດ ຈະມີ ການ ເປີດກວ້າງອອກກ່ວາເກົ່າ ຂະບວນການແຂ່ງຂັນສັງຄົມນິຍົມ, ຈະຫຸ່ມເທກຳລັງວັງຊາປະດິດສ້າງ,ຄວາມຮູ,ແລະ ປົດຮຽນ ຂອງຕົນ ເພື່ອປະຕິບັດບັນດາໜ້າທີ່ວຽກງານແຫ່ງການກໍ່ສ້າງ ລະບອບກອມມູນິດ ໃຫ້ສຳເລັດຜົນຢ່າງມີໄຊ.

24/VII
ข้ามจำหน่าย

ທິດທາງພື້ນຖານ
ແຫ່ງການຂະຫຍາຍຕົວ
ຂອງ ສ.ສ.ສ.ຊ.
ທາງດ້ານເສດຖະກິດ
ແລະສັງຄົມ
ສຳລັບ ປີ 1981-1985
ແລະໄລຍະຮອດ ປີ 1990

ໂດຍປະຕິບັດຕາມຍຸດທະສາດທາງດ້ານເສດຖະກິດອຸ່ງແມ່ນ ກອງປະຊຸມໃຫຍ່ຄັ້ງທີ XXIV ແລະ XXV ຂອງ ພ.ກ.ສ.ຊ. ໄດ້ວາງອອກນັ້ນ ປະຊາຊົນໂຊວຽດ ພາຍໃຕ້ການນຳພາ ອັນ ປີຊາສາມາດ ຂອງພັກ ເລນິນ ໄດ້ປະສົບໄຊຊະນະອັນໃຫຍ່ ຫລວງ ໃນພາລະກິດກໍ່ສ້າງພື້ນຖານວັດຖຸ ແລະ ເຕັກນິກຂອງ ລະບອບກອມມູນິດ ແລະ ໃນການເຊີດຊູສະຫວັດດີພາບ ຂອງ ຊາວໂຊວຽດ ໃຫ້ນັບມື້ນັບສູງຂຶ້ນ.

ພົນທະພາບລະຫວ່າງຊົນຊັ້ນກຳມະກອນ, ຊາວນາ ລວມໝູ່ ແລະ ປັນຍາຊົນ ໄດ້ຮັບການປັບປຸງ ໃຫ້ແໜ້ນແຟ້ນ ຂຶ້ນ, ຄວາມເປັນເອກະພາບ ທາງດ້ານການເມືອງ-ສັງຄົມ ແລະ ອຸດົມການ ຢູ່ພາຍໃນສັງຄົມ ໄດ້ໜັກແໜ້ນຂຶ້ນກ່ວາເກົ່າ, ມິດ ຕະພາບລະຫວ່າງບັນດາຊົນຊາດຊົນເຜົ່າຢູ່ໃນ ສ.ສ.ສ.ຊ. ໄດ້ແໜ້ນແຟ້ນຂຶ້ນ. ປະຊາທິປະໄຕສັງຄົມນິຍົມໄດ້ກ້າວຂຶ້ນສູ່ ລະດັບໃໝ່, ຄວາມຕັ້ງໜ້າຫ້າວຫັນຂອງຊາວຜູ້ອອກແຮງງານ

ທາງດ້ານສັງຄົມ ແລະ ການພະລິດ ໄດ້ມີການເພີ່ມທະວີຂຶ້ນ, ບັນດາສະພາໂຊວຽດຂອງຜູ້ແທນປະຊາຊົນ ຂອງອົງການ ການ ມະບານ ແລະ ຂອງອົງການຊາວໜຸ່ມກົມໂຊໂມນ ກໍໄດ້ມີບົດ ບາດສູງຂຶ້ນຕື່ມ. ລັດຖະທຳມະນູນສະບັບໃໝ່ຂອງສ.ສ.ສ.ຊ. ຊຶ່ງແມ່ນລັດຖະທຳມະນູນ ຂອງລະບອບສັງຄົມນິຍົມ ທີ່ ຂະ-ຫຍາຍຕົວ ກໍໄດ້ຖືກຮັບຮອງເອົາ.

ສຳພັນທະພາບລະຫວ່າງ ສ.ສ.ສ.ຊ.ກັບບັນດາ ປະເທດ ສັງຄົມນິຍົມອ້າຍນ້ອງ ໄດ້ເປີດກວ້າງອອກ ແລະ ມີຮູບ ການ ກ້າວໜ້າໃໝ່. ສະຫະພາບໂຊວຽດປະຕິບັດ ຢ່າງສະເໝີຕົ້ນ ສະເໝີປາຍໂຄງການຕໍ່ສູ້ເພື່ອສັນຕິພາບ ແລະການຮ່ວມມືສາ ກົນ, ເພື່ອອິດສະຫລະພາບ ແລະ ເອກະລາດ ຂອງບັນດາປະ ຊາຊາດ, ເພື່ອການຫລຸດຜ່ອນຄວາມເຄັ່ງຕຶງສາກົນ, ອິດທິພົນ ຂອງສະຫະພາບໂຊວຽດ ຕໍ່ຂະບວນວິວັດຂອງເຫດການ ຢູ່ໃນ ໂລກ ໄດ້ເພີ່ມທະວີຂຶ້ນ ຢ່າງບໍ່ຢຸດຢັ້ງ.

ບົດບາດນຳພາ, ຊຸມນຳຊ່ອງທາງ ແລະ ບົດບາດຈັດຕັ້ງຂອງ ພັກກອມມູນິດ ໄດ້ເພີ່ມທະວີຂຶ້ນຢູ່ໃນການແກ້ໄຂ ບັນດາຫນ້າທີ່ ວ່າດ້ວຍການກໍ່ສ້າງເສດຖະກິດ ແລະ ວັດທະນະທຳ, ຢູ່ ໃນ ການເຄື່ອນໄຫວອັນມີຫົວຄິດປະດິດສ້າງ ຂອງປະຊາຊົນ ໂຊ-ວຽດ ແລະ ຂອງຊາວຜູ້ອອກແຮງງານໃນຫມົດທຸກສາທາລະ-ນະລັດ ແຫ່ງສະຫະພາບ.

ສະຫະພາບໂຊວຽດ ພວມຍ່າງເຂົ້າໃນທົດສະວັດ ທີ່ຈະມາ ເຖິງນີ້ (ປີ ໑໙໖໑-໑໙໗໐) ດ້ວຍຄວາມຕັດສິນໃຈຢ່າງເດັດ

ດ່ຽວ ເພື່ອເຮັດໃຫ້ທິດສະວັດດັ່ງກ່າວ ກາຍເປັນ ທິດສະວັດ
ແຫ່ງພາລະກິດ ແລະ ຜົນສຳເລັດອັນໃຫມ່ແລະໃຫຍ່ຫລວງ.

ທິດທາງພົ້ນຖານແຫ່ງການຂະຫຍາຍຕົວ ທາງດ້ານເສດຖະ
ກິດ ແລະ ສັງຄົມຂອງ ສ.ສ.ສ.ຊ.ສຳລັບປີ ໑໙໗໑-໑໙໗໕
ແລະ ສຳລັບໄລຍະຮອດປີ ໑໙໙໐ ໄດ້ຖືກວາງອອກ ໂດຍອີງ
ໃສ່ໂຄງການດຳເນີນງານຂອງ ພ.ກ.ສ.ຊ.,ອີງໃສ່ ບັນດາ
ມະຕິຕົກລົງ ຂອງກອງປະຊຸ ໃຫຍ່ຄັ້ງທີ XXIV ແລະ XXV
ຂອງພັກ ແລະ ອີງໃສ່ຜົນສຳເລັດທີ່ປະເທດພວກເຮົາຍາດມາ
ໄດ້.ມັນສັງລວມເອົາບົດຮຽນແຫ່ງການກໍ່ສ້າງລະບອບ ກອມມູ
ນິດໃນ ສ.ສ.ສ.ຊ.,ມັນທັງອີງໃສ່ບົດຮຽນ ຂອງປະເທດສັງ
ຄົມນິຍົມອື່ນໆ,ມັນທັງສ່ອງແສງເຖິງຍຸດທະສາດແລະ ຍຸດໂທ-
ບາຍ ຂອງພັກກອມມູນິດ ກ່ຽວກັບບັນຫາອັນສຳຄັນກ່ວາຫມູ່ໃນ
ການເສີມຂະຫຍາຍປະເທດຊາດ ທາງດ້ານເສດຖະກິດ ແລະ
ສັງຄົມຢ່າງເຫມາະສົມ ສອດຄ່ອງກັບສະພາບການ ເງື່ອນໄຂ
ຕົວຈິງສະເພາະຂອງຊຸມປີ ໗໐ ແລະມັນສ່ອງແສງເຖິງລັກສະ
ນະສັນຕິ ແລະ ສ້າງສັນຂອງແຜນການຂອງພວກເຮົາ.

I

ສະຫລຸບຫມາກຜົນຕົ້ນຕໍ
ໃນການເສີມຂະຫຍາຍ ເສດຖະກິດ
ແລະການເຊີດຊູສະຫວັດດີພາບຂອງປະຊາຊົນ
ໃນ ປີ ໑໙໗໖-໑໙໗໐

ໃນໄລຍະແຜນການຫ້າປີເທື່ອທີ ๑๐ ນັ້ນ ເສດຖະກິດແຫ່ງ ຊາດ ໄດ້ຂະຫຍາຍຕົວໄປ ຕາມແນວທາງອັ່ງແມ່ນກອງປະຊຸມ ໃຫຍ່ຄັ້ງທີ XXV ຂອງ ພ.ກ.ສ.ຊ.ໄດ້ກຳນົດອອກເພື່ອແນໃສ່ ສືບຕໍ່ເພີ່ມທະວີສະຫວັດດີພາບຂອງປະຊາຊົນໂຊວຽດ ບົນພື້ນ ຖານການເສີມຂະຫຍາຍການຜະລິດຂອງສັງຄົມ ຢ່າງສະຫມ່ຳ ສະເຫມີ, ການຍົກສູງປະສິດທິພາບຂອງການຜະລິດແລະຄຸນນະ ພາບຂອງແຮງງານ. ຄວາມຮັ່ງມີຂອງປະເທດຊາດໄດ້ທະວີຄູນ ຂຶ້ນຕື່ມ. ພວກເຮົາໄດ້ບັນລຸເຖິງການເຕີບໃຫຍ່ ຂະຫຍາຍຕົວ ຂອງເຫງົ້າພະລັງ ທາງດ້ານເສດຖະກິດ ແລະ ວິທະຍາສາດ ເຕັກນິກ ຂອງຫມົດທຸກຂະແຫນງການຜະລິດວັດຖຸສິ່ງຂອງແລະ ຂົງເຂດບໍ່ຜະລິດວັດຖຸ. ຄວາມສາມາດປ້ອງກັນຊາດຂອງລັດໂຊ ວຽດ ຖືກຮັກສາໄວ້ຢູ່ ໃນລະດັບອັນເຫມາະສົມ.

ຖ້າທຽບໃສ່ແຜນການຫ້າປີເທື່ອທີ ๙, ລາຍໄດ້ແຫ່ງຊາດໃນ ຫ້າປີ ໄດ້ເພີ່ມຕື່ມຂຶ້ນ ๔๐๐ ຕຣູບ, ການຜະລິດ ອຸດສາຫະກຳ

ໄດ້ເພີ່ມຂຶ້ນ ກວກ ຕຽບ ແລະ ການຜະລິດກະສິກຳ ໄດ້ເພີ່ມຂຶ້ນ ໕໐ ຕຽບ.ສ່ວນຫ້າຂອງລາຍໄດ້ແຫ່ງຊາດ ໄດ້ຖືກນຳໃຊ້ໂດຍກົງເຂົ້າໃນການຊຸມໃຊ້ຂອງປະຊາຊົນ, ການກໍ່ສ້າງເຄຫະສະຖານສຳລັບຢູ່ ແລະ ຮັບໃຊ້ວຽກງານ ສັງຄົມ ແລະ ວັດທະນະທຳ.

ໃນໄລຍະຫ້າປີ ໄດ້ມີການລົງທຶນພັນຕານເປັນຈຳນວນຝຶ໔ ຕຽບ ເຂົ້າໃສ່ເສດຖະກິດແຫ່ງຊາດ.ທຶນດົງທີ ໄດ້ເພີ່ມ ຂຶ້ນ ๑,๔ ເທ່ົ.ວິສາຫະກິດຊຸດສາຫະກຳຂະຫນາດໃຫຍ່ ຫລາຍ ກ່ວາ ๑๔๐๐ ແຫ່ງ ໄດ້ເລີ່ມຕົ້ນມີການຜະລິດ.

ໄດ້ມີການຮັບປະກັນໃຫ້ຊຸດສາຫະກຳຫນັກທີ່ແມ່ນພື້ນ ຖານ ຂອງເສດຖະກິດ ສືບຕໍ່ການເຕີບໃຫຍ່ຂະຫຍາຍຕົວ.ບັນດາຂະ ແຫນງການ ທີ່ເປັນຂະແຫນງການຕັດສິນຊະຊາດ ຄວາມກ້າວ ຫນ້າ ທາງດ້ານເຕັກນິກ ໄດ້ຮັບການເສີມຂະຫຍາຍ ດ້ວຍຈັງ ຫວະອັນໄວເລີ່ນຫມູ່.ການຊຸດຄົ້ນວັດຖຸເຊື້ອໄຟ,ການຜະລິດ ພະ ລັງງານໄຟຟ້າ,ການຜະລິດໂລຫະເຫລັກ ແລະ ໂລຫະສີລ້ອມ ແຕ່ໄດ້ເພີ່ມຫະຫລວງຂຶ້ນຕາມ.ການຜະລິດສິນຄ້າໃຊ້ສອຍ ປະຈຳວັນ ສຳລັບປະຊາຊົນ ໄດ້ເພີ່ມຂຶ້ນ ๘๑% ຊຶ່ງໃນນັ້ນການຜະລິດ ສິນຄ້າບຳລຸງວັດທະນະທຳ ແລະ ປັບປຸງຊີວິດປະຈຳວັນ (ໂທ ລະທັດ,ວິທະຍຸ,ຈັກຊັກເຄື່ອງ)ແລະ ເຄື່ອງອຸປະໂພກ ຮັບໃຊ້ ພາຍໃນຄອບຄົວ ໄດ້ເພີ່ມຫະຫລວງຂຶ້ນ ๔๑%;ສິນຄ້າໄດ້ມີຫຼາຍ ຊະນິດຂຶ້ນເລື້ອຍ ແລະ ຄຸນນະພາບຂອງມັນກໍໄດ້ຖືກປັບປຸງ ໃຫ້ດີ ຂຶ້ນກ່ວາເກົ່າ.

ຄວາມກ້າວໜ້າ ທາງດ້ານວິທະຍາສາດ-ເຕັກນິກ ໄດ້ຂະ
ຫຍາຍຕົວຢ່າງໄວວາ, ຂອບເຂດການນຳໃຊ້ຊຸປະກອນເຕັກນິກ
ອັນໃໝ່ໆ ເຂົ້າໃນເສດຖະກິດແຫ່ງຊາດກໍໄດ້ຂະຫຍາຍກ້ວາງ
ອອກຕື່ມ, ລະດັບເຕັກນິກຂອງການຜະລິດກໍໄດ້ຖືກຍົກສູງຂຶ້ນ. ວິ
ທະຍາສາດໂຊວຽດກໍໄດ້ປະກອບສ່ວນຢ່າງຫລວງຫລາຍ ເຂົ້າ
ໃນການແກ້ໄຂບັນດາໜ້າທີ່ດັ່ງກ່າວ.

ແຜນນະໂຍບາຍຂອງພັກ ໃນດ້ານກະສິກຳ ໄດ້ຖືກປະຕິບັດ
ມາ ຢ່າງສະເໝີຕົ້ນສະເໝີປາຍ. ພົ້ນຖານທາງດ້ານວັດຖຸ -
ເຕັກນິກຂອງການກະສິກຳ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງ ຢູ
ເລື້ອຍໆ ອັນໄດ້ເຮັດໃຫ້ກະສິກຳ ນັບມື້ນັບກາຍເປັນອຸດສາຫະ
ກຳຂຶ້ນກ່ວາເກົ່າ. ການລົງທຶນພົ້ນຖານ ເຂົ້າໃສ່ຂະແໜງການ
ດັ່ງກ່າວນີ້ ສຳລັບວຽກງານທັງໝົດແລ້ວ ແມ່ນ ຫລາຍ ກ່ວາ
ໜຶ່ງ ຕື້ຮູບ ໝາຍຄວາມວ່າ ຫລາຍກ່ວາ ໔໗% ຂອງການ
ລົງທຶນພົ້ນຖານທົ່ວໄປ ໃນເສດຖະກິດແຫ່ງຊາດ. ໄດ້ມີການຈັດ
ສົ່ງລົດໄຖນາຈຳນວນ ໑ ລ້ານ ໒ ແສນຄັນ, ລົດຂົນສົ່ງຫລາຍ
ກ່ວາ ໑ ລ້ານ ໓ ແສນຄັນ, ເຄື່ອງຈັກເກັບກ່ຽວທັນຍະພືດປະ
ມານ ໕໔໐ ພັນຄັນ, ເຄື່ອງຈັກຮັບໃຊ້ການລ້ຽງສັດ ແລະການ
ຜະລິດອາຫານສັດເປັນຈຳນວນຫລວງຫລາຍ ແລະໄດ້ມີ ການ
ສົ່ງຝຸ່ນວິທະຍາສາດປະມານ ໓໙໐ ລ້ານໂຕນໄປຮັບໃຊ້ ກະສິ
ກຳ; ການປະກອບເຄື່ອງຈັກໄຟຟ້າໃຫ້ແກ່ ການອອກແຮງງານ
ໄດ້ເພີ່ມຂຶ້ນ ໑,໔ ເທື່ອ. ວຽກງານກໍ່ສ້າງ ຊຸມລະປະທານ
ເໜືອງຝາຍ ໄດ້ດຳເນີນໄປໃນຂອບເຂດ ອັນກ້ວາງໃຫຍ່ໄພ

ສາມ. ເນື້ອທີ່ດິນປູກຝັງທີ່ມີລະບົບຊົນລະປະທານ ແລະ ເນື້ອທີ່ດິນທີ່ໄດ້ຟຸກຈາກການເຮັດໃຫ້ຫມອງບົ່ງແຫ້ງ ໄດ້ມີຮອດເກືອບ ๓๕ ລ້ານເຮັກຕາ. ໄດ້ມີການປະຕິບັດໂຄງການຄົບຊຸດທີ່ແມ່ໃສ່ເພີ່ມທະວີການກະສິກຳຢູ່ໃນເຂດດິນບົ່ງອກງາມຂອງສະຫະພັນລັດເຊຍ. ການລອມສູນ ແລະ ການແບ່ງເຂດການຜະລິດກະສິກຳກໍຄືການສົມທົບລະຫວ່າງກະສິກຳກັບອຸດສາຫະກຳ ໃຫ້ມີລັກສະນະເລິກເຊິ່ງ ແລະ ຮອບດ້ານກ່ວາເກົ່າ.

ການເພີ່ມທະວີການຜະລິດກະສິກຳ ໄດ້ມີການຮັບປະກັນ. ເປັນເທື່ອທຳອິດໃນໄລຍະ๕ປີການເກັບກ່ຽວທັນຍະພືດສະເລ່ຍ ໄດ້ເຖິງ ๘๐๕ ລ້ານໂຕນຕໍ່ປີ. ການຜະລິດຊົ້ນ, ນ້ຳມ, ໄຂ່, ຝ້າຍ ແລະ ຜະລິດຕະພັນອື່ນໆ ໄດ້ເພີ່ມທະວີຂຶ້ນ.

ການຂົນສົ່ງໄດ້ຮັບການເສີມຂະຫຍາຍອີກຕື່ມຂຶ້ນຫນຶ່ງ ແລະ ໄດ້ມີການປັບປຸງການປະກອບອຸປະກອນເຕັກນິກໃຫ້ແກ່ການຂົນສົ່ງໃຫ້ດີກ່ວາເກົ່າ. ຢູ່ໃນການຂົນສົ່ງສິນຄ້າ ແລະ ເຄື່ອງຂອງຕ່າງໆ ການຂົນສົ່ງທາງທໍ່, ທາງທະເລ ແລະ ທາງລົດ ໄດ້ເພີ່ມທະວີຂົດຂາດຂຶ້ນຕື່ມ ແລະ ຢູ່ໃນການສົ່ງຄົນໂດຍສານ ການຂົນສົ່ງທາງອາກາດກໍໄດ້ມີຂົດຂາດສູງຂຶ້ນຕື່ມອີກ. ໄດ້ມີການສືບຕໍ່ກໍ່ສ້າງທາງລົດໄຟເສັ້ນ ບາຍການ-ອາມູຣ.

ເສດຖະກິດຂອງ ສ.ສ.ສ.ຊ. ໄດ້ຮັບການ ເສີມຂະຫຍາຍໃນຖານະເປັນລະບົບຄົບຊຸດເສດຖະກິດແຫ່ງຊາດ ອັນຫນຶ່ງອັນດຽວ. ເຫງົ້າພະລັງທາງດ້ານເສດຖະກິດຂອງແຕ່ລະສາທາລະນະລັດ ກໍໄດ້ເພີ່ມທະວີຂຶ້ນຢ່າງຫລວງຫລາຍ.

ລະບົບການຜະລິດເຂົ້ຽວຢູ່ກັບທ້ອງຖິ່ນໄດ້ຮັບການສ້າງຕັ້ງ-ຂຶ້ນຢ່າງເລັ່ງລັດ, ໂດຍສະເພາະຢູ່ໃນເຂດພາກເໜືອ ແລະ ພາກຕາເວັນອອກ ຂອງປະເທດ. ການຊຸດຄົ້ນນ້ຳມັນ (ນັບທັ້ງ ອາຍທຳມະຊາດເປັນຫາຄອາໂປ) ຢູ່ ສິບຮ ພາກຕາເວັນຕົກ ໄດ້ເພີ່ມທະວີຂຶ້ນ ๘,๑ ເທ່ອ ແລະ ການຊຸດຄົ້ນອາຍ ທຳມະ ຊາດ ກໍໄດ້ເພີ່ມຂຶ້ນ ๔,๗ ເທ່ອ.

ປະສິດທິພາບຂອງການຜະລິດໄດ້ຖືກຍົກສູງຂຶ້ນ ບົນພື້ນຖານ ຄວາມກ້າວໜ້າ ທາງດ້ານວິທະຍາສາດ-ເຕັກນິກ ແລະການ ປັບປຸງການຄຸ້ມຄອງໃຫ້ດີຂຶ້ນກ່ວາເກົ່າ. ສະມັດຖະພາບ ຂອງ ການອອກແຮງງານຂອງສັງຄົມ ໄດ້ເພີ່ມຂຶ້ນ ๑๗%. ຍ້ອນວ່າ ສະມັດຖະພາບ ຂອງການອອກແຮງງານໄດ້ມີການ ເພີ່ມທະວີ ຂຶ້ນ ດັ່ງນັ້ນມັນຈຶ່ງຮັບປະກັນ ໃຫ້ອັດຕາສ່ວນເພີ່ມທະວີ ຂອງ ການຜະລິດ ທາງຊຸດສາທະກຳສູງຂຶ້ນ ๗๕%, ຮັບປະກັນອັດຕາ ສ່ວນເພີ່ມທະວີຂອງການຜະລິດທາງກະສິກຳໃຫ້ສູງຂຶ້ນ ๑๐๐% ແລະໃນການກໍ່ສ້າງ ອັດຕາສ່ວນເພີ່ມທະວີຂອງວຽກງານ ກໍ່ ສ້າງ ແລະ ຕິດຕັ້ງອຸປະກອນ ສູງຂຶ້ນ ๗๕%. ຄຸນນະພາບຂອງ ຜະລິດຕະພັນ ໄດ້ຖືກປັບປຸງໃຫ້ດີກ່ວາເກົ່າ.

ໄດ້ເກີດມີບາດກ້າວໃໝ່ອັນໃຫຍ່ຫລວງ ໃນການແກ້ໄຂບັນ ດາໜ້າທີ່ ທາງດ້ານສັງຄົມ. ໃນໄລຍະຫ້າປີໄດ້ມີການແບ່ງປັນ ທຶນຮອນອອກຈາກລາຍໄດ້ແຫ່ງຊາດເປັນຈຳນວນ ๗๗๔ ຮູບ ຫລາຍກ່ວາໃນໄລຍະແຜນການຫ້າປີເທ່ອທີ ๗ ເພ່ອ ຮັບໃຊ້ ການຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ. ໄດ້ມີການ

ຕອບສະໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານວັດຖຸແລະ ຈິດໃຈ ຂອງຊາວໂຊວຽດ ຢ່າງຄົບຖ້ວນກ່ວາເກົ່າ ແລະໄດ້ມີ ການປັບປຸງເງື່ອນໄຂໃນການອອກແຮງງານ ແລະ ຊີວິດ ປະ ຈຳວັນຂອງພວກເຂົາເຈົ້າ ໃຫ້ດີກ່ວາເກົ່າ.

ລາຍໄດ້ຕົວຈິງຄິດສະເລ່ຍຕໍ່ຫົວຄົນ ໄດ້ເພີ່ມທະວີຂຶ້ນ ໑໒% ເງິນເດືອນພ້ານກາງຂອງກຳມະກອນ ແລະ ພາລະກອນ ໄດ້ ເພີ່ມຂຶ້ນເກືອບ ໑໕% ແລະ ຄ່າແຮງງານຂອງຊາວນາ ລວມ ໝູ່ ກໍໄດ້ເພີ່ມຂຶ້ນ ໘%.

ໄດ້ເພີ່ມທະວີຄ່າແຮງງານ ຂອງພວກກຳມະກອນ ບາງປະ ເພດ ໃນຂະແໜງການຫລອມເຫລັກ ແລະ ໂລຫະສີ, ໃນຂະ ແໜງການຂຸດຄົ້ນຖ່ານຫີນ, ຂຸດຄົ້ນຫີນແຜ່ນ, ຂຸດສາຫະກຳ ຕ່ຳ ແຜ່ນ, ໃນການກໍ່ສ້າງ, ການກະສິກຳ ແລະ ການຂົນສົ່ງ ທາງ ລົດໄຟ. ການປະຕິບັດມາດຕະການທາງດ້ານສັງຄົມ ຢູ່ໃນຂອບ ເຂດກ້ວາງຂວາງ ໄດ້ສຳເລັດຜົນ ເຊັ່ນ ການເພີ່ມທະວີ ອັດ ຕາເງິນເດືອນ ແລະ ເງິນເດືອນອີງຕາມໜ້າທີ່ໃຫ້ແກ່ຜູ້ອອກ ແຮງງານ ໃນບັນດາຂະແໜງການທີ່ບໍ່ພະລິດວັດຖຸ ແລະ ດັ່ງ ນັ້ນ ກຳມະກອນ ແລະ ພາລະກອນຈຳນວນ ໕໑ ລ້ານຄົນ ກໍ ໄດ້ຮັບຄ່າແຮງງານສູງຂຶ້ນ.

ໃນໄລຍະຫ້າປີ ກອງທຶນຂອງສັງຄົມສຳລັບການຊົມໃຊ້ໄດ້ມີ ເຖິງ ໕໘ກ ຕ້ຽບ, ໂດຍອີງໃສ່ກອງທຶນດັ່ງກ່າວນັ້ນ ໄດ້ມີການ ປະຕິບັດນະໂຍບາຍສຶກສາ ໂດຍບໍ່ໄດ້ເສຍຄ່າຈ້າງ, ການບໍລິ ການທາງດ້ານສາທາລະນະສຸກ, ການຮັບປະກັນທາງດ້ານວັດຖຸ

ໃຫ້ແກ່ຄົນເຖົ້າແກ່ ແລະ ມາດຕະການອື່ນໆທາງດ້ານສັງຄົມ. ຍ້ອນກອງທຶນດ່ວງກ່າວນັ້ນ ເງິນບຳລຸງ ແລະ ເງິນນະໂຍບາຍ ຕ່າງໆ ສຳລັບຄົນຜູ້ຫນຶ່ງ ໃນປີ ໑໙໘໐ ໄດ້ເພີ່ມຂຶ້ນຮອດ๔๗๘ ຮູບ, ສ່ວນວ່າໃນປີ ໑໙๗๔ ໄດ້ແຕ່ ๗๔๔ ຮູບ.

ເງື່ອນໄຂທາງດ້ານວັດຖຸ ແລະ ຊີວິດປະຈຳວັນຂອງບຸກຄົນ ທີ່ໄດ້ເຂົ້າຮ່ວມໃນມະຫາສົງຄາມປ້ອງກັນປົຕຸພູມ, ກໍຄືການ ຮັບປະກັນເບ້ຍບຳນານ ໃຫ້ແກ່ພວກຊາວນາລອມຫມູ່ ແລະພະນັກ ງານປະເພດໃດປະເພດຫນຶ່ງ ໃນຂະແຫນງການ ເສດຖະກິດ ແຫ່ງຊາດ ໄດ້ຮັບການປັບປຸງໃຫ້ດີກ່ວາເກົ່າ. ຢູ່ໃນຂົງເຂດສາ ທາລະນະສຸກ ງົບປະມານການໃຊ້ຈ່າຍສຳລັບອັດຕາກຳ ແລະ ອັດຕາເບີກຈ່າຍຢຸກຢາປ້ອພະຍາດ ກໍໄດ້ເພີ່ມທະວີຂຶ້ນ. ຢູ່ໃນ ລະບົບສຶກສາແບບສາມັນໄດ້ມີການເບີກຈ່າຍປຶ້ມຮຽນໃຫ້ແກ່ນັກ ຮຽນຮອດຊັ້ນປະຖົມ ຄືແຕ່ຫ້ອງ ๑ ຫາຫ້ອງ ๔ ໂດຍບໍ່ຄິດຄ່າ. ນອກຈາກນັ້ນ ຍັງມີການດຳເນີນມາດຕະການອື່ນໆ ທາງດ້ານ ສັງຄົມອີກ.

ການບໍລິໂພກສະບຽງອາຫານ ແລະ ອຸປໂພສິນຄ້າ ອຸປະກອນ ອື່ນໆ ກໍໄດ້ເພີ່ມທະວີຂຶ້ນ. ຂົງເຂດການບໍລິການ ໄດ້ຮັບ ການ ເສີມຂະຫຍາຍໃນຂັ້ນຕ່ຳໄປ. ການຈຳລະຈອນການຄ້າຂາຍ ຍ່ອຍ ໄດ້ເພີ່ມທະວີຂຶ້ນ ๘๔%, ຈຳນວນລະບົບບໍລິການປະຊາຊົນກໍໄດ້ ເພີ່ມຕື່ມຂຶ້ນ ๔๗%.

ໄດ້ມີການດຳເນີນການກໍ່ສ້າງເຮືອນຊານຢ່າງກ້ວາງຂວາງ. ໄດ້ມີການແບ່ງປັນທຶນພື້ນຖານຈຳນວນ ๗๓, ๘ ຕຣູບ ເພື່ອຮັບ

ໃຊ້ວຽກງານອັນມີຊ່ຽງຫລາຍກ່ວາຈຳນວນທີ່ໄດ້ຄາດຄະເນໄວ້ຢູ່ ໃນແຜນການຫ້າປີ. ໃນໄລຍະຫ້າປີ ໄດ້ມີການກໍ່ສ້າງ ເຮືອນ ອານທີ່ມີເນື້ອທີ່ລວມຍອດ ๕๒๐ ລ້ານແມດມົນທົນ. ປະຊາຊົນ ຫລາຍກ່ວາ ๕๐ ລ້ານຄົນ ໄດ້ປັບປຸງສະພາບບ່ອນຢູ່ ຂອງຕົນ ໃຫ້ດີກ່ວາເກົ່າ. ປະຈຸບັນນີ້ ປະຊາຊົນໃນຕົວເມືອງ ປະມານ ๗๐% ຄຳລັງຊົວິດຢູ່ໃນຫ້ອງຊຸດ.

ໄດ້ມີຄວາມກ້າວໜ້າໃນດ້ານການສຶກສາ, ວັດທະນະທຳ, ສາທາລະນະສຸກ, ການະສຶກສາ ແລະ ກິລາ. ໄດ້ສ້າງ ເງື່ອນ ໄຂອຳນວຍຄວາມສະດວກ ໃຫ້ແກ່ການພັກຜ່ອນຂອງປະຊາຊົນ ດີກ່ວາເກົ່າ.

ກິລາໂອລິມປິກ ລະດູຮ້ອນ ຄັ້ງທີXXIIທີ່ຖືກຈັດຕັ້ງຂຶ້ນເປັນ ເທື່ອທຳອິດຢູ່ໃນປະເທດສັງຄົມນິຍົມ ໄດ້ດຳເນີນໄປຢ່າງມີຜົນ ສຳເລັດເປັນຢ່າງດີ.

ໄດ້ປະຕິບັດລະບົບສຶກສາສາມັນຂັ້ນຮຸດົມແບບບັງຄັບ ໃຫ້ແກ່ ຊາວໜຸ່ມ. ການກໍ່ສ້າງພະນັກງານກໍໄດ້ມີການເປີດກວ້າງອອກ. ຊາວໜຸ່ມຍິງຊາຍຈຳນວນ ๑๘ ລ້ານ ๕ ແສນຄົນ ໄດ້ຮຽນວິ ຊາສະເພາະ ຢູ່ໃນໂຮງຮຽນການຊ່າງຊັ້ນຕົ້ນ. ໄດ້ມີ ການກໍ່ ສ້າງພະນັກງານຊ່ຽວຊານຈຳນວນ ๑๐ ລ້ານຄົນ ຢູ່ໃນສະຖາ ບັນການສຶກສາຊັ້ນສູງ ແລະ ຊັ້ນກາງ.

ຈຳນວນແພດຊັ້ນສູງ ໄດ້ເພີ່ມຂຶ້ນແຕ່ ๗๓๔๐๐๐ ຄົນ ໃນປີ ๑๙๓๕ ຮອດ ๑ ລ້ານຄົນໃນປີ ๑๙๗๐. ຈຳນວນຕຽງນອນປ່ວຍ ຢູ່ໃນໂຮງໝໍ ຮັບໃຊ້ຈຳນວນພົນລະເມືອງ ๑๐ ພັນຄົນໃດ

ໄດ້ເພີ່ມຂຶ້ນຈາກ ๑๑๒ ເປັນ ๑๘๕ ຕຽງ. ຕາຫນ່ວຍເຮືອນ ພັກຜ່ອນສົມທົບການປິ່ນປົວ, ເຮືອນພັກແຮມ, ໂຮງແຮມພັກຜ່ອນ ໂຮງຮຽນອະນຸບານ, ຄ້າຍພັກຜ່ອນສຳລັບເຍົາວະຊົນ ຄໍແດງ, ສະໂມສອນເຍົາວະຊົນຄໍແດງ ແລະ ນັກຮຽນທົ່ວໄປ ກໍ ໄດ້ມີ ການເປີດກ້ວາງຂະຫຍາຍຕົວອອກຕື່ມ.

ໄດ້ມີການດຳເນີນບັນດາມາດຕະການ ທີ່ແນໃສ່ ປົກປັກຮັກ ສາສະພາບແວດລ້ອມ, ນຳໃຊ້ ແລະ ບູລະນະຮັກສາຊັບພະຍາ ກອນທຳມະຊາດ ຢ່າງຖືກຕ້ອງເໝາະສົມ. ການລົງທຶນຮັບໃຊ້ ວຽກງານດັ່ງກ່າວ ໄດ້ເພີ່ມຫະວ້ຳ ๑,๕ ເທ່ົາ.

ການຮ່ວມມືກັບບັນດາປະເທດສັງຄົມນິຍົມອ້າຍນ້ອງໄດ້ເພີ່ມ ຂຶ້ນຕື່ມໃນຫລາຍດ້ານ. ໄດ້ມີການສືບຕໍ່ປະຕິບັດ ໃຫ້ສຳເລັດຜົນ ໂຄງການຄົບຊຸດ ໃນໄລຍະຍາວແຫ່ງການສົມຮ່ວມສັງຄົມນິຍົມ ທາງດ້ານເສດຖະກິດລະຫວ່າງບັນດາປະເທດທີ່ເປັນພາຄີຂອງ ສະພາຊ່ວຍເຫລືອຊຶ່ງກັນແລະກັນ ທາງດ້ານເສດຖະກິດ. ໄດ້ມີ ການເປີດກ້ວາງສາຍພົວພັນ ທາງດ້ານເສດຖະກິດ ກັບບັນດາ ປະເທດ ທີ່ພວມພັດທະນາ ແລະ ບັນດາປະເທດນາຍທຶນ.

ຜົນສຳເລັດໃນການເສີມຂະຫຍາຍເສດຖະກິດແລະໃນການ ແກ້ໄຂບັນດາຫນ້າທີ່ ທາງດ້ານສັງຄົມ ອາດຈະ ຫນັກແຫນ້ນ ກ່ວາເກົ່າ ຖ້າຫາກວ່າໄດ້ມີການຫມູນໃຊ້ທ່າດີເລີດ ຂອງການ ດຳເນີນເສດຖະກິດ ແບບມີແຜນການ ຢ່າງຄົບຖ້ວນກ່ວາເກົ່າ, ໄດ້ມີການຫມູນໃຊ້ຄວາມອາດສາມາດບົ່ມຊ້ອນຂອງການຜະລິດ ຢ່າງຕັ້ງຫນ້າກ່ວາເກົ່າ ແລະ ຖ້າຫາກວ່າ ໄດ້ມີການຕໍ່ສູ້ຢ່າງ

ສູ້ຊົນກ່ວາເກົ່າ ຕ້ານກັບຂໍ້ບົກພ່ອງ. ມັນບໍ່ແມ່ນຫມົດທຸກ ຂະ-ແຫນງການ ແລະ ວິສາຫະກິດ ທີ່ໄດ້ປະຕິບັດແຜນການ ທີ່ໄດ້ວາງໄວ້ ຢ່າງມີຜົນສໍາເລັດ. ການຫລຸດຜ່ອນບໍ່ໃຫ້ມີເສດເຫລືອ ແລະ ການສູນເສຍໂລຫະ ແລະ ວັດຖຸເຊື້ອໄຟໄດ້ຖືກປະຕິບັດ ຢ່າງຊັກຊ້າ, ໄດ້ມີການນໍາໃຊ້ຊັບພະຍາກອນສໍາຮອງ ຢູ່ໃນລະ ດັບອັນອ່ອນໂຍນທີ່ສຸດ. ພວກເຮົາຍັງບໍ່ທັນສາມາດຫລີກເວັ້ນສະ ພາບການລົ້ງທຶນ ແບບກະແຈກກະຈາຍ, ໄດ້ມີການແກ່ຍາວກໍາ ນົດເວລາກໍ່ສ້າງ ແລະ ແກ່ຍາວການນໍາເອົາ ໂຮງຈັກໂຮງ ງານເຂົ້າສູ່ການຜະລິດ. ຢູ່ໃນການກະສິກໍາ ການນໍາໃຊ້ຊັບພະ ຍາກອນ ທີ່ໄດ້ຖືກແບ່ງປັນໃຫ້ນັ້ນ ບໍ່ທັນມີປະສິດທິພາບ ພຽງພໍ ເທື່ອ. ພວກເຮົາບໍ່ທັນໄດ້ສາມາດລົບລ້າງຂໍ້ຂາດຕົກບົກພ່ອງ ຢູ່ ໃນອຸຕສາຫະກໍາການຂົນສົ່ງ ດ້ວຍທາງລົດໄຟ. ໄດ້ເກີດມີຄວາມ ຫຍຸ້ງຍາກໃນການຜະລິດສະບຽງອາຫານ ແລະ ສິນຄ້າອຸດສາ ຫະກໍາບາງຢ່າງ, ກ່ຽວກັບການກໍ່ສ້າງເຮືອນຊານ ແລະລະບົບ ບໍລິການ ໃຫ້ແກ່ປະຊາຊົນ.

ການແກ້ໄຂໜ້າທີ່ ທາງດ້ານເສດຖະກິດ ແລະ ສັງຄົມສະ ເພາະບາງອັນ ໄດ້ມີຄວາມສັບສົນ ຍ້ອນວ່າ ບໍ່ຊັບພະຍາກອນ ບ່ອນເກົ່າ ຫລາຍແຫ່ງ ນັບທັງບໍ່ຂະຫນາດໃຫຍ່ກໍໄດ້ຖືກຂຸດຄົ້ນ ຈົນຫມົດແລ້ວ, ຍ້ອນວ່າສູນກາງຕົ້ນຕໍຂອງອຸດສາຫະກໍາການຂຸດ ຄົ້ນແຮ່ຈ່ານ ໄດ້ເຄື່ອນຍ້າຍໄປ ທາງທິດຕາເວັນອອກແລະທິດ ເຫນືອ ແລະຍ້ອນວ່າ ໃນປີ ໑໙໗໗, ໑໙໗໙ ແລະ ໑໙໘໐ ເງື່ອນໄຂດິນຟ້າອາກາດກໍບໍ່ໄດ້ເຫມາະສົມໃຫ້ແກ່ການກະສິກໍາ.

ໃນການຍົກສູງປະສິດທິພາບຂອງການຜະລິດ ກໍຄື ໃນການ
ເພີ່ມທະວີສະມັດຖະພາບ ຂອງການອອກແຮງງານພວກເຮົາບໍ່
ໄດ້ສາມາດແກ້ໄຂໜ້າທີ່ວຽກງານ ຄົ່ງໄດ້ຄາດຄະເນ ໄວ້ຢູ
ໃນແຜນການ.ລະບົບກົງຈັກລຸ້ມຄອງ ແລະ ວາງແຜນ,ບັນດາ
ວິທີການດຳເນີນການເຄື່ອງໄຫວເສດຖະກິດ,ລະດັບ ຂອງລະ
ບຽບວິໄນ ໃນການອອກແຮງງານ ແລະ ໃນການປະຕິບັດມະ
ຕິຄຳສັ່ງ ຍັງບໍ່ທັນຕອບສະໜອງ ກັບຄວາມຮຽກຮ້ອງ ຕ້ອງ
ການຂອງວຽກງານໃນປະຈຸບັນ.ອັນນີ້ ໄດ້ສ້າງ ຄວາມຫຍຸ້ງ
ຍາກອັ້ນ ໃຫ້ແກ່ການຫັນປ່ຽນເສດຖະກິດແຫ່ງຊາດໃຫ້ກ້າວໄປ
ຕາມເສັ້ນທາງຂະຫຍາຍຕົວ ແບບທະວີສູນ.

ໃນເວລາດຽວກັນນັ້ນ ໂດຍທົ່ວໄປແລ້ວ ສະຫລຸບຜົນ ຂອງ
ໄລຍະຫ້າປີ ທີ່ຜ່ານມາ ໄດ້ຢັ້ງຢືນໃຫ້ເຫັນວ່າ ປະເທດຊາດ
ຂອງພວກເຮົາ ໄດ້ມີບາດກ້າວໄປໜ້າ ຢູ່ໃນທຸກດ້ານ ແຫ່ງ
ການຂະຫຍາຍຕົວ ທາງດ້ານເສດຖະກິດ ແລະ ສັງຄົມ.ແຜນ
ການຫ້າປີ ເທື່ອທີ່ສິບ ຈະມີຖານະບົດບາດ ອັນສຳຄັນ ຢູ່ໃນ
ປະຫວັດສາດ ແຫ່ງພາລະກິດອັນພິລະອາດຫານຂອງປະຊາຊົນ
ໂຊວຽດ.

ສະຫະພາບໂຊວຽດໄດ້ກ້າວເຂົ້າສູ່ ຊຸມປີ ໙໐ ໂດຍມີເຫງົ້າ
ພະລັງແຮງ ອັນມະຫາສານທາງດ້ານເສດຖະກິດ ແລະວິທະ-
ຍາສາດເຕັກນິກ ແລະ ມີຖັນແຖວພະນັກງານ ທີ່ມີຄວາມຊຳນິ
ຊຳນານ ໃນລະດັບສູງ. ການປະຕິບັດໜ້າທີ່ວຽກງານ ອັນ
ໃຫຍ່ຫລວງ ໃນການເສີມຂະຫຍາຍປະເທດຊາດ ທາງດ້ານ

ເສດຖະກິດ ແລະ ສັງຄົມໃຫ້ສຳເລັດຜົນດີ ເປັນບ່ອນອີງເພື່ອ
ກ້າວຂຶ້ນ ແກ້ໄຂໜ້າທີ່ໆໃຫຍ່ຫລວງກ່ວາ ຄັ້ງ.

II

ໜ້າທີ່ຕົ້ນຕໍ ໃນການເສີມຂະຫຍາຍປະເທດຊາດ

ທາງດ້ານເສດຖະກິດແລະສັງຄົມ

ສຳລັບ ປີ ໑໙໗໑-໑໙໗໕

ແລະສຳລັບໄລຍະຮອດປີ ໑໙໙໐

ທົດສະວັດທີ່ໄດ້ອຽນມາເຖິງນີ້ ແມ່ນໄລຍະໃໝ່ ອັນ ໃຫຍ່ ຫລວງ ໃນການກໍ່ສ້າງພື້ນຖານທາງດ້ານວັດຖຸ ແລະ ເຕັກນິກ ຂອງລະບອບກອມມູນິດ, ໃນການເສີມຂະຫຍາຍ ການພົວພັນ ທາງດ້ານສັງຄົມ ແລະ ໃນການກໍ່ສ້າງຄົນໃໝ່. ໃນໄລຍະອັນ ນີ້ ພວກເຮົາຈະຕ້ອງຮັບປະກັນ ໃຫ້ມີການນຳໃຊ້ ຄວາມອາດ ສາມາດ ແລະ ທ່າດີເລີດ ຂອງສັງຄົມນິຍົມສຸກງອມ ຢ່າງຄົບ ຖ້ວນກ່ວາເກົ່າ, ແລະຮັບປະກັນເຮັດໃຫ້ຄວາມຮັ່ງມີ ທາງດ້ານ ວັດຖຸ ແລະ ຈິດໃຈກໍ່ເຕົ້າພະລັງ ທາງດ້ານວິທະຍາສາດ-ເຕັກນິກຂອງມັນ ໄດ້ຮັບການເພີ່ມທະວີຂຶ້ນຢ່າງຫລວງຫລາຍ. ພື້ນຖານທາງດ້ານສັງຄົມຂອງ ສ.ສ.ສ.ຊ.-ພັນທະພາບ ອັນ ບໍ່ມີໃຜຈະມາມ້າງເພທຳລາຍໄດ້ ລະຫວ່າງຊາວກຳມະກອນ, ຊາວນາ ແລະ ປັນຍາຊົນ ຈະໄດ້ຮັບການປັບປຸງ ໃຫ້ ແໜ້ນ ແຟ້ນກ່ວາເກົ່າ, ມິດຕະພາບລະຫວ່າງບັນດາປະຊາຊາດ ກໍຈະ ຖືກປັບປຸງ ໃຫ້ມີຄວາມເຂັ້ມແຂງຂຶ້ນຕື່ມ.

ໃນຊຸມປີ ໒o ພັກກອມມູນິດ ຈະສືບຕໍ່ປະຕິບັດຢ່າງສະເໝີຕົ້ນສະເໝີປາຍຍຸດທະສາດທາງດ້ານເສດຖະກິດຂອງຕົນ ຊຶ່ງມີລັດຖປະສົງອັນສູງສົ່ງ ທີ່ແນໃສ່ຍົກລະດັບຊີວິດ ການເປັນຢູ່ຂອງປະຊາຊົນ ທາງດ້ານວັດຖຸ ແລະ ວັດທະນະທຳໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ, ສ້າງເງື່ອນໄຂອັນດີເລີດກ່ອາເກົ່າເພື່ອເສີມຂະຫຍາຍບຸກຄະລິກລັກສະນະຢ່າງຮອບດ້ານ ບົ່ມພົນຖານການສືບຕໍ່ຍົກສູງປະສິດທິພາບ ຂອງການຜະລິດທັງໝົດ ຂອງສັງຄົມ, ການເພີ່ມທະວີສະມັດຖະພາບ ຂອງການອອກແຮງງານ, ການເຕີມໃຫ່ຍ່ຂະຫຍາຍຕົວຂອງຄວາມຕ້ຽງໜ້າຫ້າວຫັນ ທາງດ້ານສັງຄົມ ແລະ ການອອກແຮງງານ ຂອງຊາວໂຊວຽດ.

ຈາກນັ້ນ, ໃນທົດສະວັດນັ້ ຈະຕ້ອງຮັບປະກັນເຮັດໃຫ້ສັງຄົມມີຄວາມກ້າວໜ້າທາງສັງຄົມໄປເລື່ອຍໆ, ປະຕິບັດໃຫ້ ສຳເລັດໂຄງການອັນກ້ວ້າງຂວ້າງ ທີ່ແນໃສ່ຍົກສະໜັດດີພາບຂອງປະຊາຊົນ ໃຫ້ສູງຂຶ້ນຕື່ມ.

ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນຢ່າງຄົບຖ້ວນກ່ອາເກົ່າ ໃນດ້ານສະບຽງອາຫານ ແບບຕ່າງໆ ແລະມີຄຸນນະພາບສູງ, ໃນດ້ານສິນຄ້າອຸດສາຫະກຳແລະເຄື່ອງບຳລຸງວັດທະນະທຳຮັບໃຊ້ ແລະ ປັບປຸງຊີວິດປະຈຳວັນ ແລະ ເຄື່ອງອຸປະໂພກຮັບໃຊ້ພາຍໃນຄອບຄົວກໍດີທາງດ້ານບໍລິການ.

ປັບປຸງລະດັບຊີວິດການເປັນຢູ່ ຂອງປະຊາຊົນ ເຊັ່ນປັບປຸງທີ່ຢູ່ ແລະ ລະບົບບໍລິການທາງດ້ານວັດທະນະທຳປະຈຳວັນໃຫ້ດີກ່ອາເກົ່າ, ໃນສ່ວນໃຫ່ຍ່ໃຫ້ກ້າວໄປເຖິງການຮັບປະກັນ ໃຫ້

ແຕ່ລະຄອບຄົວ ມີຫ້ອງຊຸດສະເພາະຂອງໃຜລາວ, ເສີມຂະ-ຫຍາຍການບໍລິການສາທາລະນະ ຢູ່ໃນເຫດສະບານ,ການອົບ-ສົ່ງ,ການບູລະນະຕົວເມືອງ ແລະ ຊຸມນະບົດໃຫ້ມີໃບໜ້ານັບ-ມື ນັບຈົບງາມຂຶ້ນຕື່ມ.

ດຳເນີນການຄັດສ້າງອັນເລີກເຊິ່ງ ຢູ່ໃນຂົງເຂດ ທີ່ສຳຄັນ ກ່ວາໜູ່ ຢູ່ໃນການເຄື່ອນໄຫວຂອງຄົນທັງຫລາຍ ຄື ໃນການ ອອກແຮງງານ,ປັບປຸງເງື່ອນໄຂອອກແຮງງານໃຫ້ດີກ່ວາເກົ່າ ແລະ ເຮັດໃຫ້ມັນເບົາບາງຂຶ້ນຕື່ມ,ຮັບປະກັນໃຫ້ມີຄວາມອາດ ສາມາດອັນກ້ວາງຂວາງ ເພື່ອດຳເນີນວຽກງານທີ່ມີສະມັດຖະ ພາບອັນສູງ ແລະ ດຳເນີນວຽກງານປະດິດຄິດສ້າງ,ກ້າວຂຶ້ນ ຢ່າງຄັດເດ່ຮ ເທິງເສັ້ນທາງລົບລ້າງຄວາມແຕກຕ່າງ ພື້ນ-ຖານ ລະຫ່ວ່າງການອອກແຮງງານທາງມັນສະໝອງກັບການ ອອກແຮງງານທາງຮ່າງກາຍ,ແລະ ຫັນປ່ຽນ ການອອກແຮງ ງານກະສິກຳ ໃຫ້ກ້າຍມາເປັນການອອກແຮງງານ ຊຸດສາຫະ ກຳ ປະເພດໜຶ່ງ.

ດຳເນີນນະໂຍບາຍສົ່ງເສີມ ໃຫ້ມີການເກີດລູກ ຢ່າງມີປະ ສິດທິພາບ,ປະກອບສ່ວນເຮັດໃຫ້ຄອບຄົວໃນຖານະເປັນ ຈຸລັນ ອັນໜຶ່ງທີ່ສຳຄັນກ່ວາໜູ່ ຢູ່ໃນສັງຄົມສັງຄົມນິຍົມ ນັບມື້ນັບ ມີ ຄວາມແໜ້ນແກ່ນ ແລະ ປະກອບສ່ວນສ້າງເງື່ອນໄຂ ອັນ ດີ ເລີດກ່ວາໜູ່ ເພື່ອຮັບປະກັນໃຫ້ແມ່ຍິງ ທີ່ເປັນມານດາຫຸກຄົນ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າຫ້າວຫັນ ຢູ່ໃນການເຄື່ອນໄຫວອອກ ແຮງງານ ແລະ ໃນສັງຄົມ,ປັບປຸງໃຫ້ດີກ່ວາເກົ່າການບົວລະ

ບັດຖືແລ ນຳພວກເດັກນ້ອຍ ແລະບຸກຄົນຜູ້ທີ່ບໍ່ມີຄວາມສາມາດ ອອກແຮງງານ,ປະຕິບັດລະບົບມາດຕະການ ທີ່ແນໃສ່ເຮັດໃຫ້ ຄົນທົ່ງຫລາຍມີອາຍຸຫມັ້ນຍືນ ແລະ ເພີ່ມທະວີ ຄວາມຕ້ອງຫນ້າ ທ້າວຫັນ ຂອງພວກເຂົາເຈົ້າ ໃນການອອກແຮງງານ ກໍຄືປັບ ປຸງສຸຂະພາບຂອງພວກເຂົາເຈົ້າ ໃຫ້ເຂັ້ມແຂງແຮງກ້າ.

ເປີດກ້ວາງຄວາມອາດສາມາດ ເພື່ອເຮັດໃຫ້ຄົນທົ່ງຫລາຍ ມີຊີວິດຈິດໃຈ ຢູ່ໃນຄວາມກົມກຽວ,ເຮັດໃຫ້ປະຊາຊົນທົ່ງໝາຍ ໄດ້ຊາບຊຶມເຖິງຄຸນຄ່າ ຂອງວັດທະນະທຳທຸກຢ່າງ,ຮັບປະກັນ ໃຫ້ມີການເພີ່ມທະວີການສຶກສາ ແລະ ວັດທະນະທຳ,ເຮັດໃຫ້ ປະຊາຊົນທົ່ງຫລາຍ ໄດ້ຮັບການອົບຮົມໃຫ້ມີຄຸນສົມບັດ, ແລະ ເພື່ອເສີມຂະຫຍາຍການປະພຶດຕົນແບບກອມມູນິດ ຕໍ່ການອອກ ແຮງງານ ແລະ ຊັບສົມທີ່ເປັນກຳມະສິດຂອງສັງຄົມ.

ນຳໃຊ້ໂມງເວລາເຮັດວຽກ ຢ່າງຖືກຕ້ອງເຫມາະສົມກ່ວາ ເກົ່າ,ຫລຸດຜ່ອນການໃຊ້ໂມງເວລາເຮັດວຽກທີ່ບໍ່ຈຳເປັນຜະ ລິດ ແລະ ຫລຸດຜ່ອນການເສຍຫາຍໂມງເວລາເຮັດວຽກ,ເພີ່ມ ໂມງເວລາຫວ່າງ ໃຫ້ແກ່ຜູ້ອອກແຮງງານ ບົນພື້ນຖານ ແຫ່ງ ການເສີມຂະຫຍາຍຂົງເຂດຂອງການບໍລິການ,ການຜ່ອນຄາຍ ເຮັດໃຫ້ວຽກບ້ານການເຮືອນເບົາບາງລົງຕື່ມ,ການປັບປຸງຮູບ ການ ແລະ ການຈັດຕັ້ງເວລາພັກຜ່ອນ ໃຫ້ດີຂຶ້ນຕື່ມ ໂດຍສະ ເພາະແມ່ນຂອງພວກຊາວຫນຸ່ມ.

ຄ່ອຍໆລຶບລ້າງຄວາມແຕກຕ່າງພື້ນຖານລະຫວ່າງຕົວເມືອງ ກັບຊົນນະບົດ,ປັບປຸງເງື່ອນໄຂຊີວິດການເປັນຢູ່ຂອງປະຊາຊົນ

ຢູ່ຫມົດທຸກສາທາລະນະລັດ ແລະ ເຂດແຄ້ວພາຍໃນປະເທດ ໃຫ້ດີກ່ວາເກົ່າ.

ປະກອບສ່ວນເຂົ້າ ໃນການພັດທະນາບັນດາຊົນຊາດ ຊົນ-ເຜົ່າໃນ ສ.ສ.ສ.ຢ.ຢ່າງຮອບດ້ານ,ໃນການເຮັດໃຫ້ ຊົນ-ຊາດ ແລະ ຊົນເຜົ່າຫຍັບເຂົ້າມ໋ກັນ,ໃນການເພີ່ມທະວີຄວາມ ເປັນອັນຫນຶ່ງອັນດຽວກັນ ທາງດ້ານສັງຄົມ ແລະ ໃນການປັບ ປຸງຄວາມສາມັກຄີເປັນເອກະພາບກັນ ທາງດ້ານແນວຄິດແລະ ການເມືອງ ຂອງປະຊາຊົນໂຊວຽດໃນຖານະເປັນ ຄອບຄົວ ໃຫມ່ ທາງປະຫວັດສາດ.

ຮັບປະກັນເຮັດໃຫ້ສັງຄົມ ມີຄວາມກ້າວຫນ້າທາງດ້ານເສດ ຖະກິດໃນຂັ້ນຕ໋ໍ່ໄປ,ເຮັດໃຫ້ພົ້ນຖານທາງດ້ານວັດຖຸ ແລະເຕັກ ນິກ ມີການຍົກຫນ້າຢ່າງເລິກເຊິ່ງ ທາງດ້ານວຸມນະພາບ ປົ້ນ ສ້ພົ້ນຖານການເສີມຂະຫຍາຍຄວາມກ້າວຫນ້າທາງດ້ານວິທະຍາ ສາດ-ເຕັກນິກ ຢ່າງເລັ່ງລັດ,ການຂະຫຍາຍທະວີສຸມການຜະ ລິດຂອງສັງຄົມ ແລະ ການຍົກສູງປະສິດທິພາບ ຂອງການຜະ ລິດ.

ປະຕິບັດການເສີມຂະຫຍາຍເສດຖະກິດຂອງ ສ.ສ.ສ.ຢ. ຢ່າງສະຫມ໋ໍ່າສະເຫມີ ແລະ ຢ່າງສົມດຸນໃນຖານະເປັນລະບົບ ຄົບຊຸດເອກະພາບ ຂອງເສດຖະກິດແຫ່ງຊາດ, ປະຕິບັດເຮັດ ໃຫ້ທຸກຂະແຫນງການ ຂອງເສດຖະກິດແຫ່ງຊາດ ແລະ ການ ເຄື່ອນໄຫວເສດຖະກິດ ຂອງບັນດາສາທາລະນະລັດ ແຫ່ງສະ ຫະພາບ ມີການເຕີບໃຫຍ່ຂະຫຍາຍຕົວ ຢ່າງສົມສ່ວນ. ແຕ່ມ

ໄປເຖິງປີ ໑໙໙໐ ເພີ່ມທະວີລາຍໄດ້ແຫ່ງຊາດ ທີ່ຖືກ ນຳໃຊ້ ເຂົ້າໃນການຊຸມໃຊ້ ແລະ ການສະສົມຕ່ຳສຸດ ໑,໔ ເທື່ອ.

ເຊີດຊູລະບົບການຈັດຕັ້ງການອອກແຮງງານແລະ ການຜະ ລິດຂອງສັງຄົມນິຍົມ ສູ່ລະດັບໃໝ່ທີ່ສູງກ່ວາເກົ່າ; ສຸມກຳລັງ-ແຮງ ແລະ ຊັບພະຍາກອນເຂົ້າສູ່ການແກ້ໄຂບັນດາຫນ້າທີ່ອັນ ຕົ້ນຕໍ ຂອງເສດຖະກິດແຫ່ງຊາດ,ຮັບປະກັນວາງແລະປະຕິບັດ ໃຫ້ສຳເລັດເປັນຂັ້ນໆ ບັນດາໂຄງການຄົບຊຸດທີ່ມີທິດເລັ່ງ ໃສ່ ບັນຫາທີ່ສຳຄັນກ່ວາຫມູ່ ທາງດ້ານສັງຄົມ ແລະ ເສດຖະກິດ, ກ່ອນອື່ນຫມົດລະແມ່ນໂຄງການສະບຽງອາຫານ, ໂຄງການ ເສີມຂະຫຍາຍການຜະລິດສິນຄ້າໃຊ້ສອຍປະຈຳວັນແລະການບໍ ລິການ, ໂຄງການຫລຸດຜ່ອນການນຳໃຊ້ການອອກແຮງ ງານ ດ້ວຍມື, ໂຄງການເພີ່ມທະວີການກໍ່ສ້າງກົນຈັກ,ພະລັງງານໄຟ ຟ້າ ແລະ ທຸກປະເພດການຂົນສົ່ງ, ໂຄງການນຳເອົາ ເຄມີ ເຂົ້າສູ່ເສດຖະກິດແຫ່ງຊາດ ກໍຄືໂຄງການຂະຫນາດໃຫຍ່ອື່ນໆ.

ປະຕິບັດໃຫ້ເກີດຄວາມຄືບຫນ້າອັນກ້າວຫນ້າ ຢູ່ໃນໂຄງປະ ກອບເສດຖະກິດແຫ່ງຊາດ,ປັບປຸງອັດຕາສ່ວນ ລະຫວ່າງ ຂະ ແຫນງການ ແລະ ອັດຕາສ່ວນພາຍໃນຂະແຫນງການໃຫ້ດີຂຶ້ນ ກ່ວາເກົ່າ;ສືບຕໍ່ຊຸກຍູ້ ໃຫ້ບັນດາຂະແຫນງການທີ່ຕັດສິນຊີ້ຂາດ ຄວາມກ້າວຫນ້າ ທາງດ້ານວິທະຍາສາດ-ເຕັກນິກໃຫ້ມີການ-ຂະຫຍາຍຕົວກ້າວໄປກ່ອນຫມູ່,ສືບຕໍ່ສ້າງຕັ້ງລະບົບການຜະລິດ ຄົບຊຸດຂະຫນາດໃຫຍ່ ຢູ່ກັບທ້ອງຖິ່ນ;ຮັບປະກັນເຮັດໃຫ້ກຸ່ມສຳ ພັນກະສິກຳ-ອຸດສາຫະກຳ ໄດ້ຮັບການຂະຫຍາຍຕົວຢ່າງເຕັມ

ສ່ວນ;ຮັບປະກັນເຮັດໃຫ້ການຜະລິດເຄື່ອງຊຸ່ມໃຊ້ກໍ່ຂະແໜງ ການໃນໂຄງລ່າງ ຮັບໃຊ້ການຜະລິດ ແລະ ຊ່ວຍປະຈຳ ວັນ ຢູ່ໃນສັງຄົມ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວຢ່າງເລັ່ງລັດ.

ຮັບປະກັນໃຫ້ມີການນຳໃຊ້ຊັບພະຍາກອນທຳມະຊາດ ທາງ ດ້ານວັດຖຸ ແລະ ແຮງງານ ຢ່າງມີປະສິດທິພາບ ແລະຖືເອົາ ອັນນ້ ເປັນອົງການຕັດສິນໃຈຂາດ ແລະ ເປັນຜົນສັກສິດ ກ່ວາ ໝູ່ ເພື່ອທະວີຄູນຄວາມຮັ່ງມີຂອງຊາດແລະເພື່ອເພີ່ມ ທະວີ ການສະສົມສັງຄົມນິຍົມ ແລະ ຊັບພະຍາກອນສຳລັບ ການຊຸ່ມ ໃຊ້ ຢ່າງວ່ອງໄວ;ເອົາໃຈໃສ່ເປັນພິເສດ ຕໍ່ການຍົກສູງ ສະ ມັດຖະພາບ ຂອງການອອກແຮງງານ,ຍົກສູງ ສະມັດຖະພາບ ຂອງທຶນຄົງທີ່ ທີ່ຢູ່ໜຸກຂະແໜງການ ຂອງເສດຖະກິດ ແຫ່ງ ຊາດ ແລະ ຫລຸດຜ່ອນການຊຸ່ມໃຊ້ວັດຖຸປະກອນໃນການຜະລິດ.

ກ້າວໄປເຖິງການປະສົມປະສານແບບກາຍອິນຊີ ລະຫວ່າງ ຜົນສຳເລັດ ຂອງການປະຕິວັດທາງດ້ານວິທະຍາສາດ- ເຕັກ ນິກ ກັບບັນດາທ່າດີເລີດ ຂອງລະບົບເສດຖະກິດສັງຄົມນິຍົມ. ເພີ່ມທະວີບົດບາດ ຂອງວິທະຍາສາດ ໃນການສ້າງຕັ້ງ ພົມ ຖານ ທາງດ້ານວັດຖຸ ແລະ ເຕັກນິກຂອງລະບອບ ກອມມູນິດ ແລະໃນການແກ້ໄຂບັນດາບັນຫາ ອັນເດັ່ງຮ້ອນ ໃນ ປະຈຸບັນ ທາງດ້ານສັງຄົມ;ດຳເນີນ ຢ່າງສະເໝີຕົ້ນສະເໝີປາຍ ນະ ໂຍບາຍເອກະພາບ ທາງດ້ານເຕັກນິກ,ການສືບຕໍ່ນຳເອົາໄຟ ຟ້າເຂົ້າສູ່ເສດຖະກິດແຫ່ງຊາດ,ປະຕິບັດການຫັນປ່ຽນ ໄປສູ່ ການນຳໃຊ້ລະບົບເຄື່ອງຈັກ ແລະ ລະບົບການອັດ ເຕັກໂນ

ໂລຢີ ອັນມີປະສິດທິພາບສູງ ຢ່າງກວ້າງຂວາງທີ່ສຸດ, ລະບົບ ດັ່ງກ່າວນັ້ນ ຕ້ອງຮັບປະກັນການນຳເອົາກົນຈັກຄົບຊຸດແລະລະ ບົບການຜະລິດແບບອັດຕະໂນມັດເຂົ້າສູ່ການຜະລິດແລະຮັບປະ ກັນການປະກອບອຸປະກອນເຕັກນິກຄົ້ນໃຫມ່ ໃຫ້ແກ່ ບັນດາຂະ ແໜງການຕົ້ນຕໍ ຂອງການຜະລິດ.

ຍົກສູງປະສິດທິພາບ ຂອງການກໍ່ສ້າງພົ້ນຖານ, ປະຕິບັດ ຢ່າງສະເໝີຕົ້ນສະເໝີປາຍການຫັນປ່ຽນການກໍ່ສ້າງມາເປັນ ອຸດສາຫະກຳ, ຮັບປະກັນໃຫ້ມີການປັບປຸງທົ່ນຄົງທີ່ທາງດ້ານລຸມ ນະພາບ, ຮັບປະກັນເຮັດໃຫ້ໂຮງຈັກໂຮງງານທີ່ຫາກໍ ກໍ່ສ້າງ ໃຫມ່ໄດ້ມີການຜະລິດ ຢ່າງໄວວາກ່ວາເກົ່າ, ຊຸກຍູ້ການ ນະວັສາຫະກິດ ທີ່ມີການເຄື່ອນໄຫວໃນປະຈຸບັນຢ່າງເລິ່ງລັດ.

ປັບປຸງໃຫ້ດີກ່ວາເກົ່າ ການສັບຊ້ອນກຳລັງແຫ່ງການຜະລິດ ການແບ່ງເຂດການຜະລິດ, ເພີ່ມທະວີການປະກອບສ່ວນ ຂອງ ແຕ່ລະສາຫາລະນະລັດ ແຫ່ງສະຫະພາບ ເຂົ້າໃນການແກ້ໄຂ ໜ້າທີ່ລວມຂອງຊາດ, ຮັບປະກັນການນຳເອົາ ຊັບພະຍາກອນ ວັດຖຸ ເຊື້ອໄຟ ແລະ ພະລັງງານ ໄຟຟ້າ ກໍ່ຄື ວັດຖຸດິບ ແຮ່ ຈ່ານ ໃນເຂດ ພາກຕາເວັນອອກ ແລະ ພາກ ເໜືອ ເຂົ້າ ຮ່ວມໃນຮອບໜຸນວຽນເສດຖະກິດ ຢ່າງມີປະສິດທິພາບ, ດຳ ເນີນຢ່າງສະເໝີຕົ້ນສະເໝີປາຍນະໂຍບາຍ ທີ່ແນໃສ່ຈຳກັດ ການເຕີບໃຫຍ່ຂະຫຍາຍຕົວ ຂອງຕົວເມືອງໃຫຍ່, ເສີມຂະ-ຫຍາຍຕົວເມືອງຂະໜາດນ້ອຍ ແລະ ຂະໜາດກາງ ໂດຍ ການສ້າງຕັ້ງໂຮງຈັກໂຮງງານລະດັບສູງ ແລະ ມີສະມັດຖະ

ພາບສູງໃນການຜະລິດ,ພ້ອມດ້ວຍສາຂາອຸດສາຫະກຳ ໂຮງ-ງານ ແລະ ສະຫະບໍລິສັດໄວ້ໃນຕົວເມືອງດ່ົງກ່າວ. ວາງຮູບຮ່າງລວມໃນການຈັດວາງກຳລັງ ແຫ່ງການຜະລິດຂອງ ສ.ສ.ສ.ຊ.ໃນສະເພາະໜ້າ.

ເປີດກ້ວາງ ແລະ ປັບປຸງສາຍພົວພັນທາງດ້ານເສດຖະກິດ, ວິທະຍາສາດ-ເຕັກນິກ,ວັດທະນະທຳ ແລະ ການ ທ່ອງທ່ຽວ ກັບປະເທດນອກ ແລະ ກ່ອນອື່ນໝົດກັບບັນດາປະເທດໃນວົງ ສາຄະນາຍາດສັງຄົມນິຍົມ ໃຫ້ດີຂຶ້ນຕື່ມ.

ຍົກສູງລະດັບ ການນຳພາເສດຖະກິດ, ປະສານ ສົມທົບ ຢ່າງເຕັມສ່ວນກ່ອາເກ່ົາລະຫວ່າງການຊຸ້ມຄອງລວມສູນ ກັບ ຄວາມເປັນເອກະລາດ ທາງດ້ານການເຄື່ອນໄຫວເສດຖະກິດ ແລະ ຫົວຄິດປະດິດສ້າງ ຂອງບັນດາວິສາຫະກິດ, ສະຫະບໍລິ ສັດ.ຢູ່ທ່ົວທຸກແຫ່ງນຳໃຊ້ວິທີການເຄື່ອນໄຫວເສດຖະກິດສັງຄົມ ນິຍົມ ອັນກ້າວໜ້າ,ດຳເນີນຢ່າງເດັດຂາດຫລັກການ ອັນ ບໍ່ ໜັກແໜ້ນແຫ່ງການກໍ່ສ້າງເສດຖະກິດ ໃຫ້ໄດ້ຮັບ ຫມາກຜົນ ອັນສູງສຸດ ເພື່ອຜົນປະໂຫຍດຂອງສັງຄົມ ໂດຍການ ໃຊ້ຈ່າຍ ໜ້ອຍທ່ີສຸດ.ເພ່ີມທະວີບົດບາດ ຂອງບັນດາສະພາ ໂຊວຽດ ຂອງຜູ້ແທນປະຊາຊົນ,ຂອງອົງການກຳມະບານແລະໜູ່ຄະນະ ຊາວຜູ້ອອກແຮງງານ ໃນການແກ້ໄຂບັນຫາດ່ົງກ່າວນ້ັ.

<u>ແຜນການຫ້າປ</u>ີເທ<u>ື່ອທ</u>ີ ๑๑ ຈະກາຍເປັນໄລຍະ ທ່ີມ<u></u>ີຄວາມ ຮັບຜິດຊອບສູງ ໃນການປະຕິບັດບັນດາໜ້າທ່ີ່ໃນໄລຍະ ຍາວ ນານ ໃຫ້ສຳເລັດຜົນ. ແຜນການດ່ົງກ່າວ ມ<u></u>ີໜ້າທ<u></u>ີ່ສ<u></u>ືບ<u></u>ຕ<u></u>ໍ່ແມ<u></u>ອ

ທາງເສີມຂະຫຍາຍປະເທດຊາດທາງດ້ານສັງຄົມແລະເສດຖະ
ກິດແລະບັນດາທິດນຳຍຸດທະສາດຂອງພັກໃນຊຸມປີ ໒໐ ທີ່ສອດ
ຄ່ອງກັບຈຸດພິເສດຂອງໄລຍະຫ້າປີທີ່ຈະມາເຖິງໃນມໍ່ມ້ໃຫ້ເກີດ
ເປັນຈິງຢ່າງສະເໜີຕົ້ນສະເໜີປາຍ.

ໜ້າທີ່ຕົ້ນຕໍຂອງແຜນການຫ້າປີເທື່ອທີ ๑๑ ແມ່ນຮັບປະກັນ
ເຮັດໃຫ້ສະຫວັດດີພາບຂອງຊາວໂຊວຽດ ມີການເຕີບໃຫຍ່ຂະ
ຫຍາຍຕົວ ໃນຂັ້ນຕ່ໍໄປ ບົນພື້ນຖານການຂະຫຍາຍເສດຖະກິດ
ແຫ່ງຊາດ ຢ່າງມີຄວາມໝັ້ນທ່ຽງ ແລະ ກ້າວໄປໜ້າ ຢ່-
ລ້ອຍໆ, ການຊຸກຍູ້ໃຫ້ຄວາມກ້າວໜ້າທາງດ້ານວິທະຍາສາດ
ແລະ ເຕັກນິກ ມີການຂະຫຍາຍຕົວຢ່າງເລັ່ງລັດ ແລະ ການ
ຫັນປ່ຽນເສດຖະກິດ ໄປສູ່ເສັ້ນທາງຂະຫຍາຍຕົວແບບທະວີສູນ,
ການນຳໃຊ້ເຫງ້າພະລັງການຜະລິດ ຂອງປະເທດຊາດ ຢ່າງ
ຖືກຕ້ອງເໝາະສົມກ່ວາເກົ່າ, ການປະຢັດຊັບພະຍາກອນ ທຸກ
ຊະນິດ ຢ່າງສູດຊຶດ ແລະ ການປັບປຸງຄຸນນະພາບ ຂອງວຽກ
ງານ ໃຫ້ດີກ່ວາເກົ່າ.

ໂດຍອີງໃສ່ຍຸດທະສາດທາງດ້ານເສດຖະກິດຂອງ ພ.ກ.
ສ.ຊ.ແລະ ໜ້າທີ່ຕົ້ນຕໍຂອງແຜນການຫ້າປີເທື່ອທີ ๑๑ :

๑. ປະຕິບັດລະບົບມາດຕະການ ທີ່ແນໃສ່ຍົກສູງ ສະຫວັດດີ
ພາບຂອງປະຊາຊົນຂັ້ນ ຢ່າງສະເໜີຕົ້ນສະເໜີປາຍ. ເອົາ
ໃຈໃສ່ເປັນອັນດັບໜຶ່ງ ຕໍ່ເພີ່ມທະວີງການຕອບສະໜອງ ປະ
ຊາຊົນ ກ່ຽວກັບສິນຄ້າໃຊ້ສອຍປະຈຳວັນ, ກ່ຽວກັບເງື່ອນໄຂ
ທາງດ້ານເຮືອນຊານບ່ອນພັກເຊົາ, ກ່ຽວກັບການບໍລິການທາງ

ດ້ານສາທາລະນະສຸກ, ກ່ຽວກັບເງື່ອນໄຂ ໃນການອອກແຮງ-ງານ ໃຫ້ດີກ່ວາເກົ່າ, ແລະການແກ້ໄຂບັນຫາອື່ນໆ ທີ່ຮົບ-ຮ້ອນທາງດ້ານສັງຄົມ. ເອົາການປັບປຸງ ເງື່ອນໄຂຊີວິດການ ເປັນຢູ່ ຂອງຊາວຜູ້ອອກແຮງງານ ຕິດພັນຢ່າງສະໜິດແໜ້ນ ກັບການປະຕິບັດໜ້າທີ່ການຜະລິດຕ່າງໆ.

ເພີ່ມທະວີປະສິດທິພາບຂອງລະບົບການຊຸກຍູ້ ທາງດ້ານວັດ ຖຸ ແລະຈິດໃຈ, ເພີ່ມທະວີບົດບາດຊຸກຍູ້ຂອງຄ່າແຮງງານຂັ້ນ ແມ່ນບໍ່ເກີດແຫ່ງລາຍໄດ້ຕົ້ນຕໍ ຂອງພົນລະເມືອງ. ຮັບປະກັນ ເຮັດໃຫ້ສະມັດຖະພາບ ຂອງການອອກແຮງງານ ມີການເຕີບ ໃຫຍ່ຂະຫຍາຍຕົວກ້າວໄປກ່ອນ ຖ້າທຽບໃສ່ການເຕີບໃຫຍ່ຂະ ຫຍາຍຕົວ ຂອງຄ່າແຮງງານໃນບັນດາຂະແໜງການ ຂອງ ເສດຖະກິດແຫ່ງຊາດ, ໃນບັນດາສະຫະບໍລິສັດ ແລະ ວິສາ ຫະກິດ.

ເພີ່ມທະວີກອງທຶນຂອງສັງຄົມ ສຳລັບການຊຸມໃຊ້, ເສີມຂະ ຫຍາຍການປະກັນໄພ ທາງດ້ານສັງຄົມ, ການສຶກສາ ແລະວັດ ທະນະທຳ, ປັບປຸງໃຫ້ດີກ່ວາເກົ່າ ເງື່ອນໄຂທາງດ້ານ ຊີວິດ ການເປັນຢູ່ ຂອງຄອບຄົວ ທີ່ມີລູກຕ້ຳ ແລະ ທາງດ້ານການ ພັກຜ່ອນ ຂອງພົນລະເມືອງ.

ສະແດງຄວາມເອົາໃຈໃສ່ ຕໍ່ ການປັບປຸງເງື່ອນໄຂ ການ ອອກແຮງງານ ແລະ ຊີວິດປະຈຳວັນ ຂອງ ຊາວຜູ້ອອກແຮງ ງານ, ຕໍ່ການເຮັດໃຫ້ ມີສະພາບແວດລ້ອມ ຝຶກຝົນ ໄປ ດ້ວຍຈິດໃຈ ປະດິດຄິດສ້າງ ແລະ ບັນຍາກາດ ອັນປອດໃສ

ທາງດ້ານຈິດຈະສາດແລະ ສັງຄົມຢູ່ໃນແຕ່ລະຫມູ່ຄະນະ ຂອງ ຊາວຜູ້ອອກແຮງງານ, ຕໍ່ການຍົກສູງລະດັບຄວາມຊຳນິຊຳນານ ທາງດ້ານວິຊາຊີບ, ຕໍ່ການຕອບສະຫນອງຄວາມຮຽກຮ້ອງຕ້ອງ ການ ທາງດ້ານວັດທະນະທຳ, ຕໍ່ການເສີມຂະຫຍາຍການສຶກ ສາ ແລະ ກິລາຢູ່ໃນບັນດາສະຫະບໍລິສັດ, ວິສາຫະກິດ, ກົມ ກອງ ແລະ ອົງການຈັດຕັ້ງຕ່າງໆ.

ອຳນວຍຄວາມສະດວກຢ່າງສຸດວິດ ເພື່ອເຮັດໃຫ້ຄວາມຕັ້ງ ຫນ້າຫ້າວຫັນ ຂອງຊາວໂຊວຽດໃນດ້ານສັງຄົມ ແລະ ການ ອອກແຮງງານ ມີການເພີ່ມທະວີຂຶ້ນ ແລະ ເປີດກ້ວາງ ຂະ-ບວນການແຂ່ງຂັນສັງຄົມນິຍົມ.

<u>ຄ. ຮັບປະກັນເຮັດໃຫ້ເສດຖະກິດມີການເຕີບໃຫຍ່ຂະຫຍາຍ ຕົວ ຢ່າງບໍ່ຢຸດຢັ້ງ, ປັບປຸງໂຄງປະກອບ ຂອງການຜະລິດຂອງ ສັງຄົມ ໃຫ້ດີຂຶ້ນຕື່ມ.</u>

ເພີ່ມທະວີລາຍໄດ້ແຫ່ງຊາດ ທີ່ໃຊ້ເຂົ້າໃນການອຸ້ມໃຊ້ແລະ ການສະສົມຂຶ້ນ ๑๒-๔๐%.

ເສີມຂະຫຍາຍດ້ວຍຈັງຫວະອັນວ່ອງໄວລົ້ນຫມູ່ ບັນດາ ຂະ ແຫນງການ ທີ່ຮັບປະກັນເຮັດໃຫ້ເສດຖະກິດແຫ່ງຊາດມີຄວາມ ກ້າວຫນ້າອັນນຳຫນ້າ ທາງດ້ານໂຄງປະກອບ, ແລະຮັບປະກັນ ການຟື້ນຟູການຜະລິດຄືນໃຫມ່ ໃນຂອບເຂດອັນກວ້ຶງຂວາງ ຢ່ຶນ ຢ່າງມີຄວາມຫມັ້ນທ່ຽງ ແລະ ຢ່າງສົມດຸນ, ສືບຕໍ່ການປະກອບ ເຕັກນິກຄືນໃຫມ່ ໃຫ້ແກ່ບັນດາຂະແຫນງການ ທີ່ເປັນພື້ນຖານ ໃນຊຸດສາຫະກຳ-ຂະແຫນງການພະລັງງານໄຟຟ້າ, ຂະແຫນງ

ການຫລອມເຫລັກ,ຂະແໜງການກໍ່ສ້າງກົນຈັກ, ຂະແໜງ
ການເຄມີ ກໍ່ຄືການຂົນສົ່ງ ແລະ ການກໍ່ສ້າງ. ປັບປຸງໂຄງ
ປະກອບ ຂອງກຸ່ມສຳພັນວັດຖຸເຊື້ອໄຟ ແລະ ພະລັງງານ ໄຟ
ຟ້າ ແລະ ຂອງການຜະລິດ ວັດຖຸປະກອນກໍ່ສ້າງສຳເລັດ ຮູບ
ໃຫ້ດີຂຶ້ນຕື່ມ ບົນພື້ນຖານການເພີ່ມທະວີຜະລິດຕະພັນ ທີ່ທັນສະ
ໄໝ. ກ້າວໄປເຖິງ ບ່ອນໃຫ້ມີຄວາມກົມກຽວ ຫລາຍກວ່າ
ເກົ່າ ລະຫວ່າງການເສີມຂະຫຍາຍ ອຸດສາຫະກຳ ອຸດສົມວັດ
ຖຸດິບ ກັບ ອຸດສາຫະກຳປຸງແຕ່ງ, ຂະແໜງການ ຜະລິດ
ແລະ ຊຸມໃຊ້ອຸປະກອນການອອກແຮງງານ ແລະ ໃນນີ້ໃຫ້ຄົດ
ຄຳນຶງເຖິງ ການເປີດກ້ວາງ ການຮ່ວມມືສົ່ງເສີມນິຍົມ ສາກົນ
ແລະ ການລົງເລິກ ໃນການແບ່ງເຂດ ການຜະລິດ ຢ່າງສູດ
ຂົດ.

ຢູ່ໃນອຸດສາຫະກຳຕ້ອງຮັບປະກັນໃຫ້ການຜ່ະລິດໝວດ"B"
ມີການເຕີບໃຫຍ່ຂະຫຍາຍຕົວ ດ້ວຍຈັງຫວະອັນວ່ອງໄວ ກ່ວາ
ໝວດ "A".

ຄາດວາງໃຫ້ກຸ່ມສຳພັນກະສິກຳ-ອຸດສາຫະກຳ ແລະອຸດສາ
ຫະກຳຜະລິດສະບຽງອາຫານໄດ້ຮັບການເສີມຂະຫຍາຍ ຢ່າງ
ສູດຂົດ,ສອດຄ່ອງກັບການເຕີບໃຫຍ່ຂະຫຍາຍຕົວຢ່າງສົມສ່ວນ
ແລະຢ່າງສົມດຸນຂອງກະສິກຳ,ເຮັດໃຫ້ຂະແໜງການ ອຸດສາ
ຫະກຳ ທີ່ຮັບໃຊ້ການກະສິກຳ, ອຸດສາຫະກຳ ປຸງແຕ່ງ ອາ-
ຫານ ກໍ່ຄື ຂະແໜງການຜະລິດ ອື່ນໆ ທີ່ພົວພັນ ກັບການກະ
ກຽມ,ການເກັບມ້ຽນ,ການຂົນສົ່ງ ແລະ ການປຸງແຕ່ງຜະລິດ

ຕະພັນກະສິກຳນັ້ນ ມີການເຕີບໃຫຍ່ຂະຫຍາຍຕົວ. ໃນການກະ
ສິກຳ ໃຫ້ເນັ້ນຫນັກໃສ່ການແກ້ໄຂບັນຫາກ່ຽວກັບການເພີ່ມທະ
ວີການຜະລິດທັນຍະພືດ ແລະ ອາຫານສັດ, ການເສີມ ຂະ-
ຫຍາຍການລ້ຽງສັດ, ການຮັບປະກັນບໍ່ໃຫ້ຜະລິດຕະພັນກະສິກຳ
ມີການຕົກເຮ່ຽເສຍຫາຍ, ແລະການນຳເອົາຜະລິດຕະພັນ ດ່ຽ
ກ່າວ ໄປເຖິງຜູ້ຊົມໃຊ້ ຢູ່ໃນສະພາບການອັນດີເລີດ. ຈຸກຍູ້
ການຫັນປ່ຽນການຜະລິດກະສິກຳ ໄປສູ່ພົ້ນຖານ ຈຸດສາຫະກຳ
ແລະ ເຕັກໂນໂລຢີ ອັນກ້າວຫນ້າຢ່າງເລັ່ງລັດ.

ປະຕິບັດນັ້ນຄວາມຈຳເປັນທີ່ແມ່ໃສ່ປັບປຸງວຽກງານ ຂອງ
ທຸກປະເພດການຂົນສົ່ງໃຫ້ດີກ່ວາເກົ່າ, ກ່ອນອື່ນຫມົດແມ່ນການ
ຂົນສົ່ງ ທາງລົດໄຟ ແລະ ຮັບປະກັນເຮັດໃຫ້ທຸກປະເພດການ
ຂົນສົ່ງມີການຂະຫຍາຍຕົວໂດຍສອດຄ່ອງ ຢ່າງເຕັມສ່ວນ ກັບ
ຄວາມຮຽກຮ້ອງຕ້ອງການ ຂອງເສດຖະກິດແຫ່ງຊາດ ແລະ
ຂອງພົນລະເມືອງ.

ປັບປຸງເຮັດໃຫ້ລະບົບການສະຫນອງວັດຖຸແລະເຕັກນິກ ໃນ
ຂອບເຂດທົ່ວລັດ ມີຄວາມເຂັ້ມແຂງ ແລະ ຄົບຖ້ວນ, ເພີ່ມທະ
ວີບົດບາດ ແລະ ຄວາມຮັບຜິດຊອບຂອງມັນ ຕໍ່ການ ປະຢັດ
ແລະ ການນຳໃຊ້ຊັບພະຍາກອນວັດຖຸປະກອນ ຢ່າງຖືກຕ້ອງ
ເຫມາະສົມ ແລະ ຕໍ່ການສະຫນອງວັດຖຸດິບ, ວັດຖຸປະກອນ, ຊຸ
ປະກອນ ແລະເຄື່ອງອາໄຫລ່ໃຫ້ແກ່ເສດຖະກິດແຫ່ງຊາດຢ່າງ
ບໍ່ໃຫ້ຂາດຕົດຂາດຕໍ່.

ສຸມ ການລົງທຶນພົ້ນຖານ ໃສ່ ຂະແຫນງການຕົ້ນຕໍ, ກິດຈະ

ການອັນສຳຄັນກ່ວາໝູ່ທີ່ຈະຕ້ອງເລີ່ມຕົ້ນບໍລິການ ອັນໃດ ອັນ
ໜຶ່ງ, ແລະກ່ອນອື່ນໝົດແມ ໃສ່ການສ້າງຄົນໃໝ່ແລະການປະ
ກອບອຸປະກອນເຕັກນິກຄົນໃໝ່ໃຫ້ແກ່ບັນດາວິສາຫະກິດ ທີ່
ເຄື່ອນໄຫວໃນປະຈຸບັນ. ກໍ່ສ້າງໃຫ້ໄວ, ໃຫ້ປະຢັດແລະດ້ວຍລະ
ດັບເຕັກນິກອັນສູງ.

ຕ້ອງ ກ່ອນອື່ນໝົດກໍ່ສ້າງວິສາຫະກິດແຫ່ງໃໝ່ ຢູ່ໃນພະ
ແນກ ແລະ ຂະແໜງການຜະລິດທີ່ຮັບປະກັນຄວາມກ້າວໜ້າ
ຢູ່ໃນໂຄງປະກອບ ເສດຖະກິດກໍ່ຄື ຮັບປະ ກັນການນຳ ເອົາ
ຊັບພະຍາກອນວັດຖຸ ເຊື້ອໄຟ ແລະ ພະລັງງານ ໄຟຟ້າແລະ
ຊັບພະຍາກອນວັດຖຸດິບ ແຮ່ທ່າມ ໃນເຂດພາກຕາເວັນ ອອກ
ແລະ ພາກເໜືອຂອງປະເທດ ເຂົ້າຮ່ວມໃນຮອບໜຸນ ວຽນ
ເສດຖະກິດ ແຫ່ງຊາດ. ຕ້ອງຈຳກັດການກໍ່ສ້າງ ກິດຈະການ
ຜະລິດ ແຫ່ງໃໝ່ ຢູ່ໃນພາກເອີລົບ ຂອງປະເທດ ພວກ
ເຮົາ.

ປັບປຸງພົ້ນຖານທາງດ້ານວັດຖຸ-ເຕັກນິກຂອງການກໍ່ສ້າງພົ້ນ
ຖານໃຫ້ເຂັ້ມແຂງ, ປັບປຸງໃຫ້ດີກ່ວາເກົ່າອຽການປະກອບພະ
ນັກງານ ທີ່ມີຄວາມຊຳນິຊຳນານໃຫ້ແກ່ຂະແໜງການນັ້ນ, ກ້າວ
ໄປເຖິງບ່ອນເຮັດໃຫ້ຄວາມອາດສາມາດ ຂອງບັນດາອົງການ
ຈັດຕັ້ງຮັບເໝົາ ເໝາະສົມກັບປະລິມານອຽການທີ່ອົງການ
ດັ່ງກ່າວນັ້ ຮັບປະຕິບັດ.

ຕ້ອງພັດທະນາເສີມຂະຫຍາຍເສດຖະກິດ ແບບຄົບຊຸດຂອງ
ບັນດາສາທາລະນະລັດສະຫະພາບ ແລະ ເຂດເສດຖະກິດ ,

ປັບປຸງການແບ່ງເຂດເສດຖະກິດ ຢູ່ໃນລະບົບການຜະລິດຂອງ
ສັງຄົມໃຫ້ເລິກເຊິ່ງກ່ວາເກົ່າ.

ມ.ຍົກສູງປະສິດທິພາບ ຂອງການຜະລິດສັງຄົມ ຢ່າງສູ້ຊົນ
ບົ່ມພົນຖ່ານການຂະຫຍາຍເສດຖະກິດ ຢ່າງຮອບດ້ານແບບທະ
ວີສົມ,ປັບປຸງໃຫ້ດີກ່ວາເກົ່າ ຊຸມນະພາບ ຂອງຜະລິດຕະພັນ
ແລະ ຂອງການບໍລິການຢູ່ໃນຫມົດທຸກຂະແຫນງການ.

ຮັບປະກັນໃຫ້ມີການນຳໃຊ້ຊັບພະຍາກອນ ທາງດ້ານວັດຖຸ,
ແຮງງານ ແລະ ການເງິນ ຢ່າງຖືກຕ້ອງເຫມາະສົມກ່ວາຫມູ
ໂດຍເອົາອັນນີ້ມາເປັນເງື່ອນໄຂອັນສຳຄັນກ່ວາຫມູ່ໃນການປັບ
ປຸງເຮັດໃຫ້ເສດຖະກິດແຫ່ງຊາດ ມີການຂະຫຍາຍຕົວແບບສົມ
ຊຸມດີກ່ວາເກົ່າ,ໃນການສ້າງຄວາມອາດສາມາດບີ່ມຊ້ອມ ອັນ
ຈຳເປັນ ແລະ ໃນການໄດ້ຮັບຫມາກຜົນສຸດທ້າຍອັນສູງຄັ່ນ.

ເພີ່ມທະວີສະມັດຖະພາບ ຂອງການອອກແຮງງານຂອງສັງ
ຄົມຂ້ນ ໑ກ-ຄ໐% ແລະ ອີງໃສ່ອັນນີ້ ໃຫ້ລາຍໄດ້ແຫ່ງຊາດມີ
ອັດຕາສ່ວນເພີ່ມທະວີຂ້ນ ບ່ໃຫ້ຫລຸດ ໗ຄ-ຜ໐%.

ຕ້ອງເພີ່ມທະວີການປະກອບອຸປະກອນການອອກແຮງງານ,
ຢູ່ທ່ວທຸກແຫ່ງ ຕ້ອງຕິດຕັ້ງເຄື່ອງກົນຈັກ ແບບຄົບຊຸດແລະ ຂະ
ບວບການຜະລິດ ແບບອັດຕາໂນມັດ, ຫລຸດຜ່ອນຈຳນວນ ພົນ
ຜູ້ອອກແຮງງານ ທາງຮ່າງກາຍຢູ່ໃນທຸກ ຂະແຫນງການຢ່າງ
ບ່ຢຸດຢັ້ງ, ເປັນຕົ້ນ ຈຳນວນພົນ ຜູ້ທີ່ເຮັດວຽກງານສຳຮອງ.
ວາງມາດຕະການ ເພື່ອເຮັດໃຫ້ມີ ຄວາມສົມດຸນ ລະຫ່ວ່າງ
ຈຳນວນບ່ອນ ເຮັດວຽກທີ່ມີຢູ່ ແຕ່ກ່ອນ ແລະ ບ່ອນທີ່ເກີດຂ້ນ

ໃຫມ່ ກັບ ກຳ ລັງແຮງງານຄົນ. ສ້າງເງື່ອນໄຂ ເພື່ອຕອບ
ສະໜອງຄວາມຮຽກຮ້ອງຕ້ອງການ ຜູ້ຊ່ຽວຊານ ຂອງ ບັນ-
ດາ ວິສາຫະກິດທີ່ຈະລົງມືຜະລິດ ໂດຍສະເພາະຢູ່ໃນ ເຂດ
ສິບຣ ແລະ ພາກຕາເວັນອອກໄກ. ປັບປຸງການຈັດຈ້ຳ, ການ
ວາງອັດຕາຄ່າອອກແຮງງານ ແລະ ການວາງນະໂຍບາຍຊຸກ
ຍູ້ ການອອກແຮງງານໃຫ້ດີກ່ວາເກົ່າ. ນຳໃຊ້ການຈັດຕັ້ງການ
ອອກແຮງງານແບບວິທະຍາສາດແລະຍົກສູງປະສິດທິພາບຂອງ
ມັນຂຶ້ນຕື່ມ. ຍົກລະດັບຄຸນນະພາບຂອງຜະລິດຕະພັນທຸກຊະນິດທີ່
ອອກມາ ໃຫ້ສູງຂຶ້ນຕື່ມ, ເປີດກວ້າງເຮັດໃຫ້ສິນຄ້າມີຫລາຍຊະ
ນິດທີ່ໃຫມ່ຢູ່ເລື້ອຍໆ ໂດຍສອດຄ່ອງກັບຄວາມຮຽກຮ້ອງ ຕ້ອງ
ການໃນປະຈຸບັນ ຂອງການເສີມຂະຫຍາຍເສດຖະກິດ ແຫ່ງ
ຊາດ ແລະ ຂອງຄວາມກ້າວໜ້າທາງດ້ານ ວິທະຍາສາດ -
ເຕັກນິກ ກໍຄືສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ອັນທະວີ
ຄູນ ຂອງພົນລະເມືອງ. ເພີ່ມທະວີການຜະລິດສິນຄ້າ ຊະນິດ
ຄຸນນະພາບສູງ ຢ່າງບໍ່ຢຸດຢັ້ງ ຢູ່ໃນເຂດການຜະລິດທັງໝົດ.
ນຳໃຊ້ ຢ່າງຕັ້ງໜ້າລະບົບການບັນຊາ ແບບລົບຊຸດໃນ ການ
ກວດກາຄຸນນະພາບຂອງຜະລິດຕະພັນ.

ປະຕິບັດບັນດາມາດຕະການ ທີ່ແນໃສ່ຍົກສູງສະມັດຖະພາບ
ຂອງການລົງທຶນ ຢູ່ໃນບັນດາຂະແໜງການ ຂອງເສດຖະກິດ
ແຫ່ງຊາດ, ຢູ່ໃນສະຫະບໍລິສັດ ແລະ ວິສາຫະກິດ.

ນຳໃຊ້ກຳລັງແຮງຂອງການຜະລິດ ໃຫ້ຖືກຕ້ອງເໝາະສົມ
ກ່ວາເກົ່າ, ນຳໃຊ້ອຸປະກອນເຕັກນິກ ທີ່ມີສະມັດຖະພາບ ສູງ

ຢ່າງກ້ວ້າງຂວ້າງກ່ວ້າເກົ່ວ, ປັບປຸງໂຄງປະກອບ ໃຫ້ດີກ່ວ້າ ເກົ່ວ່ົ, ຕ້ອງສັບປ່ຽນທຶນຄົງທ່ົ ໄດ້ຮັບໃຊ້ມ້ວ່ແລ້ວນ້ັ້ນ ໃຫ້ ທັນກັບເວລ້ວ.

ຕ້ອງເອ້ົ້ວ່ໃຈໃສ່ເປັນພ່ົເສດຕ່ໍ້ກ້ວ່ນຫລຸດຜ່ອນກ້ໍານ້ົດເວລ້ວ ກ້ວ່ນຜະລ້ົດ ເພ່ົ່ອໃຫ້ໄດ້ຕ້ວ່ມກ້ໍາລ້ົງແຮງທ່ົ່ໄດ້ຄ້ວ່ດຄະເນໄວ້ ໃນໂຄງກ້ວ່ນແລະໃຫ້ຜ່ົນຕ້ວ່ມຕ້ວ່ເລ້ວກ້ວ່ນກ້ໍານ້ົດໝ້ວ່ຍດ້ວ່ນເຕັກ ນ້ົກແລະເສດຖະກ້ົດ ຂ້ວ່ງບ້ັນດ້ວ່ໂຮ້ວ່ງຈັກໂຮ້ວ່ງ້ວ່ກ ແລະກ້ົດ ຈະກ້ວ່ນທ່ົ່ດ້ໍາເນ້ົນ້ວ່ຽກ້ວ່ນແລ້ວ, ເອ້ົ້ວ່ໃຈໃສ່ຕ່ໍ້ກ້ວ່ນເພ່ົ່ມຜ່ົນ ທະວ້ົ້ວ່ຂ້ວ່ງແຮ້ວ່ງ້ວ່ກດ້ວ່ຍກ້ວ່ນຈ້ົດຜ່ຽນຕ່ໍ້ເພ່ົ່ອ້ວ່ງກ້ັນໃຫ້ເຄ່ົ່ອ້ວ່ງ-ຈັກແລະກ້ົນຈັກນ້ົປະສ້ົດທ້ົພ້ວ່ບສູ້ວ່ງກ່ວ້າໝູ່ແລະສັບປ່ຽນທ່ວ້ຍຊຸ ປະກອນເຕັກນ້ົກ ທ່ົ່ຫລ້ວ້ວ່ສະໄໝນ້ອກ ຢ່ວ້ງໄວ້ວ່.

ໝ້ົນໃຊ້ຢ່ວ້ງເຕ້ົມສ່ວ້ນກ່ວ້າເກົ່ວ ຜ່ົນສ້ໍາເລ້ົດ ແຫ່ວ້ງຄ້ວ່ວ້ມ ກ້ວ່ວ້ອໜ້ວ້ວ ທ້ວ້ວ້ງດ້ວ່ນວ້ົທະຍ້ວ້ວ້ສ້ວ້ວ-ເຕັກນ້ົກ ແລະ ຂ້ັ້ສະເໝ ໃນກ້ວ່ນອອກແບບອ້ັນຖ້ົກຕ້ອ້ວ້ງເໝ້ວ້ວ້ະສ້ົມ ແລະ ແນ້ວ່ໃສ່ ຫລຸດ ຜ່ອນກ້ວ່ນລ້ົ້ວ້ງທ້ຶນພ້ັ້ນຖ້ວ່ນ ເປັນຫ້ວ້ວໜ່ວ້ຍ.

ນ້ໍາໃຊ້ຊ້ັ້ບພະຍ້ວ້ວ້ກອນທ້ວ້ວ້ງດ້ວ່ນວ້ັດຖຸ ຢ່ວ້ງປະຢ້ັດມ້ັດທະຍ້ັດ. ໃນປ້ ໑໙໗໕ ຖ້ວ້ວ້ປຽບໃສ່ປ້ ໑໙໗໐, ຮ້ັບປະກ້ັນໃຫ້ມ້ ກ້ວ່ນປະ ຢ້ັດຊ້ັ້ບພະຍ້ວ້ວ້ກອນວ້ັດຖຸເຊ້ັ້ອໄຟ ແລະ ພະລ້ົ້ວ້ງ້ວ່ນໄຟຟ້ວ້ວ້ຢ່ໃນ ເສດຖະກ້ົດແຫ່ວ້ງຊ້ວ້ວ ເປັນຈ້ໍານ້ວ ໑໒໐-໑໓໐ ລ້ວ້ນໂຕນ ວ້ັດຖຸເຊ້ັ້ອໄຟ, ເຊ່ົ້ວ້ງໃນນ້ັ້ນ ໓໐ - ໗໐ ລ້ວ້ນໂຕນໃຫ້ໄດ້ມ້ວ ຈ້ວ້ກ ກ້ວ່ນປະຢ້ັດໃນກ້ວ່ນໃຊ້ຈ່ວ້ຍ; ຢ່ໃນ ຂະແໜ້ວ້ງ ກ້ວ່ນກ່ໍ ສ້ວ້ວ້ງ ກ້ົນຈັກ ແລະ ຊ່ຽນເຫລ້ັກຮ້ັບປະກ້ັນກ້ວ່ນປະຢ້ັດໃນກ້ວ່ນ

ໃຊ້ຈ່າຍ ສະເລ່ຍຜ້ານກາງ ແລ້ວ ຄ່ວງນ້ຳ: ແຜ່ນເຫລັກ ບໍ່ ໃຫ້ຕ່ຳ ກ່ວາ ໑໕-໔໐%, ທໍ່ເຫລັກ ໑໐-໑໔%, ແຜ່ນໂລ-ຫະສີ ໙-໑໑%; ຢູ່ໃນການກໍ່ສ້າງ ຮັບປະກັນການປະຢັດແຜ່ນ ເຫລັກ ແລະ ວັດຖຸອຸປະກອນໄມ້ ກ-໙%, ຊີມັງ ໕-ກ%.

ຕ້ອງສືບຕໍ່ ດຳເນີນວຽກງານ ທີ່ແນໃສ່ນຳເອົາຊັບພະຍາ-ກອນວັດຖຸ, ວັດຖຸເຊື້ອໄຟ ສຳຮອງ ແລະ ເສດເຫລືອຂອງຖ້ຳ ໃນຄອບຄົວ ກໍຄື ເສດເຫລືອ ອຸດສາຫະກຳ - ພະລັງ ງານ ເຂົ້າຮ່ວມ ໃນຮອບໝຸນວຽນ ເສດຖະກິດ ຢ່າງກ້ວາງຂວາງ ກ່ວາເກົ່າ. ເສີມຂະຫຍາຍພື້ນຖານວັດຖຸ ແລະເຕັກນິກຂອງ ບັນດາ ອົງການຈັດຕັ້ງ ທີ່ຮັບຜິດຊອບ ເກັບຊື້, ການປຸງແຕ່ງ ວັດຖຸດິບ ສຳຮອງ. ຕ້ອງຂະຫຍາຍ ການຜະລິດ ໃນອັນ ໃດ ອັນໜຶ່ງ ໂດຍສະເພາະ, ຍົກສູງ ແລະ ປັບປຸງຄຸນນະພາບ ມາດຕະຖານ ຂອງເຄື່ອງໝຸ້ນຫ໋ໍ ແລະ ວັດຖຸດິບສຳລັບ ເຮັດ ເຄື່ອງໝຸ້ນຫ໋ໍ. ປັບປຸງເຄື່ອງໝຸ້ນຫ໋ໍ ໃຫ້ດີກ່ວາເກົ່າ,ໃຫ້ ນຳ ໃຊ້ໄດ້ ຫລາຍເທື່ອ ແລະ ສິ່ງກັນຄືນໄດ້.

ເພີ່ມທະວີລະບົບການປະຢັດໃນການຜະລິດ, ໃນການບໍລິ ການ ແລະ ໃນການຊົມໃຊ້. ວາງແລະປະຕິບັດ ບັນດາມາດ ຕະການ ທີ່ແນໃສ່ລົບລ້າງບໍ່ໃຫ້ມີການຕົກຮົ່ຽເສຍຫາຍ ຢູ່ໃນ ອຸດສາຫະກຳ,ໃນການກໍ່ສ້າງ,ໃນການຂົນສົ່ງ, ໃນການກະສິ ກຳ ແລະ ໃນຂະແໜງການອື່ນໆ.ປັບປຸງຢ່າງສຸດຂີດ ລະບົບ ການເຄື່ອນໄຫວວິສາຫະກິດ ແບບກຸ້ມຕົນເອງ ແລະ ມີຜົນກຳ

ໄລ ຢູ່ໃນທຸກຕ່ອງໂສ້ ຂອງເສດຖະກິດ.

ຢູ່ໃນເສດຖະກິດແຫ່ງຊາດ, ເພີ່ມທະວີຈັງຫວະຄວາມໄວໃນ ການຫມຸນວຽນຂອມ ຄ-ນ ມ.

ຫລຸດຜ່ອນຕົ້ນທຶນການຜະລິດ ຂອງຜະລິດຕະພັນ ແລະການ ບໍລິການ. ເພີ່ມທະວີກຳໄລ ຢູ່ໃນອຸດສາຫະກຳແລະການກໍ່ສ້າງ ຂົນປະມານ ๑,ນ ເທ່ອ ແລະ ໃນມິຖຸນະເສດ ๑,ກ ເທ່ອ.

๔. <u>ຮັບປະກັນເຮັດໃຫ້ວິທະຍາສາດ-ເຕັກນິກ ມີຄວາມກ້າວ ຫນ້າຢ່າງເລັ່ງລັດ ໃນຂັ້ນຕໍ່ໄປ.</u>

ຢູ່ໃນທຸກຂະແຫນງການ ຂອງເສດຖະກິດແຫ່ງຊາດດຳເນີນ ຢ່າງສະເຫມີຕົ້ນສະເຫມີປາຍ ກ່ຽວກັບນະໂຍບາຍ ການປະ-ກອບອຸປະກອນເຕັກນິກຖຸນໃຫມ່ ໃຫ້ແກ່ການຜະລິດຢ່າງໄວວາ ກ່ວາເກົ່າ, ກ່ຽວກັບການປະດິດສ້າງ ແລະ ຜະລິດ ເຄື່ອງຈັກ ແລະ ອຸປະກອນທີ່ຊ່ວຍໃຫ້ປັບປຸງ ເງື່ອນໄຂ ການອອກ ແຮງ ງານໃຫ້ດີກ່ວາເກົ່າ, ຍົກສູງສະມັດຖະພາບຂອງການອອກແຮງ ງານຂົນຕົ້ນ ແລະ ປະຢັດຊັບພະຍາກອນທາງດ້ານວັດຖຸ. ເພີ່ມ ທະວີລະດັບເຕັກນິກ ຂອງຂະແຫນງການສຳຮອງ ແລະ ຂະ ແຫນງການທີ່ຮັບໃຊ້ການຜະລິດ.

ປະດິດສ້າງ ແລະ ນຳໃຊ້ອຸປະກອນເຕັກນິກ ແລະວັດຖຸປະ ກອນອັນໃຫມ່ ອ່ຽນທີ່ສຸດ ກໍ ເຕັກໂນໂລຊີຂັ້ນກ້າວຫນ້າເຂົ້າ ໃນການຜະລິດ. ຮັບປະກັນເພີ່ມທະວີການຜະລິດເຄື່ອງ ຈັກ ແລະ ເຄື່ອງກົນຈັກອັນໆ ທີ່ມີກຳລັງແຮງ ແລະ ມີປະສິດທິ - ພາບ ເປັນຫົວຫມ່ອຍສູງ, ການຜະລິດອຸປະກອນ ທີ່ປະຢັດໄດ້

ຫລາຍທີ່ສຸດ, ລະບົບເຄື່ອງຈັກ ປະເພດເລີ່ມ ສຳລັບ ປະ-ກອບ ເຂົ້າໃນການນຳເອົາກົນຈັກ ແລະ ອັດຕະໂນມັດ ເຂົ້າ ສູ່ການຜະລິດ ຢ່າງຄົບວຸດ.

ປັບປຸງຢ່າງຄ່ອຍເປັນຂັ້ນຕາມລຳດັບແລະເງື່ອນໄຂເຕັກ ນິກ ສຳລັບຜະລິດຕະພັນສຳເລັດຮູບ, ເຄື່ອງປະກອບເປັນອຸມ, ເຄື່ອງຫຸ້ມຫໍ່, ວັດຖຸປະກອນ, ວັດຖຸດິບ ແລະ ການບໍລິການ ໃຫ້ ສອດຄ່ອງ ກັບຄວາມຮຽກຮ້ອງຕ້ອງການຂອງຜູ້ຊົມໃຊ້.

ຍົກສູງປະສິດທິພາບຂອງການຄົ້ນຄ້ວາວິທະຍາສາດ, ຫລຸດ ຜ່ອນ ຢ່າງຫລວງຫລາຍກຳນົດເວລາ ໃນການນຳເອົາຜົນສຳ ເລັດທາງດ້ານວິທະຍາສາດ ແລະ ເຕັກນິກ ເຂົ້າໝູນໃຊ້ໃນ ການຜະລິດ. ປັບປຸງການປະສົມປະສານການເຄື່ອນໄຫວ ຂອງ ນັກວິທະຍາສາດ ໃຫ້ຄ່ອຍເປັນ, ຮັບປະກັນເຮັດໃຫ້ ການຄົ້ນຄ້ວາພົ້ນຖານມີການຂະຫຍາຍຕົວກ້າວໄປກ່ວາໜ່ວຍ ປັບປຸງປະສິດທິຜົນໃນການຄົ້ນຄ້ວາເພື່ອນຳມາໃຊ້ໃນພາກ ຕົວ ຈິງ. ປັບປຸງພົ້ນຖານທາງດ້ານວັດຖຸ ແລະເຕັກນິກຂອງສະຖາ ບັນ ແລະອົງການຈັດຕັ້ງຄົ້ນຄ້ວາວິທະຍາສາດ, ວາງແຜນ - ສຳຫລວດ ແລະ ອອກແບບໃຫ້ເຂັ້ມແຂງຂຶ້ນເປັນລຳດັບ.

<u>ຫ. ເພີ່ມທະວີການປົກປັກຮັກສາທຳມະຊາດ, ດິນຄອມຕອມ</u> ຫຍ້າ ແລະຊັບພະຍາກອນຢູ່ໃນດິນ, ອາກາດ, ແມ່ນ້ຳຫ້ວຍ ຕ່າງໆ, ສັດສາວາສິ່ງ ແລະ ພືດສາຊາດຕ່າງໆ. ຮັບປະກັນ ເຮັດໃຫ້ຊັບພະຍາກອນທຳມະຊາດຖືກນຳໃຊ້ ຢ່າງ ຖືກຕ້ອງ ເໝາະສົມ ແລະ ມີການບູລະນະຮັກສາຟື້ນຟູຄືນ.

ฝ. ปับปุงกามลุ้มลองใช้ดีขึ้นต่ำ และ ยกสูง ละดับกามเคื่อมไหวเสดถะกิด ปู่ในพุกต่องโส้ของเสดถะกิด, เพิ่มทะวีกามทันทีดไปสู่หมากพิมสุดท้ายอันดีเลิดในเสดถะกิดแห่งชาด.

เพิ่มทะวีละดับกามจัดตั้งของวยกงามในพุกขะแหนงกาม ของเสดถะกิดแห่งชาด และ เธ็ดใช้วยกงามดั่งก่าวเดิมแม่มแล่นสะดวก. ปับปุงวยกงามอางผม ใช้ดีก่อาเก่า ย่างสะหม่ำสะเหมิ, ธับปะกันเธ็ดใช้แผมกามบันดาไม้วัด และ มะโยบายจุกยู้ทางด้ามเสดถะกิดใช้มิดอามกินกรวกัน แบบกายะอินจิ, ปับปุงบันดา โดงปะกอบกามจัดตั้ง และ วิทีกามลุ้มลองใช้ดีขึ้นต่ำ.

เสิมขะหยายย่างสุดอิด หือดิดปะดิดสีาง, ดอามเอ็าการเอ็างาม, กามจอกล้ม หาบ่เกิดแห่งกาม เต็บ - ใหย่ ขะหยายต็อ ของกามผะลิด ย่างสะหลวย สะ - หลาด, ธับปะกันใช้มีละดับกามจัดตั้งและละบวบอิไมในกามปะติบัดมะติลำสั่งในละดับอันสูง ปู่ในแต่ละบ่อม ที่มีกามผะลิด.

เพิ่มทะวีดอามธับผิดจอบ ของบันดาผู้มำเสดถะกิดต่ำพาละหน้าที่ ของแผมกาม และ พาละหน้าที่ธับผิดจอบตาม ข้สันยา, ต่ำกามปะติบัด บันดาหลักกามเคื่อมไหวจอบตามข้ผูกพัน, ต่ำกามปะติบัดบันดาหลักกามเคื่อมไหวอิสาหะกิด แบบกุ้มตินเอง และ มีพิมกำไล ย่างเข้ม

ງວດ,ຕໍ່ການຮັບປະກັນເຮັດໃຫ້ການຜະລິດມີກຳໄລ,ຕໍ່ການໃຊ້ຈ່າຍກອງທຶນເງິນເດືອນ ແລະ ຕໍ່ການຊຸກຍູ້ຈົ່ງຫວະຄວາມໄວໃນການຈໍລະຈອນ ກອງທຶນຫມຸນວຽນ ຢ່າງເລັ່ງລັດ.ດຳເນີນການຕໍ່ສູ້ຢ່າງເດັດຂາດ ຕ້ານກັບປະກົດການແນວຄິດພາກສ່ວນ ແລະ ແນວຄິດທ້ອງຖິ່ນ,ຕ້ານກັບການຫລຸດຜ່ອນແຜນການ, ບໍ່ອະນຸຍາດປ່ອຍປະໃຫ້ມີການດັດແປງຫນ້າທີ່ກຳນົດຫມາຍ ຂອງແຜນການຢ່າງບໍ່ມີເຫດບໍ່ມີຜົນ.ຍົກສູງບົດບາດ ແລະຫົວຄິດປະດິດສ້າງຂອງບັນດາຫມູ່ຄະນະຊາວຜູ້ອອກແຮງງານໃນການລົ້ມຄອງ ແລະ ການວາງແຜນ,ໃນການສຶກສາອົບຮົມຊາວຜູ້ອອກແຮງງານ ໃຫ້ມີສະຕິຄວາມຕື່ນຕົວ ແລະ ມີຫົວຄິດປະດິດສ້າງຕໍ່ການອອກແຮງງານ ແລະ ໃຫ້ມີຄວາມຕ້ຽງຫນ້າຕ້າວຫັນ ອັນສູງທາງດ້ານສັງຄົມ ແລະ ໃນການຜະລິດ.

ກ.ຍົກສູງປະສິດທິພາບ ຂອງສາຍພົວພັນທາງດ້ານເສດຖະກິດພາຍນອກ.ຮັບປະກັນເຮັດໃຫ້ການສົມຮ່ວມສັງຄົມນິຍົມທາງດ້ານເສດຖະກິດ ກັບບັນດາປະເທດສະມາຊິກສະພາຊ່ວຍເຫຼືອຊຶ່ງກັນແລະກັນທາງດ້ານເສດຖະກິດໃຫ້ນັບມື້ນັບເລິກເຊິ່ງກ້ວາເກົ່າ.ເປີດກ້ວາງການຮ່ວມມືກັບບັນດາປະເທດ ທີ່ພວມພັດທະນາ ແລະ ເປີດກ້ວາງການຄ້າອັນມີຜົນດີຊຶ່ງກັນແລະກັນກັບບັນດາປະເທດນາຍທຶນ.

III

ການເສີມຂະຫຍາຍວິທະຍາສາດ ແລະການຊຸກຍູ້ຄວາມກ້າວໜ້າທາງດ້ານເຕັກນິກ ຢ່າງເລິ່ງລັດ

ໃນແຜນການ ຫ້າປີ ເທື່ອທີ ๑๑ ນີ້ ການເສີມຂະຫຍາຍວິທະຍາສາດ ແລະ ເຕັກນິກຍິ່ງ ຈະຕ້ອງຂົນກັບການແກ້ໄຂ - ໜ້າທີ່ ທາງດ້ານເສດຖະກິດ ແລະ ສັງຄົມ ຂອງສັງຄົມໂຊຸ ອຽດ, ການຫັນປ່ຽນເສດຖະກິດ ໃຫ້ໄປຕາມເສັ້ນທາງແຫ່ງ ການຂະຫຍາຍຕົວ ແບບທະວີສູນ, ການຍົກປະສິດທິພາບຂອງ ການຜະລິດຂອງສັງຄົມ ໃຫ້ສູງຂົ້ນ.

ຈາກນີ້ ຈະຕ້ອງ:

ຮັບປະກັນການວາງໂຄງການແລະການປະຕິບັດ ໂຄງການ ຄົບຊຸດກ່ຽວກັບຄວາມກ້າວໜ້າທາງດ້ານວິທະຍາສາດ- ເຕັກ ນິກ, ບັນດາໂຄງການທີ່ມີທິດເລັ່ງແມ ໃສ່ແກ້ໄຂບັນຫາອັນສຳຄັນ ກ່ວາໝູ່ ທາງດ້ານວິທະຍາສາດ-ເຕັກນິກ;

ຮັດແໜ້ນ ສາຍພົວພັນລະຫວ່າງວິທະຍາສາດ ກັບ ການ ຜະລິດ. ເພີ່ມທະວີ ຄວາມຮັບຜິດຊອບຂອງບັນດາ ກະຊວງ ແລະທະບວງກົມເພື່ອລະດັບຂອງການຄົ້ນຄ້ວາຢູ່ໃນສະຖາບັນວິ

ທະຍາສາດ, ເພື່ອການນຳໃຊ້ຫມາກຜົນ ຂອງການຄົ້ນຄ້ວາວິ
ທະຍາສາດ ທີ່ຂະຫຍາຍຕົວແລ້ວ ແລະ ເຕັກນິກໃຫມ່ ເຂົ້າສູ່
ການຜະລິດ ພາຍໃນໄລຍະ ອັນວ່ອງໄວ ທີ່ສຸດ. ຕ້ອງປັບປຸງ
ລະບົບທົດສອບຄຸນຄ່າ ທາງດ້ານເຕັກນິກ ແລະ ເສດຖະກິດ
ຂອງຜະລິດຕະພັນ ທີ່ພວມຢູ່ ໃນໄລຍະຄົ້ນຄ້ວາ ວາງ ແຜນ
ແລະທີ່ຜະລິດອອກມາແລ້ວໃຫ້ດີກ່ວາເກົ່າ, ເລີກເຊົາການຜະ-
ລິດເຄື່ອງທີ່ຫລ້າສະໄຫມຢ່າງທັນການ. ຫລຸດຜ່ອນການເສຍເວລາ
ໃນການປະຕິບັດ ສ້າງ ແລະ ໃນການນຳໃຊ້ອຸປະກອນເຕັກ-
ນິກ ອັນໃຫມ່ໃຫ້ຫລາຍໆ;

ເພີ່ມທະວີການຜະລິດເຄື່ອງແລະອຸປະກອນ ວັດແທກ ກວດ
ກາ, ພາຫະນະອັດຕາໂນມັດ, ຜະລິດທາດເຄມີແລະນ້ຳຢາປະ
ສົມ ເພື່ອດຳເນີນ ການຄົ້ນຄ້ວາວິທະຍາສາດ. ເປີດ ກ້ວາງ
ການນຳໃຊ້ ລະບົບອັດຕາໂນມັດ ເຂົ້າສູ່ ວຽກງານການວາງ
ແຜນ ແລະ ອອກແບບ ແລະ ວຽກງານຄົ້ນຄ້ວາວິທະຍາສາດ
ໂດຍມີການນຳໃຊ້ອຸປະກອນຄິດໄລ່ເອເລັກໂຕນິກ;

ກຳນົດແລະຫັນປ່ຽນທິດທາງ ໃນການຄົ້ນຄ້ວາ, ໂຄງປະ
ກອບການຈັດຕັ້ງ ຂອງບັນດາສະຖາບັນວິທະຍາສາດ ຢ່າງທັນ
ເວລາ ໂດຍສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການ
ປະຕິວັດວິທະຍາສາດ-ເຕັກນິກ. ເພີ່ມທະວີການເຮັດໃຫ້ ວິທະ
ຍາສາດ-ສັງຄົມ, ວິທະຍາສາດທຳມະຊາດ ແລະວິທະຍາສາດ
ເຕັກນິກ ມີຄວາມກົມກຽວກັນ;

ເພີ່ມທະວີປະສິດທິພາບໃນການນຳໃຊ້ເຫງົ້າພະລັງວິທະຍາ

ສາດ ຂອງບັນດາສະຖາບັນສຶກສາຊັ້ນສູງ ເພື່ອແກ້ໄຂ ບັນຫາ ຕ່າງໆ ຂອງເສດຖະກິດແຫ່ງຊາດ.ປັບປຸງວຽກງານກໍ່ສ້າງພະ ນັກງານ, ຍົກສູງລະດັບຄວາມຊຳນິຊຳນານ ແລະ ການທຽບ ລະດັບ ໃຫ້ແກ່ ພະນັກງານຂະແໜງວິທະຍາສາດ ແລະ ພະ ນັກງານຝ່າຍສອນ ໃຫ້ດີຂຶ້ນ ;

ປັບປຸງລະບົບການແຈ້ງຂ່າວວິທະຍາສາດ-ເຕັກນິກ ແລະ ວຽກງານ ການອອກໃບຮັບຮອງ ກ່ຽວກັບການປະດິດຄິດສ້າງ ໃຫ້ດີກ່ວາເກົ່າ;

ປະກອບສ່ວນຢ່າງສຸດຂີດ ໃນການເສີມຂະຫຍາຍ ສິ່ງ ປະດິດສ້າງ ອັນຍິ່ງໃຫຍ່ ຂອງນັກປະດິດຄິດສ້າງແລະນັກປັບ ປຸງການຜະລິດ ໃຫ້ມີປະສິດທິພາບສູງກ່ວາເກົ່າ. ເພີ່ມທະວີບົດ ບາດ ຂອງບັນດາສະມາຄົມວິທະຍາສາດ-ເຕັກນິກໃນການປັບ ປຸງການຜະລິດ ໃຫ້ດີຂຶ້ນ.

<u>ບົນພື້ນຖານການນຳໃຊ້ຜົນສຳເລັດວິທະຍາສາດ ແລະເຕັກ ນິກ ຕ້ອງ:</u>

ເສີມຂະຫຍາຍການຜະລິດ ແລະ ຮັບປະກັນ ໃຫ້ມີການນຳ ໃຊ້ຕົວຫຸ່ນອຸດສາຫະກຳ ແລະ ລະບົບການບັນຊາອັດຕາໂນມັດ ໂດຍການນຳໃຊ້ ມີໂຫ ໂປຼແສດຊອກ ແລະ ເຄື່ອງຈັກ ຄິດໄລ່ ເອເລັກໂຕນິກ ຊະນິດນ້ອຍທີ່ສຸດ ຢ່າງກ້ວາງຂວາງ,ສ້າງພະ ແນກການຜະລິດ ໃນໂຮງງານ ແລະ ໂຮງງານທີ່ເຄື່ອນໄຫວ ຜະລິດ ແບບອັດຕະໂນມັດ;

ເລັ່ງລັດການນຳໃຊ້ວິທີການ ແລະ ພາຫະນະອັດຕາໂນມັດ

ໃນການກວດກາຊຸມມະພາບ ແລະ ການທົດລອງຜະລິດຕະພັນ ໃຫ້ເປັນພາກສ່ວນປະກອບອັນໜຶ່ງຂອງການວິວັດຕັກໂນໂລຢີ;

ເພີ່ມທະວີ ກຳລັງແຮງຂອງເຄື່ອງຈັກ ແລະ ອຸປະກອນຢູ່ ໃນຂອບເຂດ ສູງທີ່ສຸດ ແລະ ໃນເວລາດຽວກັນນັ້ນ ກໍ ຕ້ອງ ຫລຸດຜ່ອນຂະໜາດຂອງມັນ, ຫລຸດຜ່ອນການໃຊ້ໂລຫະ ເຂົ້າ ໃນການຜະລິດເຄື່ອງຈັກ ໜ່ວຍໜຶ່ງ,ຫລຸດຜ່ອນການໃຊ້ ພະ ລັງງານໄຟຟ້າ ແລະ ຫລຸດຜ່ອນຕົ້ນທຶນການຜະລິດຕໍ່ຫົວໜ່ວຍ ຂອງຜົນໄດ້ສຸດທ້າຍ ທີ່ເປັນປະໂຫຍດ;

ປະດິດສ້າງເຄື່ອງຈັກ ແລະ ອຸປະກອນຫລາຍໜ້າທີ່ ແລະ ສາມາດປ່ຽນ ໜ້າທີ່ຕາມລະບົບໃໝ່ໄດ້ ໃນຂະນະ ມີ ການ ປ່ຽນແປງ ຂະບວນວິວັດຕັກໂນໂລຊີ, ການປ່ຽນແປງຊະນິດ ຜະລິດຕະພັນ ທີ່ຜະລິດອອກມາ ແລະ ການປ່ຽນແປງ ວຽກ-ງານ ທີ່ຄຳເນີນມາ;

ໃນເວລາປະດິດສ້າງເຄື່ອງຈັກ, ອຸປະກອນ, ເຄື່ອງວັດແທກ ແລະ ເຄື່ອງກວດກາ ໃຫ້ນຳໃຊ້ຢ່າງກ້ວາງຂວາງ ຫລັກການ ຜະລິດເປັນຊຸດ ໂດຍໝູນໃຊ້ເຄື່ອງປະກອບ ແລະເຄື່ອງຈັກທີ່ ຢູ່ໃນລະບົບເອກະພາບອັນດຽວ;

ປະດິດສ້າງພາຫະນະຂົນສົ່ງ ຊະນິດໃໝ່ທີ່ທັນສະໄໝທີ່ສຸດ ກໍ່ຄື ປະດິດສ້າງສະຖານີໄຟຟ້າ ທີ່ກຳລັງສູງ ເພື່ອຮັບໃຊ້ການ ຂົນສົ່ງ ອັນຮັບປະກັນໃຫ້ມີການຫລຸດຜ່ອນໃນການໃຊ້ວັດຖຸເຊື້ອ ໄຟແລະພະລັງງານໄຟຟ້າ ຢ່າງຫລວງຫລາຍ;

ຄົ້ນຄ້ວາ ແລະ ນຳໃຊ້ວິທີການທີ່ປະສິດທິພາບສູງໃນການ

ເພີ່ມທະວີຄວາມໜັ້ນໜຽວ, ຄວາມທົນທານຕໍ່ການໜ້ຽໜ້ຽມ, ຄວາມທົນທານຕໍ່ຄວາມຮ້ອນ ແລະ ຄວາມເຢັນ ຂອງໂລຫະ ແລະ ໂລຫະປະສົມ ຂອງເຄື່ອງກໍ່ສ້າງສຳເລັດຮູບ ເຮັດດ້ວຍ ໂລຫະ ແລະ ຂອງທໍ່; ເພີ່ມທະວີການຜະລິດວັດຖຸປະກອນ ກໍ່ສ້າງປະເພດສຳເລັດຮູບແນວໃໝ່, ສີທາ ແລະ ເຄືອງເຮັດດ້ວຍ ຝຸ່ນໂລຫະ, ຝຸ່ນໂລຫະສີ ແລະ ໂລຫະປະສົມທີ່ຕົ້ມເປ່ືອຍຍາກ;

ເສີມຂະຫຍາຍການຜະລິດ ທາດສານບໍລິສຸດພິເສດ, ວັດຖຸ ກະເທິນໄຟຟ້າ ແລະທາດຈຸງໄຟຟ້າ ຊະນິດດີເລີດ, ທາດໂປລີ ແມນ ແລະ ທາດປະສົມຊະນິດໃໝ່ ແລະ ຜະລິດເຄື່ອງ ໃຊ້ ເຮັດດ້ວຍ ທາດສານດັ່ງກ່າວ ໃຫ້ມີຊຸມມະພາບຕາມ ກຳນົດ ໝາຍ, ວັດຖຸທາດ ທີ່ບໍ່ແມ່ນໂລຫະແລະບໍ່ແມ່ນອົງຄະທາດແຕ່ ທົນທານຕໍ່ຄວາມຮ້ອນແລະມີຄວາມໜຸ້ນທ່ຽງທາງດ້ານເຄມີ, ກົລ ພາກສ່ວນປະກອບ ອັນຈຳເປັນ ໃນການ ຫລໍ່ເຄື່ອງຊະນິດ ຕ່າງໆ;

ນຳໃຊ້ຂະບວນວິວັດເຕັກໂນໂລຊີ ຢ່າງກ້ວາງຂວາງ ກ່ອາ ເກ່ົາ ເພື່ອແນໃສ່ຫລຸດຜ່ອນ ຈຳນວນຂະບວນການຜະລິດ, ໃຫ້ ມີເສດເຫລືອວັດຖຸປະກອນ ໃນການຜະລິດໜ້ອຍ ຫລື ບໍ່ໃຫ້ມີ ເສດເຫລືອວັດຖຸປະກອນເລີຍ, ຄົ້ນຄ້ວາ ແລະ ນຳໃຊ້ວິທີການ ອັນມີ ປະສິດທິພາບສູງ ໃນການນຳໃຊ້ ແລະ ປຸງແຕ່ງ ວັດຖຸ ເຊື້ອໄຟ ປະເພດແຂງ ແລະ ປະເພດໜັກ ເປັນ ອາໂປໃຫ້ ຄົບຊຸດກໍ່ຄວິທີການໃນການຜະລິດວັດຖຸເຊື້ອໄຟທຽມ;

ໜູນໃຊ້ວິທີການຂຸ່ຽນໂລຫະ, ວັດຖຸປະກອນແລະເຄື່ອງອົ່ນໆ

ໂດຍໃຊ້ວິທີການເອເລັກໂຕ-ເຄມີ, ປາຈຸມາ, ແສງລາແຊ, ແລະແສງລັງສີອົນໆແລະວິທີການອົນໆອັນມີປະສິດທິພາບ ສູງ ເພື່ອແນໃສ່ປັບປຸງຄຸນນະພາບ ຂອງວັດຖຸປະກອນດັ່ງກ່າວໃຫ້ດີ ກ່ວາເກົ່າ;

ຕ້ອງປະດິດສ້າງ ແລະ ນຳໃຊ້ ພາຫະນະ ແລະ ເຕັກໂນ ໂລຢີ ເພື່ອກົ່ນເອົາສ່ວນປະກອບອັນເປັນປະໂຫຍດ ຈາກ ແຮ່ ຈ່ານ ແລະ ຈາກວັດຖຸດິບທີ່ຂຸດຄົ້ນມາຈາກບ່ໍທີ່ມີທາດແຮ່ ຈ່ານ ສິດປົນຢູ່ໃນລະດັບຕ່ຳ ແລະ ຈາກບ່ໍທີ່ມີແຮ່ຈ່ານ ອັນປະກອບ ດ້ວຍຫລາຍທາດ ສັບສົນ;

ເພີ່ມທະວີຂອບເຂດ ການນຳໃຊ້ບ່ໍເກີດ ພະລັງງານໄຟ ຟ້າທີ່ຟົ້ນຄືນໃໝ່ໄດ້ ຢູ່ໃນເສດຖະກິດແຫ່ງຊາດ (ພະລັງງານ ໄຟຟ້ານ້ຳຕົກ, ແສງຕາເວັນ, ລົມ ແລະ ບ່ໍນ້ຳຮ້ອນ).

ໃນດ້ານວິທະຍາສາດສັງຄົມ ສຸມການອອກເຫືອເຫແຮງ - ເຂ້ົາໃສ່ບັນດາທິດທາງດັ່ງລຸ່ມນ້ີ :

ສັງລວມບົດຮຽນແຫ່ງການເຄື່ອນໄຫວອັນປະດິດສ້າງ ປະຕິ ວັດຂອງ ພ.ກ.ສ.ຊ., ຂອງຂະບວນການກອມມູນິດ ແລະກຳ ມະກອນສາກົນ, ຄົ້ນຄ້ວາຕົກຕອງບັນຫາກ່ຽວກັບວັດຖຸນິຍົມ ສັດ ຈະວິພາກ ແລະ ວັດຖຸນິຍົມປະຫວັດສາດ, ລັດທິກອມມູນິດວິທະ ຍາສາດ ແລະ ເສດຖະສາດການເມືອງຢ່າງລະອຽດລະອໍ;

ຄົ້ນຄ້ວາບັນຫາທາງພາກທິດສະດີ ກ່ຽວກັບສັງຄົມນິຍົມ ຂະ ຫຍາຍຕົວ, ການກໍ່ສ້າງພົ້ນຖານທາງດ້ານວັດຖຸແລະ ເຕັກນິກ ຂອງສັງຄົມກອມມູນິດ ແລະ ການປັບປຸງການພົວພັນແຫ່ງການ

ເພີ່ມທະວີ ການຜະລິດສິນຄ້າໃຊ້ສອຍປະຈຳວັນ ແລະ ອຸດ ສາຫະກຳ ໂດຍຫມູນໃຊ້ວັດຖຸດິບທ້ອງຖິ່ນ ແລະ ວັດຖຸປະກອນ ເສດເຫຼືອ ຈາກການຜະລິດ ອຸດສາຫະກຳ ແລະ ກະສິກຳ , ເພີ່ມທະວີ ການຂຸດຄົ້ນວັດຖຸດິບແຮ່ ຢູ່ກັບທ້ອງຖິ່ນ, ການປູກ ອະງຸ່ນອຸນນະພູມ, ຫມາກເຂົ້າຂ້ອງ ແລະ ພືດພັນອື່ນໆ ທີ່ ສາ ມາດໃຊ້ເປັນວັດຖຸດິບໄດ້. ຂະຫຍາຍລະບົບ ການ ມອບວຽກ ງານໃຫ້ເຮັດຢູ່ກັບເຮືອນ ກ່ອນອື່ນຫມົດ ກໍ່ແມ່ນໃຫ້ ຫມູນ ໃຊ້ ແຮງງານຂອງຜູ້ທີ່ເສຍອົງຄະ, ຜູ້ທີ່ໄປກົມເບ້ຍບຳນານ ກໍ່ ປະຊາຊົນ ໃນເຂດ ຊົນນະບົດ ໃນໄລຍະເວລາ ລະ ຫວ່າງ ລະດູການຜະລິດ ກະສິກຳ.

V

ການເສີມຂະຫຍາຍລະບົບຄົບວຸດ

ກະສິກຳ - ອຸດສາຫະກຳ

ໜ້າທີ່ຕົ້ນຕໍຂອງລະບົບຄົບສຸດກະສິກຳ-ອຸດສາຫະກຳ ແມ່ນ ແມ່ໃສ່ຮັບປະກັນປະເທດຊາດກ່ຽວກັບສະບຽງອາຫານແລະວັດ ຖຸດິບກະສິກຳ.

ເພື່ອຈຸດປະສົງປະຕິບັດໂຄງການສະບຽງອາຫານ ໃຫ້ ສຳ ເລັດຜົນຢ່າງມີໄຊຮັບປະກັນໃຫ້ມີການວາງແຜນເປັນ ເອກະ ພາບ ແລະ ການເສີມຂະຫຍາຍ ບັນດາຂະແໜງການຂອງ ລະບົບຄົບວຸດກະສິກຳ-ອຸສາຫະກຳຢ່າງສົມສ່ວນແລະ ຢ່າງສົມ ດຸນ, ຮັບປະກັນການປັບປຸງພັນຖານແລະວັດຖຸແລະເຕັກນິກຂອງ ມັນໃຫ້ຫລາຍ, ຮັບປະກັນການປັບປຸງສາຍພົວພັນທາງດ້ານເສດ ຖະກິດລະຫວ່າງຂະແໜງການດ້ວຍກັນໃຫ້ດີກວ່າເກົ່າ, ການ ຈັດຕັ້ງການປະສານການເຄື່ອນໄຫວອັນກົມກຽວລະຫວ່າງ ຂະ ແໜງການດັ່ງກ່າວໃນການເພີ່ມທະວີການຜະລິດກະສິກຳ, ໃນ ການປັບປຸງປົກປັກຮັກສາ, ການຂົນສົ່ງ, ການປຸງແຕ່ງແລະການ ນຳສົ່ງຜະລິດຕະພັນກະສິກຳ ໃຫ້ໄປຮອດມືຜູ້ຊົມໃຊ້.

ຕ້ອງສູ້ຊົນເຮັດໃຫ້ການກະສິກຳກ້າວໄປເຖິງການເສີມ ຂະ
ຫຍາຍແລະເພີ່ມທະວີປະສິດທິພາບຂອງທຸກຂະແໜງການຢ່າງ
ສະໜ່ຳສະເໜີ, ການເພີ່ມທະວີການຜະລິດແລະການຍົກ ສູງ
ຄຸນນະພາບຂອງຜະລິດຕະພັນ. ສືບຕໍ່ດຳເນີນແນວທາງເສີມຂະ
ຫຍາຍການຜະລິດກະສິກຳແບບທະວີສູນຢ່າງສຸດຂີດ.

ນຳໃຊ້ບົດຮຽນອັນກ້ວາງໜ້າດ້ວຍຄວາມສູ້ຊົນ, ປັບປຸງ ການ
ຈັດຕັ້ງການອອກແຮງງານແລະການຜະລິດຢູ່ໃນ ສະຫະກອນ
ແລະນິຄົມກະເສດ. ເພີ່ມທະວີການນຳໃຊ້ເມືອທີ່ປູກຝັງ, ລ້ຽງ
ການຜະລິດ, ຊຸບພະຍາກອນທາງດ້ານວັດຖຸ, ການເງິນ ແລະ
ແຮງງານໃຫ້ຫລາຍ. ປະຕິບັດລະບົບມາດຕະການ ແນໃສ່ ປັບ
ປຸງການວາງແຜນ ແລະນະໂຍບາຍຊຸກຍູ້ການຜະລິດທາງດ້ານ
ເສດຖະກິດ, ການສະສົມຜະລິດຕະພັນກະສິກຳ, ປັບປຸງລະບົບ
ການເຄື່ອນໄຫວວິສາຫະກິດແບບກຸ້ມຕົນເອງແລະພົ້ນ ກຳໄລ
ໃຫ້ເຂັ້ມແຂງ, ຫລຸດຜ່ອນລາຄາຕົ້ນທຶນການຜະລິດລົງ, ເພີ່ມທະ
ວີການຜະລິດກະສິກຳມີກຳໄລແລະການປັບປຸງສະພາບການຜະ
ລິດ ທາງດ້ານ ການເງິນ- ເສດ ຖະ ກິດ ໃຫ້ດີ ກວ່າ
ເກົ່າ.

ສືບຕໍ່ຮຽງການປັບປຸງໂຄງປະກອບແລະການຈັດວາງການ
ຜະລິດກະສິກຳຕາມເຂດຕ່າງໆພາຍໃນປະເທດໃຫ້ຊັ້ນຕົ້ມ ,
ເພີ່ມທະວີລະດັບໃນການແບ່ງເຂດການຜະລິດກະສິກຳແລະໃນ
ການລວມສູນການຜະລິດກະສິກຳໃຫ້ສູງກວ່າເກົ່າ. ຍົກສູງ ບົດ
ບາດແລະຄວາມຮັບຜິດຊອບຂອງບັນດາສາທາລະນະລັດ, ນຶ່ມ

ທົ່ນ, ແຂວງ ແລະ ເມືອງ ໃນ ການປະກອບສະສົມທຶນ ສະ ບຽງອາຫານ ຂອງ ທ້ອງຖິ່ນ ກໍ ໃນ ການຕອບສະ ໜອງ ຄວາມຮຽກຮ້ອງຕ້ອງການ ຂອງ ປະຊາຊົນ ທາງ ດ້ານສະບຽງອາຫານ.

ໃນໄລຍະຫ້າປີ ເພີ່ມທະວີ ການຜະລິດ ກະສິກຳສະເລ່ຍ, ໃນປີໜຶ່ງ ໃຫ້ຂຶ້ນຕໍ່ ໑໘-໑໔% ແລະ ສະມັດຖະພາບໃນການ ອອກແຮງງານ ຢູ່ໃນ ເສດຖະກິດ ຂອງສ່ວນລວມ ຂຶ້ນ ຕໍ່ ໘໘-໘໔%.

<u>ໃນ ການປູກຝັງ</u> ໜ້າທີ່ ອັນສຳຄັນກ່ວາໝູ່ ແມ່ນເພີ່ມທະ ວີ ລະດັບ ຄວາມງອກງາມ ຂອງດິນປູກຝັງ ແລະ ສະມັດຖະ ພາບ ຂອງ ການເກັບກ່ຽວ ຂຶ້ນຢ່າງສູງສຸດ, ສືບຕໍ່ ເພີ່ມທະ ວີ ການຜະລິດ ພືດພັນທັນຍາຫານ, ອາຫານສັດ ແລະຜະລິດ ຕະພັນອຶ່ນ ບຶ່ນພັນຖານ ການນຳໃຊ້ ລະບົບ ການດຳ ເນີນ ການຜະລິດ ຂອງເຂດ ຊົ່ງມີ ພື້ນຖານ ອັນໜັ້ນແກ່ນ ທາງ ດ້ານ ວິທະຍາສາດ.

ນຳເອົາ ການຜະລິດ ພືດພັນທັນຍາຫານ ຜ້ານກາງປະຈຳ ປີ ຂຶ້ນຮອດ ໘ລ້ານ-໘໔ລ້ານ ໂຕນ, ໃນນັ້ນ ໃຫ້ຍົກການຜະ ລິດໜາກຖົ່ວ ຂຶ້ນຮອດ ໑໘-໑ລ ລ້ານໂຕນ. ເພີ່ມທະວີການ ຜະລິດ ແລະ ການຊຸ ເຂົ້າໂອດ, ເຂົ້າດຳ,ເຂົ້າຂະນິດໜົ່ງ ເຮັດເຂົ້າຈີ່ດຳ, ເຂົ້າຈ້າວ, ເຂົ້າບະເລຂະນິດແຂງ ແລະ ຂະນິດແຮງ, ອູບລົງ, ສາລີ ແລະ ພືດພັນເປັນອາຫານສັດ.

ໜ້າທີ່ອັນຮີບດ່ວນ ທີ່ໂຈະໄວ້ບໍ່ໄດ້ນັ້ນ ແມ່ນໜ້າທີ່ການປັບ

ປຸງ ການຜະລິດອາຫານສັດ ໃຫ້ດີກ່ວາເກົ່າ ໂດຍ ພົ້ນຖານ ແລະ ຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ອາຫານສັດ ໃຫ້ແກ່ ການລ້ຽງສັດ ຂອງ ສ່ວນລວມ ກໍ່ຄືການລ້ຽງສັດໃຫຍ່ ແລະ ເປັດໄກ່ ທີ່ເປັນ ກຳມະສິດສ່ວນຕົວ ຂອງ ພົນ ລະ ເມືອງ. ສຳເລັດການວາງ ແລະ ກ້າວອົ້ມໄປສູ່ປະຕິບັດໂຄງ ການຄົບຊຸດ ກ່ຽວກັບ ການກໍ່ສ້າງພົ້ນຖານ ອາຫານສັດ ຢູ່ໃນ ປະເທດ ໃຫ້ຮັບປະກັນດີ ແລະ ສົມດຸນ. ເຮັດໃຫ້ການຜະລິດ ອາຫານສັດ ຢູ່ໃນສະຫະກອນ ແລະ ນິຄົມກະເສດ ມີ ລັກສະ ນະລົງເລິກໃນຂະແໜງການ. ເອົາໃຈໃສ່ ເປັນພິເສດ ໃນ ການເຮັດໃຫ້ ສະຫະກອນ ແລະ ນິຄົມກະເສດ ມີ ຄວາມຮັບ ປະກັນ ກ່ຽວກັບອາຫານສັດ ຂອງຕົນເອງ. ນຳໃຊ້ ອາຫານ ເສດເຫຼືອ ຢ່າງເຕັມສ່ວນກ່ວາເກົ່າ.

ປັບປຸງ ຄຸນນະພາບ ຂອງ ອາຫານສັດ ທຸກຊະນິດ ໃຫ້ດີ ກ່ວາເກົ່າ, ດ້ວຍການແກ້ໄຂ ບັນຫາຕົ້ມທາດ ປໂຮຕອິນໃສ່ ໃນ ອາຫານສັດ ແລະ ກ່ອນອົ້ນຫົ້ດ ຕ້ອງແກ້ໄຂ ບັນຫາມື ດ້ວຍການຂະຫຍາຍເມືອທີ ປູກຝັງ ພືດພົ້ນ ທີ່ເປັນອາຫານສັດ ແລະ ເພີ້ມທະວີ ການປູກ ຫມາກຖົ່ວແຮ, ຫມາກຖົ່ວຂຽວ , ຫມາກຖົ່ວດິ້ນ, ຫຍ້າລ້ຽງສັດ, ລຸຍບົ້ນ, ຫມາກຖົ່ວເຫລືອງ, ແລະ ພືດພົ້ນຊະນິດອົ້ນໆ ທີ່ມີທາດ ປໂຮຕອິນໃນລະດັບສູງ. ເພີ້ມທະວີ ສະມັດຖະພາບ ຂອງ ການເກັບກ່ຽວ ພືດພົ້ນ ທີ່ ເປັນ ອາຫານສັດ ແລະ ຂອງເມືອທີ ປູກຝັງ ອັນເປັນບໍ່ເກີດ ຂອງ ອາຫານສັດ, ກ້າວໄປເຖິງ ການຫລຸດຜ່ອນ ບໍ່ໃຫ້ທາດ

ບຳລຸງໃນອາຫານສັດ ມີການສູນເສັຍ ໃນເວລາ ເກັບ ກ່ຽວ ແລະ ເກັບມ້ຽນ ໃຫ້ໄດ້ເປັນຢ່າງດີ. ເລ່ັງລັດ ການ ກໍ່ສ້າງ ສາງ ຂັນຈຸ ໃນຮູບແບບອັນດຽວກັນ ເພ່ືອເກັບມ້ຽນ ອາຫານ ສັດ ທ່ີຍັງສົດ, ອາຫານ ທ່ີ ເອ່ືອບເກ່ືອ, ເຝ່ືອງ, ຝຸ່ນຫຍ້າ ແຫ້ງ ຫຍ້າສົດ, ພ້ືດທັນຍາຫານຊະນິດ ເປັນຫ່ໍແລະອາຫານ ສັດ ຊະນິດອ່ືນໆ ຢູ່ໃນ ນ່ິຄົມ ທຸກໆ ບ່ອນ.

ຮັບປະກັນ ການຜະລິດ ຝ້າຽດິບ ຄົດສະເລ່ັຽ ຜ້ານກາງ ໃຫ້ໄດ້ ນ້ຳໜັກ ๙,๔-๙,๓ ລ້ານໂຕນ ຕ່ໍປີ, ປັບປຸງຄຸນນະ ພາບ ຂອງ ເສ້ັນຝ້າຍ ໃຫ້ດ່ີກ່ວາເກ່ົາ. ຂະຫຍາຍ ການປູກ ຕ້ົນຝ້າຍ ທ່ີໃຫ້ ເສ້ັນແລບ ແລະ ມ່ີຄຸນຄ່າຫຼາຍກ່ວາໜ່ໍ; ປັບ ປຸງ ໂຄງປະກອບ ຂອງ ການຜະລິດຝ້າຍ ເສ້ັນໜາ ປານ ກາງ ທ່ີ່ມ ຄຸນນະພາບສູງ ທາງດ້ານ ເຕັກໂນໂລຊ ໃຫ້ດ່ີຂ້ຶນ ກ່ວ.

ຍົກສູງ ປະສ່ິດທ່ິພ້ົມ ຂອງ ການເກັບກ່ຽວ ແລະ ຄຸນນະ-ພາບ ກ່ໍ ຍົກສູງ ລະດັບ ໃນການປ່ົກປັກຮັກສາ ພ້ືດພ້ົມ ຈຳ ພວກ ປ່ໍ່ານ ບ່ໍ່ໃຫ້ຕ່ົກຣ້ັຽເສ້ັຽຫາຍ, ເພ່ົ່ມທະວ່ີ ບ່ໍ່ລ່ົມາດ ການປຸງແຕ່ງ ປ່ານເສ້ັນຍາວ ແລະ ປ່ໍ່ເປ່ັນເສ້ັນໃນ້ັນ້ັ.

ເຮ້ັດໃຫ້ ການຜະລິດ ຫ່ໍ່ພ້ືກກ່າດຫ່ວານສູງ້ັນ ຮ່ອດ ๑๐๐-๑๐๗ ລ້ານໂຕນ ຄົດສະເລ່ັຽ ຕ່ໍ່ປ. ຍົກສູງ້ັດຕ່ານ້ັ ລ່ົດນ້ຳຕ່ານ ຈ່ານເນ່ືອ ທ່ີ ປູກຫ່ໍ່ພ້ືກກ່າດຫ່ວານ ແຕ່ລະ ເຮ້ັກ ຕ່ານ ້ັ ນ ້ັ.

ຍົກສູງ ປະສ່ິດທ່ິພ້ົມ ໃນການເກັບກ່ຽວ ແລະ ປັບປຸງ ຄຸນ

ນະພາບ ຂອງ ແນວຄວາມຕ້ານທານ, ແນວຍ່ານ ເສັ້ນຍາວ , ແນວໜ້າກຽງເທບ, ແນວພືດພັນໃຫ້ນ້ຳມັນ, ແນວຕົ້ນໄມ້ຊຸດ ສາທະກຳ ອື່ນໆ ກໍ່ດີ ແນວຢາພົ້ນເມືອງ ໃຫ້ດີກ່ວາເກົ່າ.

ກ້າວໄປເຖິງ ການເພີ່ມທະວີ ການຜະລິດ, ການ ເປີດ ກ້ວາງ ໃຫ້ມີຊະນິດ ເປັນຊຸດຕ່າງໆ ແລະ ການຍົກສູງຄຸນນະ ພາບຂອງ ມັນຝະລັ່ງ, ຜັກແລະໜາກໂມ,ໜາກແຕງໜວາມ ແລະ ໜາກອຶ, ປັບປຸງ ການປົກປັກຮັກສາ ມັນ ໃຫ້ດີຂຶ້ນຕື່ມ ແລະ ຫລຸດຜ່ອນ ການຕົກຣ້ຽເສັຽຫາຍລົງ ໃຫ້ໄດ້ຫຼາຍ.

ປັບປຸງ ການຈັດຕັ້ງ ການຜະລິດ, ການຮັບຊື້, ການເກັບ ມ້ຽນ, ການປຸງແຕ່ງ ແລະ ການຈຳໜ່າຍ ໜາກໄມ້, ຜັກ ແລະ ມັນຝະລັ່ງ ໃຫ້ດີຂຶ້ນຕື່ມ. ເພີ່ມທະວີ ການກໍ່ສ້າງ ສາງ ເຢັນ, ສາງ, ບ່ອນຮັບຊື້ ແລະ ຈຳໜ່າຍ, ໂຮງງານແລະ ພະແນກປຸງແຕ່ງ, ກ່ອນອື່ນໜົດ ຢູ່ກັບບ່ອນຜະລິດ ໜາກໄມ້ ແລະຜັກ.

ເປີດກ້ວາງ ການປູກຝັງ ຢູ່ໃນເຮືອນແກ້ວ ໂດຍສະເພາະ ຢູ່ບ່ອນໃດ ທີ່ມີຄວາມອຸນເສດເຫຼືອ ຈາກໂຮງງານ ແລະຢູ່ໃນ ບ່ອນທີ່ ບໍ່ນ້ຳອຸ່ນ.

ເພີ່ມທະວີ ເນື້ອທີ່ ປູກຕົ້ນໄມ້ ໃຫ້ໜາກ, ພືດຜຸ່ມ,ໜາກ ອະງຸ່ນ, ຊາ ແລະ ໜາກໄມ້ເຂດຮ້ອນ. ສືບຕໍ່ດຳເນີນວຽກ ງານເຣັດສວນ ໜາກໄມ້ ແລະ ສວນປູກໜາກອະງຸ່ນ ແບບ ຊຸດສາທະກຳ, ແລະດຳເນີນວຽກງານ ດັດສ້າງ ສວນ ທີ່ມີຢູ່ ແລ້ວນັ້ນ ຄືນໃໝ່. ປັບປຸງ ສ່ວນປະກອບ ທາງດ້ານ ຊະນິດ

ແລະ ແມ່ພັນ ຂອງ ຕົ້ນໄມ້ ທີ່ປູກແລ້ວ ໃຫ້ດີ ກ່ວາເກົ່າ, ຍົກສູງ ອັດຕາສ່ວນ ຂອງ ຫມາກໄມ້ຊະນິດປູກໃນ ລະ ດູ ຫນາວ. ເສີມຂະຫຍາຍ ການຊ້ຂາຍຜັກ ແລະ ຫມາກໄມ້ສົດ ໂດຍຜ່ານ ສະຫະກອນການຄ້າ ແລະ ຕະລາດຊາວນາ ຢ່າງ ກ້ວາງຂວາງ ກ່ວາເກົ່າ.

ປັບປຸງ ລະບົບ ການເລືອກເຟັ້ນແມ່ປູກກະສິກຳ ໃຫ້ດີ ຂຶ້ນ ຕື່ມ, ແລະເລັ່ງລັດ ຫັນປ່ຽນອຽກ ມ ມ ມ

ນົມ ຂັ້ນຮອດ ໝຖ-ໝໝ ລ້ານໂຕນ, ການຜະລິດໄຂ່ ບໍ່ໃຫ້ ຫລຸດ ກ໔ ຕ ໜ່ວຍ, ແລະ ການຜະລິດ ແລັນ ຂັ້ນ ຮອດ ๔ກ๐-๔๒๐ ພັນໂຕນ. ກ້າວຂັ້ນ ເພີ່ມທະວີ ສະມັດຖະພາບ ຂອງ ງົວນົມ ແລະ ປັບປຸງ ຄຸນນະພາບ ຂອງນ້ຳນົມ ໃຫ້ສູງ ຂັ້ນ ກ່ວາເກົ່າ. ນຳໃຊ້ ວິທີການ ທີ່ຈະເຮັດໃຫ້ ການຜະລິດ ຊຸ່ມງົວ ເພີ່ມຂັ້ນ ເຊັ່ນ ວິທີການລ້ຽງງົວນ້ອຍ ແບບ ເລັ່ງລັດ ໃຫ້ມີນ້ຳໜັກຫລາຍ ໃນເວລາສັ້ນທີ່ສຸດ ຢ່າງ ກ້ວາງ ຂວາງ ກ່ວາເກົ່າ. ປະຕິບັດ ມາດຕະການ ທີ່ແນ່ໃສ່ເປີດກ້ວາງການ ລ້ຽງສັດໃຫຍ່ ແລະ ເປັດໄກ່ ທີ່ໃຫ້ ຊຸ່ມ. ເພີ່ມທະວີ ຄວາມ ເອົາໃຈໃສ່ ຕໍ່ການຂະຫຍາຍ ການລ້ຽງກວາງ, ລ້ຽງ ມ້າ, ລ້ຽງກະຕ່າຍ ແລະລ້ຽງສັດທີ່ມີຂົນ, ການລ້ຽງປາ, ລ້ຽງ ເຜິ້ງ ແລະ ລ້ຽງມ້ອນ.

ເສີມຂະຫຍາຍ ການລ້ຽງໝູ ແບບທະວີສຸມ, ເປີດກ້ວາງ ຂະໜາດ ຂອງ ວິສາຫະກິດ ລ້ຽງໝູ ແບບ ອຸດສາຫະກຳ. ນຳໃຊ້ ໃຫ້ດີກ່ວາເກົ່າ ຄວາມອາດສາມາດ ໃນ ການຜະລິດ ຊຸ່ມໝູ ຢູ່ຕາມນິຄົມ ລ້ຽງສັດ ຂອງ ວິສາຫະກິດອ້ອມ ທີ່ບໍ່ລ້ຽງ ເລີກ ໃນອຽກນີ້ ແລະ ຢູ່ຕາມພາກສ່ວນ ເສດຖະກິດສຳຮອງ ຂອງຄອບຄົວ. ເພີ່ມທະວີ ການຜະລິດຊຸ່ມແກະ, ແລັນ ແລະ ຂົນແກະ ຂະນິດຫູດ ແລະ ຜະລິດຕະພັນອື່ນໆ ຈາກການລ້ຽງ ແກະ ແລະ ລ້ຽງແບ້ ຢ່າງສູດຂີດ. ປັບປຸງ ພັນຖານການຜະ ລິດ ຂອງ ຂະແໜງການດ້ວງກ່າວ ໃຫ້ເຂັ້ມແຂງ, ສ້າງນິຄົມ ລ້ຽງສັດຂະໜາດໃຫຍ່ ທີ່ປະກອບດ້ວຍກົນຈັກ ແລະບ່ອນເກັບ

ສັດ.

ກ້າວໄປເຖິງ ຈຳນວນຊົ່ມ ທີ່ໄດ້ຮັບຈາກສັດໃຫຍ່ແຕ່ລະໂຕ ໃຫ້ໄດ້ຫຼາຍກ່ວາເກົ່າ. ເດັດຂາດ ຕ້ອງປັບປຸງ ການ ແຜ່ພັນ ຝູງສັດ ແລະ ການປົກປັກຮັກສາສັດ ບໍ່ໃຫ້ມີການເສັຍຫາຍ.

ຍົກສູງ ລະດັບອຸຫກງານ ເລືອກເຟັ້ນພັນສັດ ເພື່ອ ແນໃສ່ ປັບປຸງ ການແຜ່ພັນ ຂອງສັດ ໃຫ້ດີຂຶ້ນຕື່ມ, ປະສົມ ພັນສັດ ໃຫຍ່ ແລະ ເປັດໄກ່ ຊະນິດໃຫມ່ ທີ່ມ ສະມັດຖະພາບ ສູງ ແລະ ເໝາະສົມກັບຄວາມຮຽກຮ້ອງຕ້ອງການ ຂອງຕັກໂນ ໂລຊີ ອຸດສາຫະກຳ. ເປີດກ້ວາງ ການສະໜອງຢຸກຢາແລະ ວິຕາມິນ ເພື່ອຮັບໃຊ້ ຄວາມຮຽກຮ້ອງຕ້ອງການ ຂອງ ການ ລ້ຽງສັດ, ປັບປຸງ ການບໍລິການ ປົ່ນປົວສັດ ໃຫ້ດີກ່ວາເກົ່າ.

ເຮັດໃຫ້ ການຊຸ ຜະລິດຕະພັນ ກະສິກຳ ຫລາຍຂຶ້ນ ພ້ອມ ດຽວກັນ ກໍ່ຕ້ອງ ຍົກລຸນມະພາບ ໃຫ້ສູງ ແລະ ຕ້ອງມີ ຫຼາຍ ຊະນິດ ຕາມທີ່ ແຜນການ ໄດ້ບົ່ງໄວ້ ຢ່າງເຂັ້ມງວດ.

ປັບປຸງ ການຈັດຕັ້ງ ແລະ ວິທີການຮັບຊຸ ໃຫ້ດີຂຶ້ນຕື່ມ.

ເສີມຂະຫຍາຍ ສາຍພົວພັນໂດຍກົງ ລະຫວ່າງ ບັນດາ ວິ ສາຫະກິດການຄ້າ ແລະ ຮ້ານອາຫານ ກັບ ສະຫະກອນແລະ ນິຄົມກະເສດ.

ເພີ່ມທະວີ ການຜະລິດຊົ່ມ, ນ້ຳມັນ, ມັນຝະລັ່ງ,ພັກແລະ ໝາກໄມ້ ຢູ່ໃນ ເສດຖະກິດສຳຮອງ ຂອງ ວິສາຫະກິດແລະ ວິງການຈັດຕັ້ງຕ່າງໆ, ຢູ່ໃນ ເສດຖະກິດສຳຮອງ ຂອງຄອບ ຄົວ, ກົ່ດ ຢູ່ໃນ ສະຫະກອນ ປູກຕົ້ນໄມ້, ປູກພັກ ແລະລ້ຽງ

ກະຕ່າຍ ຂອງ ກຳມະກອນ ແລະ ພາລະກອນ, ແລະ ຊ່ວຍ ເຫລືອ ພວກເຂົ້າເຈົ້າ ໃນການຊອກຫາພັນສັດນ້ອຍ,ອາຫານ ສັດ, ແມວພັກ ແລະ ຝຸ່ນວິທະຍາສາດ.

ຮັບປະກັນ ການຂະຫຍາຍ ວຽກງານປົວແປງ ດິນປູກຝັງ ໃນຂັ້ນຕໍ່ໄປ. ໂດຍອີງໃສ່ ການລົງທຶນພື້ນຖານຂອງລັດ ໃຫ້ ຂະຫຍາຍ ເນື້ອທີ່ ປູກຝັງ ທີ່ມີຊົນລະປະທານ ໃຫ້ໄດ້ ໓,໔--໓,໕ ລ້ານ ເຮັກຕາ, ແລະ ຂະຫຍາຍ ດິນປູກຝັງໃນບ່ອນ ທີ່ ເປັ່ງເອົາມ້ຳອອກ ໃຫ້ໄດ້ ໓,໗-໓,໙ ລ້ານ ເຮັກ ຕາ, ນຳເອົາ ນ້ຳເຂົ້າໄປສູ່ ເຂດແຫ້ງແລ້ງ, ເຂດບໍ່ ແຫ້ງ ແລ້ງ ຫລາຍ ແລະ ເຂດພູດອຍ ເພື່ອສ້າງທົ່ງຫຍ້າ ລ້ຽງສັດ ໃຫ້ ໄດ້ ເນື້ອທີ່ ໔໕-໔໙ ລ້ານ ເຮັກຕາ.

ກ້າວໄປເຖິງ ການເພີ່ມທະວີ ປະສິດທິພາບ ຢ່າງ ຮອບ ດ້ານ ການນຳໃຊ້ ເນື້ອທີ່ດິນ ບ່ອນມີ ລະບົບ ຊົນລະປະທານ ແລະ ເນື້ອທີ່ດິນ ທີ່ໄດ້ເປັ່ງນ້ຳອອກ ແລະ ຫລຸດຜ່ອນ ການຶດ ເວລາ ອັ່ນ ເກັບກ່ຽວ ໃຫ້ໄດ້ພືນຕາແຜນການລົງອີກ. ເພີ່ມ ລະດັບ ເຕັກນິກ ແລະ ຊຸນນະພາບ ໃນການກໍ່ສ້າງລະບົບຊົນ ລະປະທານ, ຮັບປະກັນ ການດຳເນີນວຽກງານ ປົວແປງດິນ ແລະການນຳໃຊ້ດິນ ດ່ວງກ່າວ ເຂົ້າໃສ່ ການກະສິກຳຢ່າງສົມ ຄ່ຳ, ປະຕິບັດ ມາດຕະການຕ່າງໆ ທີ່ແນໃສ່ໃຊ້ນ້ຳ ເພື່ອຮັບ ໃຊ້ ຄວາມຕ້ອງການຂອງການກະສິກຳ ຢ່າງຖືກຕ້ອງເໝາະ ສົມ ແລະ ປັບປຸງ ສະພາບການປົວແປງດິນ ບ່ອນທີ່ມີ ຊົນລະ ປະທານ ແລະ ບ່ອນທີ່ໄດ້ເປັ່ງເອົາມ້ຳອອກ, ຍົກສູງ ລະດັບ

ຄວາມຮັບຜິດຊອບ ຕໍ່ການປ່ອຍປະດົນ ປູກຝັງ ໃຫ້ເປັນຮ້ອ. ດຳເນີນ ວຽກງານດັດສ້າງລະບົບປົວແປງດົນ ທີ່ມີຢູ່ ໃນປັດຈຸ ບັນນີ້ ຄົນໃຫມ່ ດ້ວຍຈົງຫວະ ອັນກ້າວໄປໄວກ່ວາຫມູ, ແລະ ຮັບປະກັນ ໃຫ້ມີນ້ຳ ຮັບໃຊ້ ລະບົບດ່ຽງກ່າວ ໃຫ້ດີກ່ວາເກົ່າ, ແລະ ປ້ອງກັນ ບໍ່ໃຫ້ດົນປູກຝັງ ເຄັມ ຫລື ສົ້ມໂພດ.

ລ້ຽມ ດຳເນີນວຽກງານ ກະກຽມຫັນເອົານ້ຳສ່ວນນຶ່ງ ໃນ ສາຍແມ່ນ້ຳ ຢູ່ພາກເຫນືອ ໃຫ້ໄຫລໄປຕົກໃສ່ອ່າງແມ່ນ້ຳໂອມ ກາ, ກໍ່ ສືບຕໍ່ ກ່ານຄົນຄ້ວາ ທາງດ້ານວິທະຍາສາດ ແລະ ວາງແຜນ ກ່ຽວກັບ ການຫັນເອົາ ສາຍແມ່ນ້ຳ ຢູ່ ສີບ໋ລ ໃຫ້ ໄຫຼໄປອາຊີພາກກາງ ແລະ ກາຊັກສະຕາມ.

ປະຕິບັດ ມາດຕະການຕ່າງ ທີ່ແນໃສ່ ເພີ່ມທະວີ ການຈັດ ສ່ຽ ແລະ ການນຳໃຊ້ ວັດຖຸເຄມີ ຮັບໃຊ້ ການປູກຝັງ ແລະ ການລ້ຽງສັດ ຢ່າງສະເຫມີ້ນ ສະເຫມີປາຍ ແລະ ຢ່າງຖືກ ຕ້ອງເຫມາະສົມກ່ວາເກົ່າ. ໃນປີ ໑໙໗໕ ຮັບປະກັນການຈັດ ສ່ຽ ຝຸ່ນວິທະຍາສາດ ເປັນຈຳນວນ ບໍ່ໃຫ້ຫລຸດ ໑໑໕ ລ້ານ ໂຕນ ຖ້າຄິດໄລ່ເປັນຫົວຫນ່ວຍ ພື້ນຖານວັດແທກ, ສະຫນອງ ທາດເຄມີປະສົມ ເພີ່ມໃສ່ອາຫານສັດ ໃຫ້ໄດ້ ໕ ລ້ານໂຕນ, ແລະສະຫນອງ ພາຫະນະ ປ້ອງກັນ ພືດພັນ ຊະນິດ ມີປະສິດ ທິພາບສູງ ເປັນຈຳນວນ ຜ໕໐-ຜ໗໐ ພັນໂຕນ. ປັບປຸງວຽກ ງານ ແນໃສ່ ຮັບປະກັນ ເຮັດໃຫ້ ການກະສິກຳ ມີພາຫະນະ ເຄມີ ເພື່ອຮັກສາ ອາຫານສັດ ບໍ່ໃຫ້ເສັຍລຸມ.

ເພີ່ມທະວີ ບົດບາດ ຂອງ ການຮັບໃຊ້ ພາຫະນະ ເຄ ມີ

ກ່ຽວກັບດິນ ຢູ່ໃນ ການກະສິກຳ, ແລະ ເພີ່ມທະວີຄວາມຮັບ ຜິດຊອບ ຂອງວຽກ ຕໍ່ການນຳໃຊ້ ຝຸ່ນວິທະຍາສາດ, ວັດຖຸ ທາດປູນ, ພາຫະນະເຄມີ ເພື່ອປ້ອງກັນ ພືດພັນ ຢ່າງມີ ປະ ສິດທິພາບສູງ ກ່ວາເກົ່າ. ນຳໃຊ້ ວິທີການໃສ່ຝຸ່ນ ວິທະຍາ ສາດ ແບບເປັນພາກສ່ວນ ຢ່າງກ້ວາງຂວາງກ່ວາເກົ່າ. ໃນ ການບັນຈຸ ຝຸ່ນເຄມີ ໃສ່ຖົງ,ໃນເວລາເກັບມ້ຽນ, ໃນ ການ ຂົນສົ່ງ ແລະ ໃນການນຳໃຊ້ ໃຫ້ຫລຸດຜ່ອນ ການເສັຽຫາຍ ໃຫ້ໄດ້ ຢ່າງຫຼວງຫຼາຍ.

ຮັບປະກັນ ໃຫ້ມີການນຳໃຊ້ ຝຸ່ນທຳມະຊາດຢ່າງເຕັມສ່ວນ ແລະ ມີປະສິດທິພາບກ່ວາເກົ່າ. ເພື່ອບັນລຸຈຸດປະສົງດັ່ງກ່າວ ໃຫ້ນຳເອົາເຄື່ອງຈັກ ແລະ ອຸປະກອນ ອັນມີປະສິດທິພາບສູງ ຢ່າງຄົບຊຸດ ໄປປະກອບໃຫ້ແກ່ສະຖານທີ່ຜະລິດຕ່າງໆ. ຮອດ ປີ ໑໙໘໕, ເຮັດໃຫ້ ບໍລິມາດ ການໃຊ້ ຝຸ່ນ ທຳມະຊາດສູງ ຂຶ້ນຮອດ ໑-໑,໔ ຕັ ໂຕນ. ຕ້ອງປັບປຸງ ວິທີປ໋ອແປງດິນສົ້ມ ດ້ວຍການໃສ່ປູນ ໃຫ້ດີຂຶ້ນ.

ໃນແຜນການຫ້າປີ ເທື່ອທີ ໑໑ ນີ ຕ້ອງແບ່ງປັນທຶນ ພື້ນ ຖານ ຈຳນວນນຶ່ງເຂົ້າໃນການກະສິກຳ; ພາກສ່ວນນີ ລວມຢູ່ ໃນງົບປະມານ ທີ່ແນໃສ່ ເສີມຂະຫຍາຍ ເສດຖະກິດ ແຫ່ງ ຊາດ ຕ້ອງບໍ່ຫລຸດ ລະດັບ ທີ່ໄດ້ວາງມາແລ້ວ. ຍົກສູງປະສິດ ທິພາບ ຂອງ ການລົງທຶນພື້ນຖານ ຢ່າງສຸດຂີດ ເພື່ອ ຮັບໃຊ້ ການຜະລິດ ກ່ອນອື່ນໝົດ ຕ້ອງນຳໃຊ້ທຶນດ້ວຍກ່າວ ເພື່ອ ປັບ ປຸງ ຄວາມງອກງາມຂອງດິນ, ເພື່ອສ້າງພື້ນຖານ ອັນໜັ້ນ

ຄ້ວ ທາງດ້ານອາຫານ ໃຫ້ແກ່ ການລ້ຽງສັດ,ສ້າງໂຮງງານ ປຸງແຕ່ງຜະລິດຕະພັນ ຂັ້ນຕົ້ນ, ສ້າງສາງ ແລະ ບ່ອນເກັບ ມ້ຽນຜະລິດຕະພັນກະເສດ, ດັດແປງ ຂະຫຍາຍຄອກສັດແລະ ເຄຫະສະຖານ ອອກໃຫ້ທັນສະໄໝ ແລະ ກ້ວາງຂວາງ.

ຢູ່ໃນຊຶມນະບົດ, ຕ້ອງກໍ່ສ້າງ ເຮືອນຊານ ອັນສະດວກສະ ບາຍ ພ້ອມດ້ວຍຄອກສັດໃຫຍ່ ແລະ ເປັດໄກ່, ເຮືອນລ້ຽງ ເດັກ, ໂຮງຮຽນອະນຸບານ, ສະໂມສອນ ແລະ ສະຖານທີ່ ອື່ນໆ ເພື່ອຮັບໃຊ້ການເຄື່ອນໄຫວ ປະຈຳວັນ ທາງດ້ານ ວັດ ທະນະທຳ ດ້ວຍຈັງຫວະ ອັນວ່ອງໄວກ່ອນໝູ. ເພີ່ມ ທະ ວີ ການລ້ຽງຫົ່ນພັນຖານ ເພື່ອຮັບໃຊ້ວັດຖຸປະສົງ ດ້ານ ອັ້ນຕົ ນ ໙໙%. ຕ້ອງຕິດຕັ້ງ ລະບົບລຳລຽງອາຍຸ່ມ, ນ້ຳຮ້ອນ, ນ້ຳ ປະປາ ແລະ ລະບົບລະບາຍນ້ຳເປື້ອນເປ ແບບລອມສູນ ຢູ່ ໃນ ຊຶມນະບົດ ໃຫ້ມີ ລະດັບດີກ່ວາເກົ່າ.ເປີດກ້ວາງ ຂອບ ເຂດ ການກໍ່ສ້າງເສັ້ນທາງປູຢາງ ໃນທ້ອງຖິ່ນຕ່າງໆ.

ເສີມຂະຫຍາຍ ພັນຖານຸດສາຫະກຳ ຂອງ ການກໍ່ສ້າງ ຊຶມນະບົດຢ່າງເລັ່ງລັດ. ເພີ່ມທະວີ ການຜະລິດສ່ວນປະກອບ ເຮືອນ ແບບສຳເລັດຮູບ ຊະນິດເບົາ ແລະ ຄົບຊຸດ ອັນມີລະ ດັບ ຮັບປະກັນສູງ.

ສືບຕໍ່ ປະຕິບັດ ການປະກອບເຕັກນິກ ຄົ ນໃໝ່ໃຫ້ແກ່ການ ກະສິກຳ ບົນພັນຖານ ເຕັກນິກ ອັນນຳໜ້າ. ໃນ ຊ່ວໄລຍະ ຫ້າປີ ໃຫ້ຈັດສົ່ງລົດໄຖນາ ຈຳນວນ ๑ ລ້ານ ๗๐ ພັນຄັນ, ລົດຂົນສົ່ງຈຳນວນ ๑ ລ້ານ ๔๕๐ ພັນຄັນ, ລົດເກັບກ່ຽວພົດ

ເມັດ ຈຳນວນ ຝ00 ພັນລົນ ແລະ ອຸປະກອນ ເຕັກນິກ ກະ ເສດ ອື່ນໆ ໄປຮັບໃຊ້ ການກະສິກຳ. ບັນລຸຜົນສຳເລັດ ໃນ ການນຳເອົາ ກົນຈັກ ຄົບຊຸດ ເຂົ້າໄປປະກອບ ໃຫ້ແກ່ ການ ປູກ ຫົວຜັກກາດຫວານ, ຝ້າຍດິບ, ປ່ານເສັ້ນຍາວ, ແລະ ໃນການນຳໃຊ້ ຝຸ່ນທຳມະຊາດ, ຝຸ່ນເກືອ ແລະ ພາຫະນະ ປ້ອງກັນເຄື່ອງປູກຂອງຝ້ງ. ຍົກລະດັບ ການນຳໃຊ້ ກົນຈັກ ເຂົ້າໃນການປູກຜັກ, ມັນຝະລັ່ງ, ຕົ້ນໄມ້ກົນຫມາກ, ແລະ ການນຳໃຊ້ ກົນຈັກ ເຂົ້າໃນ ການຜະລິດອາຫານສັດ ແລະ ຜະລິດຕະພັນ ຂອງ ການລ້ຽງສັດ.

ປັບປຸງ ການນຳໃຊ້ ລົດໄຖນາ, ລົດຕ່າງໆ, ເຄື່ອງ ຈັກ ເກັບກ່ຽວ ແລະ ເຄື່ອງຈັກອື່ນໆ ໃຫ້ດີຂຶ້ນຕື່ມ, ບໍ່ປະປ່ອຍໃຫ້ ລົບ ເຄື່ອງຈັກດັ່ງກ່າວ ອອກຈາກບັນຊີ ກ່ອນກຳນົດ ຕາມ ຫມາຍ. ເພີ່ມທະວີ ຄຸນນະພາບ ໃນການສ້ອມແປງແລະການ ບໍລິການ ອຸປະກອນເຄື່ອງຈັກ ກໍ່ຄື ເພີ່ມທະວີ ການປົກປັກຮັກ ສາ ບໍ່ໃຫ້ເປ່ເພໄວ. ສືບຕໍ່ ປັບປຸງ ແລະ ຈັດແບ່ງງານຢູ່ໃນ ພື້ນຖານ ຂອງ ຂະແຫນງສ້ອມແປງ. ເປີດກ້ວາງການນຳໃຊ້ ຮູບການຕ່າງໆ ອັນກ້າວຫນ້າ ໃນການຈັດຕັ້ງນຳໃຊ້ອຸປະກອນ ເຄື່ອງຈັກ.

ເພີ່ມທະວີ ການຕິດຕັ້ງໄຟຟ້າ ເຂົ້າສູ່ ຊຸມນະບົດຂັ້ນ ๑,๔--๑,๕ ເທື່ອ ເພື່ອຮັບໃຊ້ວຽກງານ ແຮງກະສິກຳ.

ເພີ່ມທະວີ ຄວາມຮັບຜິດຊອບ ຂອງ ບັນດາຜູ້ນຳ ແລະນັກ ວິຊາການ ຢູ່ ສະຖານທີ່ຜະລິດ, ຂອງ ພະນັກງານສະຖາບັນ

ຄົ້ນຄ້ວາ ວິທະຍາສາດ, ຂອງ ບັນດາອົງການຈັດຕັ້ງ ຂອງ ພັກ, ຂອງອຳນາດ ການປົກຄອງ ໂຊວຽດ ແລະ ຂອງ ບັນ ດາອົງການ ກະເສດ ໃນການນຳໃຊ້ ລະບົບ ການຄຸ້ມຄອງ ວຽກງານ ກະສິກຳ ຊຶ່ງມີພື້ນຖານ ວິທະຍາສາດເຂົ້າໃສ່ການ ຜະລິດ. ເພີ່ມທະວີ ປະສິດທິພາບ ຂອງ ວິທະຍາສາດ ການ ກະເສດ, ຫລຸດຜ່ອນກຳນົດເວລາ ໃນການນຳເອົາ ຜົນສຳ ເລັດ ຂອງ ການຄົ້ນຄ້ວາ ວິທະຍາສາດ ເຂົ້າໄປໃສ່ການຜະ ລິດ, ປັບປຸງ ສາຍພັນ ລະຫວ່າງ ວິທະຍາສາດ ກັບການ ຜະລິດ ໃຫ້ໜັ້ນຄົງກ່ວາເກົ່າ.

ເສີມຂະຫຍາຍ ການແບ່ງເຂດຜະລິດ ແລະ ການລວມສູນ ໃນຂະແໜງ ກະສິກຳ ຢ່າງສະເໜີຕົ້ນ ສະເໜີປາຍ ບົນ ພື້ນຖານ ການຮ່ວມມືກັນລະຫວ່າງ ບັນດາອົງການ ຈັດ ຕັ້ງ ຕ່າງໆ ແລະ ການສົມຮ່ວມ ກະສິກຳ-ອຸດສາຫະກຳ.

ຢູ່ໃນສະຫະກອນ ແລະ ນິຄົມກະເສດ ຮັບປະກັນໃຫ້ມີການ ສືບຕໍ່ ເສີມຂະຫຍາຍ ການຜະລິດສຳຮອງ ແບບອຸດສາຫະກຳ ແລະ ຫັດຖະກຳ ເພື່ອປຸງແຕ່ງຜະລິດຕະພັນກະສິກຳ ກໍ່ເພື່ອ ຜະລິດ ວັດຖຸອຸປະກອນກໍ່ສ້າງ ແລະ ຜະລິດສິນຄ້າໃຊ້ສອຍປະ ຈຳວັນ ກ່ອນອື່ນໝົດ ໂດຍອີງໃສ່ ວັດຖຸດິບທ້ອງຖິ່ນ ແລະສິ່ງ ເສດເຫຼືອ ຈາກອຸດສາຫະກຳ.

ປັບປຸງ ການກໍ່ສ້າງພະນັກງານ ວິຊາສະເພາະທົ່ວໄປ ໃຫ້ ດີກ່ວາເກົ່າ ເພື່ອຮັບໃຊ້ການກະສິກຳ, ບຳລຸງຄະນະບໍລິຫານ ຊົນນາງ ຢູ່ສະຫະກອນ ແລະ ນິຄົມກະເສດ ໂດຍການນຳໃຊ້

ນັກວິຊາການ ທີ່ມີຄວາມຊຳນິຊຳນານ.

ເສີມຂະຫຍາຍຄວາມເປັນເອກະລາດ ທາງດ້ານ ເສດຖະ ກິດໃນການເຄື່ອນໄຫວຂອງສະຫະກອນ, ນິຄົມກະເສດ ແລະ ວິສາຫະກິດປະສົມຮ່ວມ.

ດ້ານການປ່າໄມ້ ຮັບປະກັນ ການກ້າວໄປສູ່ລະບົບຄຸ້ມຄອງ ບົ່ມຫຼັກການ ແຫ່ງ ການນຳໃຊ້ໄມ້ ແບບປະຢັດທີ່ສຸດ ແລະຖືກ ຕ້ອງເໝາະສົມ, ຮັບປະກັນ ການປັບປຸງຄຸນນະພາບຂອງໄມ້ ໃຫ້ດີ ຂຶ້ນ, ໃຫ້ດຳເນີນ ການປູກຕົ້ນໄມ້ ຊະນິດ ມີຄຸນຄ່າ ຢູ່ໃນ ເນື້ອທີ່ ບໍ່ໃຫ້ຕ່ຳກວ່າ ๗ ລ້ານ ເຮັກຕາ, ນຳໃຊ້ ບັນ ດາ ວິທີການປູກປ່າໄມ້ ແບບອຸດສາຫະກຳ. ເລີ່ມລົງມື ປະຕິ ບັດ ໂຄງການຄົບຊຸດ ທີ່ມີທິດເລັ່ງ ໃນການກໍ່ສ້າງພື້ນຖານວັດ ຖຸດິບ ກ່ຽວກັບປ່າໄມ້ ອັນເປັນປະຈຳ ຢູ່ ໃນເຂດອຸຮາມພາກ ເອີລົບ ຂອງ ສສສຊ ເພື່ອຮັບໃຊ້ ອຸດສາຫະກຳຜະລິດ ຝຸ່ນ-ເຈ້ຍ ແລະ ເຈ້ຍ ໂດຍອີງໃສ່ ການປູກປ່າໄມ້ ໃນ ບໍລິເວນ ພິເສດປູກຕົ້ນໄມ້.

ເພີ່ມທະວີ ບໍລິມາດ ວຽກງານປູກຕົ້ນໄມ້ ໃສ່ທົ່ງຫຍ້າລ້ຽງ ສັດ ຢູ່ເຂດເຄິ່ງທະເລຊາຍ ໃນອາຊີພາກກາງ ແລະ ກາຊັກ ສະຖານ ເພື່ອແນໃສ່ ເປີດກ້ວາງ ແລະ ປັບປຸງ ພື້ນຖານອາ ຫານສັດ ຮັບໃຊ້ການລ້ຽງແກະ.

ຢູ່ໃນບັນດາຂະແໜງ ຂອງ ອຸດສາຫະກຳປຸງແຕ່ງອາຫານ ໃຫ້ ເພີ່ມທະວີ ການຜະລິດ ຂຶ້ນ ๘๓-๘๗%. ເສີມ ຂະ ຫຍາຍ ໃນຈັງຫວະ ອັນສູງ ການຜະລິດອາຫານສຳເລັດຮູບ,

ອາຫານເຮັດດ້ວຍມັນຝະລັ່ງ, ເຮັດດ້ວຍຫມາກໄມ້ແລະຜັກສົດ ທີ່ຮັກສາໄວ້ນ້ຳກ້ອນ, ຮັບປະກັນ ເສີມຂະຫຍາຍ ການຜະລິດ ອາຫານດັກນ້ອຍ ແລະ ອາຫານສຳລັບຄົນເຈັບ ໃຫ້ໄປກ່ອນ ກ້າວນຶ່ງ.

ປັບປຸງ ໃຫ້ອາຫານ ມີຄຸນນະພາບດີຂຶ້ນ ແລະ ມີຫລາຍຊະນິດ ກ່ວາເກົ່າ, ເພີ່ມທະວີການຜະລິດອາຫານຊະນິດທີ່ມີທາດ ໂປຣເຕອິນ ສູງ, ວິຕາມິນ ແລະ ພາກສ່ວນ ປະກອບ ອື່ນໆ ແນວເປັນປະໂຫຍດ ແກ່ຮ່າງກາຍ. ເພີ່ມທະວີ ການ ຜະລິດ ສິນຄ້າ ທີ່ເຮັດເປັນຫໍ່ ຕາມນ້ຳຫນັກສະເພາະ, ເປີດກ້ວາງ-ການນຳໃຊ້ ວັດຖຸຫຸ້ມຫໍ່ ຊະນິດໃຫມ່ ທີ່ຮັບປະກັນ ການປົກປັກ ຮັກສາໄວ້ໄດ້ຍາວນານ ແລະ ຮັບປະກັນ ເຮັດໃຫ້ຫລຸດ ຜ່ອນ ການຕົກເຮ່ຽເສ່ຽຫາຍ ຂອງ ສະບຽງອາຫານ.

ຍົກສູງ ການປຸງແຕ່ງແບບຄົບຊຸດໃຫ້ຟາຍ, ປັບປຸງການນຳ ໃຊ້ວັດຖຸດິບກະສິກຳໃຫ້ດີກ່ວາເກົ່າ. ນຳເອົາເຂົ້າໃຊ້ຮູບແບບ ຊະນິດລຽນຕິດແລະລະບົບການຜະລິດແບບທະວີສູນ. ປະຕິບັດ ການນຳໃຊ້ ວິທີຄົ້ນເອົານ້ຳມັນ ໂດຍກົງ ຢູ່ໃນການຜະລິດນ້ຳ ຜົດ, ວິທີຂ້າເຊື້ອ ໃນການເອົາຫມາກໄມ້ ແລະ ຜັກເຂົ້າກະ ປ໋ອງ, ວິທີການ ສາຍກົນຈັກຄົບຊຸດ ເຂົ້າໃນຊຸດສາທະກຳຊົ້ນ ແລະ ນ້ຳນົມ, ວິທີການຂົນສົ່ງວັດຖຸດິບ ແລະ ຜະລິດ ຕະພັນ ໂດຍບໍ່ຕ້ອງການຫຸ້ມຫໍ່ ແລະວິທີການບັນຈຸໃສ່ກົງແຕເນີ.

ເປີດກ້ວາງ ຢ່າງສຸດຂີດ ການຫັນເອົາຊຸດສາທະກຳ ປຸງ ແຕ່ງໄປເຮັດຫນ້າທີ່ຮັບເອົາສັດຕ່າງໆ, ນ້ຳນົມ, ຫມາກໄມ້

ແລະ ຜັກ ຢູ່ກັບບ່ອນຜະລິດ ແລະ ຈັດສົ່ງວັດຖຸ ສຳເລັດຮູບ ດ້ວຍພາຫະນະຂົນສົ່ງ ຂອງ ອົງການຮັບຜິດຊອບ.

ຮັບປະກັນ ຂະຫຍາຍ ອຸດສາຫະກຳ ທຳຄວາມເຢັນ ຢ່າງ ຄົບວຸດ, ເປີດກ້ວາງການນຳໃຊ້ຄວາມເຢັນວິທະຍາສາດ ໃນ ເວລາປຸງແຕ່ງ ແລະ ເກັບມ້ຽນຜະລິດຕະພັນ ກະສິກຳ.

ຍົກສູງ ປະສິດທິພາບ ຂອງ ແຮງງານ ຢູ່ໃນ ອຸດສາຫະກຳ ປຸງແຕ່ງອາຫານ ຂັ້ນອົກ ๘๑-๘๓%, ຢູ່ໃນ ອຸດສາຫະກຳຊົ້ນ ແລະ ນ້ຳນົມ - ๘๗-๘๙%.

<u>ຢູ່ໃນອຸດສາຫະກຳຜະລິດແປ້ງແລະຫົວອາຫານສັດ</u>, ເພີ່ມ ທະວີ ການຜະລິດ ແປ້ງປະເພດດິເລິດ ຂັ້ນປະມານ ๘๔-๘๗%, ການຜະລິດຫົວອາຫານສັດ ຢູ່ໃນ ວິສາຫະກິດອຸດສາ ຫະກຳ ຂອງ ລັດ ຂັ້ນ ๑๓-๑๕%, ການຜະລິດທາດປໂຣຕ ອົນ ແລະ ວິຕາມິນ ເພີ່ມຂັ້ນຕົ້ນ ๘ ເທົ່ອ. ຕ້ອງຕິດຕັ້ງອຸປະ ກອນ ເຕັກນິກ ຄົ້ນໃຫມ່ ຢ່າງເລັ່ງລັດ ໃຫ້ແກ່ ອຸດສາຫະກຳ ໂມ້ແປ້ງ ຂະນິດຄົບວຸດ ທັນ ປະສິດທິພາບສູງເຂົ້າໄປປະກອບ ໃຫ້ແກ່ ອຸດສາຫະກຳຂະແຫນງນີ້.

ໃຫ້ເລີ່ມ ນຳໃຊ້ສາງເກັບມ້ຽນ ພືດເມັດ ທັນ ຄວາມ ສາ ມາດ ບັນຈຸລວມໄດ້ ๘๐ ລ້ານໂຕນ ແລະກ່ອນປີນຫນຶ່ງ ແມ່ນ ຢູ່ໃນເຂດ ທີ່ເປັນ ຢູ່ເຂົ້າໃຫຍ່.

ເພີ່ມທະວີ ການກໍ່ສ້າງ ໂຮງງານ ອົບພືດເມັດ ຢູ່ໃນເຂດ ປູກເອກຕາເວັນ, ສາລີແລະເຂົ້າ ໃນຈັງຫວະ ອັນເລັ່ງລັດ.

<u>ຢູ່ໃນອຸດສາຫະກຳ ຈຸນລະອຸບວິທະຍາ</u>, ປະຕິບັດ ມາດຕະ

ການຕ່າງໆ ທີ່ແມ່ໃສ່ ຂະຫຍາຍ ການຜະລິດ ຢ່າງ ເລັ່ງລັດ ບົ່ມພົ້ນຖາມ ການສັງເຄາະສັງທາງ ຈຸນລະຊີບວິທະຍາ, ຮັບ ປະກັນ ເຮັດໃຫ້ ການຜະລິດເພີ່ມຂຶ້ນ ๑,๒-๑,๙ ເທ່ອ.

ເພີ່ມທະວີ ການຜະລິດ ອາຫານ ທີ່ມີ ທາດ ໂປຣເຕອິນ ແລະ ລິຊຶ ຈຸນລະຊີບວິທະຍາ ອອກເປັນ ສິນຄ້າ, ເພີ່ມທະ ວີການຜະລິດ ຢາຕ້ານເຊື້ອ, ວິຕາມິນ ເພື່ອຮັບໃຊ້ ໃນ ພະ ແນກ ສັດຕະວັດແພດ ແລະ ໃນອາຫານສັດ, ເພີ່ມທະວີການ ຜະລິດພາຫະນະ ຈຸນລະຊີບ ເພື່ອປ້ອງກັນ ພືດພັນ, ແລະ ເພີ່ມທະວີ ການປຸງແຕ່ງການມ່າເຊື້ອ, ການຜະລິດ ຫົວ ອາ ຫານປະສົມຝຸ່ນເຊື້ອໂລກ ແລະ ຜະລິຕະພັນ ຈາກ ການ ສັງ ເຄາະ ຈຸນລະຊີບ ອື່ນໆ.

ເພີ່ມປະສິດທິພາບ ຂອງ ແຮງງານ ຂຶ້ນ ๓๒-๔๘%.

VI

ການເສີມຂະຫຍາຍການອົບສົ່ງ

ແລະ ການໂຫລະຄົມມະນາຄົມ

ໜ້າທີ່ຕົ້ນຕໍ ຂອງການອົບສົ່ງ ແມ່ນເຮັດແນວໃດ ຕອບສະ ໜອງຄວາມຮຽກຮ້ອງຕ້ອງການ ຂອງເສດຖະກິດ ແຫ່ງຊາດ ແລະຂອງປະຊາຊົນ ໃນການອົບສົ່ງ ຢ່າງເຕັມສ່ວນ ແລະທັນ ເວລາ, ຍົກສູງສະມັດຖະພາບ ແລະຄຸນນະພາບ ຂອງ ວຽກ ງານ ໃນລະບົບການອົບສົ່ງ. ເພື່ອວັດຖຸປະສົງດັ່ງກ່າວ:

ປັບປຸງການຈັດຕັ້ງຂະບວນວິວັດ ການອົບສົ່ງ ແລະການຄຸ້ມ ຄອງຂະບວນດັ່ງກ່າວໃຫ້ດີຂຶ້ນ;

ຍົກສູງ ລະດັບການນຳໃຊ້ ແລະລະດັບການຮັບປະກັນຂອງ ພາຫະນະ ເຕັກນິກ ການອົບສົ່ງ;

ປັບປຸງການປະສານສົມທົບວຽກງານ ລະຫວ່າງທຸກປະເພດ ການອົບສົ່ງ, ແລະການປະສົມປະສານກັບຂະແໜງການອື່ນໆ ໃນເສດຖະກິດແຫ່ງຊາດ, ນຳໃຊ້ເຕັກໂນໂລຊີ ອັນ ນຳໜ້າ ທີ່ສຸດ ເຂົ້າໃນການຄົມມະນາຄົມ ແບບປະສົມ;

ຮັບປະກັນ ສືບຕໍ່ປັບປຸງການວາງແຜນ ການຂົນສົ່ງ ໃຫ້ດີຂຶ້ນ, ລົບລ້າງການຂົນສົ່ງເຄື່ອງຂອງແລະສິນຄ້າ ທີ່ສວນທາງກັນ, ການຂົນສົ່ງໄປໃນໄລຍະໄກເກີນຄວນ ແລະ ການຂົນສົ່ງອື່ນໆ ທີ່ມັກສະມະຟຸມເຟືອຍ, ຫລຸດຜ່ອນການໃຊ້ຈ່າຍຄ່າຂົນສົ່ງ ທົ່ວໆ ໄປ ແລະຄ່າຂົນສົ່ງເຄື່ອງຂອງສິນຄ້າ ແລະ ຜູ້ໂດຍສານ;

ປັບປຸງພື້ນຖານ ວັດຖຸແລະເຕັກນິກຂອງການຂົນສົ່ງ, ເລັ່ງລັດການນຳໃຊ້ ເຕັກນິກໃຫມ່, ເຕັກໂນໂລຊີ ອັນ ກ້າວໜ້າ ແລະ ລະບົບຄຸ້ມຄອງ ແບບອັດຕາໂນມັດ, ຍົກສູງລະດັບການນຳໃຊ້ ກົນຈັກ ແບບຄົບຊຸດເຂົ້າໃນວຽກງານ ຄຽມຖ່າຍແລະສ້ອມແປງ;

ປັບປຸງໂຄງປະກອບ ຂອງພາຫະນະຂົນສົ່ງ ທາງບົກ ແລະ ພາຫະນະຂົນສົ່ງທາງນ້ຳ ໃຫ້ດີກ່ວາເກົ່າ ໂດຍການຮັບປະກັນຈັດແບ່ງງານ ໃຫ້ລົງເລິກກ່ວາເກົ່າ;

ເປີດກ້ວາງຂົງເຂດ ການນຳໃຊ້ພາຫະນະຊະນິດໃຫມ່ ໃນການຂົນສົ່ງເຄື່ອງຂອງສິນຄ້າ ຢູ່ໃນທົດເຫນືອ ຂອງປະເທດ, ກໍຄື ໃນການສົ່ງຜູ້ໂດຍສານ ຢູ່ໃນຕົວເມືອງ ແລະ ເຂດນອກເມືອງ;

ເລັ່ງລັດ ການຂະຫຍາຍ ລະບົບຂົນສົ່ງ ໂດຍການໃຊ້ ກົງແຕເນີ, ເປີດກ້ວາງການຂົນສົ່ງທີ່ເຄື່ອງຂອງສິນຄ້າ ແລະສິນຄ້າຫ້ຍ່ອຍ ເພື່ອບັນຈຸເຂົ້າ ກົງແຕເນີ, ແລະເພີ່ມຕ່ານ້ຳງສູນພິເສດ ທີ່ປະກອບດ້ວຍ ອຸປະກອນ ເພື່ອຄຽມຖ່າຍ ກົງແຕເນີ

ແລະ ຫົບໍ່ຕ່າງໆ;

ຕ້ອງປັບປຸງ ລະບົບບໍລິການຜູ້ໂດຍສານ ໃນການຂົນສົ່ງແຕ່ ລະຊະນິດ ໃຫ້ດີກ່ວາເກົ່າ;

ໃຫ້ມີ ຄວາມປອດໄພ ໃນການສົນຈອນຫລາຍຂຶ້ນແລະຕ້ອງ ຫລຸດຜ່ອນ ການເຮັດໃຫ້ສະພາບແວດລ້ອມ ເປື້ອນເປິະ ຍ້ອນ ພາຫະນະຂົນສົ່ງ;

ປັບປຸງ ອົງການຮັບຜິດຊອບ ການຂົນສົ່ງ ລະຫວ່າງ ປະ ເທດ ໃຫ້ດີ ຂຶ້ນ;

ປະຕິບັດ ບັນດາມາຕະການ ທີ່ແນໃສ່ຫລຸດຜ່ອນກຳນົດເວ-ລາ ໃນການຂົນສົ່ງ ໄປເຖິງຈຸດໝາຍປາຍທາງ ແລະຮັບປະ ກັນ ບໍ່ໃຫ້ເຄື່ອງຂອງສິນຄ້າຕົກເຮ່ຍເສັຽຫາຍ.

<u>ດ້ານການຂົນສົ່ງທາງລົດໄຟ</u> ໃຫ້ປະຕິບັດການປະກອບຕັກ ນິກຄົນໃໝ່, ຮັບປະກັນການສືບຕໍ່ເພີ່ມທະວີ ລະດັບຄວາມສາ ມາດ ໃນການຂົນສົ່ງ ແລະໃນການຮັບເອົາລົດໄຟ ຂອງເສັ້ນ ທາງລົດໄຟ ຢູ່ຕາມທິດ ບ່ອນທີ່ມີການຂົນສົ່ງເຄື່ອງຂອງສິນຄ້າ ຢ່າງໜັກໜ່ວງ, ກໍຄືຂະຫຍາຍກຳລັງແຮງຂອງສະຖານນີ້ລົດ ໄຟ ແລະສະຖານນີ ບ່ອນຮັບທາງລົດໄຟຫຼາຍສາຍ.

ເພີ່ມທະວີ ຄວາມອາດສາມາດສົ່ງສິນຄ້າ ຕາມ ເສັ້ນທາງ ຂົນສົ່ງ ທີ່ກຳນົດໄວ້ ແລະ ນັບຖືເວລາຕາມ ຕາຕະລາງ ໃນ ການສົນຈອນ ໄປມາ ຂອງລົດໄຟ. ປັບປຸງການນຳໃຊ້ຫົວຈັກ ລົດໄຟ ແລະ ຕູ້ລົດໄຟ ໃຫ້ດີກ່ວາເກົ່າ. ເລັ່ງລັດ ປະກອບ ລະບົບ ລູກລໍ້ກົງ ໃສ່ຂະບວນຕູ້ລົດໄຟ.

ແຕ່ປີ ໑໙໗໑-໑໙໗໕ ຕ້ອງລົງມື ກໍ່ສ້າງ ເສັ້ນທາງລົດໄຟ ສາຍສຳຮອງ ບໍ່ໃຫ້ຕ່ຳກ່ວາ ๕.๐๐๐ ກິໂລແມັດ, ຕ້ອງເຮັດ ໃຫ້ ມີໄຟຟ້າໃຊ້ ເສັ້ນທາງລົດໄຟ ຍາວກ່ວາ ๗.๐๐๐ ກິໂລ ແມັດ ແລະປະກອບລະບົບງັດ ແບບອັດຕາໂນມັດ ແລະລະບົບ ບັນຊາຄຸ້ມຄອງ ທາງລົດໄຟ ແບບລວມສູນ ໃຫ້ໄດ້ຫລາຍກ່ວາ ๑๕ ພັນ ກິໂລແມັດ, ກໍ່ສ້າງເສັ້ນທາງລົດໄຟ ສາຍໃໝ່ ໃຫ້ ໄດ້ ບໍ່ຕ່ຳກ່ວາ ๗.๗๐๐ ກິໂລແມັດ. ຕ້ອງເປີດການສັນຈອມ ຕະຫລອດເສັ້ນທາງລົດໄຟ ບາຍການ-ອາມູ ຣ.

ປັບປຸງພັ້ນຖານ ບ່ອນສ້ອມແປງ ແລະກໍ່ສ້າງ ຂອງການຂົນ ສົ່ງທາງລົດໄຟ.

ເພີ້ມທະວີ ການຈໍລະຈອມເຄື່ອງຂອງສິນຄ້າ ດ້ວຍທາງລົດ ໄຟ ຂັ້ນ ๑๔-๑๕% ແລະ ເພີ້ມການຈໍລະຈອມຜູ້ໂດຍສານຂັ້ນ ๗%, ເພີ້ມປະສິດທິພາບ ຂອງແຮງງານ ຂັ້ນຕົ້ນ ๑๐-๑๔%.

<u>ດ້ານການຂົນສົ່ງທາງທະເລ</u> ຕ້ອງປັບປຸງ ການນຳໃຊ້ເຮືອ ກຳປັ່ນ ໃຫ້ດີກ່ວາເກົ່າ, ປັບປຸງບັນດາທ່າເຮືອ ແລະ ໂຮງ ງານສ້ອມແປງກຳປັ່ນ, ປັບປຸງການຈັດຕັ້ງການ ຂົນສົ່ງເຄື່ອງ ຂອງສິນຄ້າ ແລະຜູ້ໂດຍສານ, ເພີ້ມທະວີ ຄວາມອາດສາມາດ ຂອງບໍລິການຂາອອກ.

ຕ້ອງເຮັດໃຫ້ ການຂົນສົ່ງທາງນ້ຳ ມີເຮືອກຳປັ່ນພິເສດຕື່ມ ອີກ: ເຮືອບັນທຸກ ກ໊ວແຕເນີ, ເຮືອສົ່ງສິນຄ້າໃຫ້ ກຳ ປັ່ນ ໃຫຍ່, ເຮືອບັນທຸກລົດໄຟ, ກຳປັ່ນທີ່ໃຊ້ ຢູ່ໃນເຂດມະຫາສະ ໝຸດ ອັກຕິກ ແລະກຳປັ່ນ ຜ່ານ້ຳກ້ອນ. ເລ່ມຕົ້ນປະກອບກຳ

ປັ່ນຂົນສົ່ງ ແລ່ນດ້ວຍຈັກ ປະລະມານ.

ຮັບປະກັນ ໃຫ້ມີການເດີນເຮືອຕະຫຼອດປີ ຢູ່ໃນ ເຂດ ຕາ ເວັນຕົກ ໃນທາງເດີນເຮືອ ຢູ່ທະເລເໜືອ ແລະການຂົນສົ່ງ ເຄື່ອງຂອງສິນຄ້າ ອັນຈຳເປັນ ໄປສູ່ເຂດພາກເໜືອສຸດແລະ ເຂດພາກຕາເວັນອອກໄກ ໃຫ້ໄດ້ຢ່າງທັນເວລາ.

ເພີ່ມທະວີກຳລັງແຮງຂອງບັນດາທ່າເຮືອ ແລະວິສາຫະກິດ ສ້ອມແປງກຳປັ່ນ.

ເພີ່ມທະວີການຈໍລະຈອມສິນຄ້າທາງທະເລຂັ້ນຕົ້ນ ຕ-ວ%.

<u>ດ້ານການຂົນສົ່ງທາງແມ່ນ້ຳລຳເຊ</u>, ຕ້ອງປັບປຸງ ພົ້ນຖານ ວັດຖຸ ແລະເຕັກນິກ ໃຫ້ໜັກແໜ້ນ, ກ່ອນອື່ນໝົດໃຫ້ປັບປຸງ ຢູ່ເຂດ ສ໐ຣ, ພາກຕາເວັນອອກໄກ ແລະພາກເໜືອ ເພື່ອ ຮັບປະກັນ ການຂົນສົ່ງເຄື່ອງຂອງສິນຄ້າ. ຢູ່ບ່ອນໃດ ທີ່ ມີ ເງື່ອນໄຂເໝາະສົມ ໃຫ້ປ່ຽນການຂົນສົ່ງ ທາງລົດໄຟ ມາ ເປັນການຂົນສົ່ງ ທາງແມ່ນ້ຳລຳເຊ ໃຫ້ໄດ້ຫລາຍທີ່ສຸດ; ຢູ່ ຕາມທາງເດີນເຮືອສາຍໃຫຍ່ ໃຫ້ເພີ່ມເວລາ ການເດີນເຮືອ ອອກຕື່ມ.

ອຸກຍູ ໃຫ້ບັນດາທ່າເຮືອ ຢູ່ຕາມແມ່ນ້ຳລຳເຊ ມີຄວາມສາ ມາດ ໃນການຮັບແລະສົ່ງ ສິນຄ້າຫລາຍຂັ້ນ ໂດຍນຳເອົາກຳ ປັ່ນບັນທຸກຂະໜາດໃຫຍ່ ແລ່ນດ້ວຍຈັກ ດີແຊມ,ກຳປັ່ນທີ່ແລ່ນ ໄດ້ ທັງໃນທະເລ ແລະແມ່ນ້ຳລຳເຊ, ເຮືອລາກ, ເຮືອບັນ ທຸກຂະໜາດໜັກ, ກຳປັ່ນຜ່ານ້ຳກ້ອມ, ກຳປັ່ນໂດຍສານ ທີ່ ສະດວກສະບາຍ ມາປະກອບຕື່ມ. ເສີມຂະຫຍາຍ ພົ້ນ ຖານ

ຂອງການສ້ອມແປງ ພາຫະນະຂົນສົ່ງ ທາງນ້ຳ.

ເພີ່ມທະວີການຈໍລະຈອນເຄື່ອງຂອງສິນຄ້າໂດຍທາງແມ່ນ້ຳ ລຳເຊ ຂັ້ນຕ່ຳ ๑๗-๘๐%.

ເສີມຂະຫຍາຍ<u>ການຂົນສົ່ງທາງທໍ່</u> ຢ່າງເລັ່ງລັດ ໂດຍສະເພາະ ແມ່ນເພື່ອຂົນສົ່ງຜະລິດຕະພັນນ້ຳມັນດິບ, ນ້ຳມັນດິບ ແລະ ອາຍທຳມະຊາດ.

ປັບປຸງ ຄຸນນະພາບ ຂອງສິ່ງກໍ່ສ້າງ ເພື່ອການຂົນສົ່ງທາງທໍ່ ແລະຮັບປະກັນ ໃຫ້ມັນແລ່ນຮັບໃຊ້ ຢ່າງສະດວກດີ.

ຕ້ອງປະຕິບັດບັນດາມາດຕະການ ທີ່ແນໃສ່ເພີ່ມທະວີຄວາມອາດສາມາດ ຂອງທໍ່ສົ່ງ ອາຍທຳມະຊາດ ທີ່ສ້າງຂັ້ນໃຫມ່ໃຫ້ໄດ້ຫລາຍກ່ວາເກົ່າ, ຕິດຕັ້ງ ລະບົບອັດຕາໂນມັດໃສ່ສະຖານີ ດູດອາຍທຳມະຊາດ.ຄົ້ນຄ້ວາແລະນຳໃຊ້ເຕັກໂນໂລຊີ ທ່ອນຸມັດ ໃຫ້ກໍ່ສ້າງທໍ່ສົ່ງໄດ້ຕະຫລອດປີ ຢູ່ໃນເຂດທີ່ອາດເສັ້ນທາງຄົມມະນາຄົມ ແລະ ປະກອບດ້ວຍເງື່ອນໄຂທຳມະຊາດ ແລະ ດິນຟ້າອາກາດອັນສັບສົນ.

ດ້ານ<u>ການຂົນສົ່ງທາງລົດ</u>, ຕ້ອງຮັບປະກັນ ສືບຕໍ່ປັບປຸງພົ້ນຖານ ວັດຖຸແລະເຕັກນິກ ແລະຂະຫຍາຍການຂົນສົ່ງຮັບໃຊ້ທົ່ວໄປ ໃຫ້ໄປກ່ອນກ້າວນຶ່ງ. ສືບຕໍ່ ທ້ອນໂຮມເອົາພາຫະນະຂົນສົ່ງ ເຂົ້າເປັນ ວິສາຫະກິດຂະຫນາດໃຫຍ່, ປັບປຸງ ການບໍລິການ ເຕັກນິກ ແລະການສ້ອມແປງ ໃຫ້ດີກ່ວາເກົ່າ. ປັບປຸງພົ້ນຖານ ອູ່ສ້ອມແປງພາຫະນະຍວດຍານຂົນສົ່ງ ແລະ ປັບປຸງລະບົບອຸປະກອນຂອງມັນ ໃຫ້ດີກ່ວາເກົ່າ.

ປັບປຸງໂຄງປະກອບຂອງລົດທີ່ມີຢູ່ປັດຈຸບັນໃຫ້ດີຂຶ້ນຕື່ມ, ໃນນັ້ນໃຫ້ຍົກອັດຕາສ່ວນຂອງລົດ ທີ່ມີຄວາມສາມາດ ບັນທຸກ ໄດ້ຫລາຍ, ລົດປະເພດຮັບໃຊ້ວຽກງານສະເພາະແລະລົດບັນທຸກ ຂະໜາດນ້ອຍ. ຮັບປະກັນ ສືບຕໍ່ເພີ່ມທະວີ ການຂົນສົ່ງແບບ ລວມສູນ, ເປີດກ້ວາງການນຳໃຊ້ລົດບັນທຸກ ທີ່ປະກອບ ມີເຄື່ອ ມອກຫລາຍຄັນ ແລະລົດປະເພດເຄື່ອງ ເຄື່ອນອກ ກ່ອນອື່ນ ໝົດ ເພື່ອຮັບໃຊ້ການຂົນສົ່ງ ລະຫວ່າງ ເມືອງຕໍ່ເມືອງ.

ປັບປຸງການຈັດຕັ້ງວຽກງານຂົນສົ່ງຜູ້ໂດຍສານທາງລົດຢູ່ໃນ ຕົວເມືອງແລະຊຸມນະບົດ ໃຫ້ດີກ່ວາເກົ່າ. ຍົກສູງລະດັບການ ແລ່ນລົດເມ ໃຫ້ເປັນປົກກະຕິ ແລະ ເລື້ອຍໆ.

ເພີ່ມທະວີ ການຈໍລະຈອນຂອງລົດຂົນສົ່ງຮັບໃຊ້ທົ່ວໄປ ຂຶ້ນ ๑,๗-๑,๘ ເທື່ອ ແລະການຈໍລະຈອນຜູ້ໂດຍສານຂອງລົດເມ ຂຶ້ນ ๑๒-๑๕%.

ຕ້ອງຄຳນຶງເຖິງການຂະຫຍາຍ ຕາມ່າງຖະໜົນ ສາຍສຳ ຄັນ ໃຫ້ ຢ່າງເລັ່ງລັດ. ເປີດກ້ວາງການກໍ່ສ້າງ ຖະໜົນຫົນ ທາງ ຢູ່ໃນຊຸມນະບົດ ໃຫ້ຕິດຕໍ່ກັບບ້ານໃຫຍ່ໆຂອງເຂດ, ຂອງ ສະຫະກອນ ແລະນິຄົມກະເສດກັບຖະໜົນສາຍສຳຄັນ ອື່ນໆ. ປັບປຸງຄຸນນະພາບຂອງການກໍ່ສ້າງ, ການສ້ອມແປງແລະການ ບົວລະບັດຮັກສາເສັ້ນທາງ ໂດຍການເອົາໃຈໃສ່ ເປັນພິເສດ ຕໍ່ການຍົກສູງຄວາມປອດໄພ ໃນການສັນຈອນ.

<u>ດ້ານການຂົນສົ່ງທາງອາກາດ</u>, ສືບຕໍ່ເສີມ ຂະຫຍາຍ ຕາ ມ່າງສະໜາມບິນຢູ່ຕາມສານການບິນສາຍສູນກາງ ແລະສາຍ

ທ້ອງຖິ່ນ ໂດຍການປະກອບ ພາຫະນະອັນທັນສະໄໝ ແລະ ການນຳໃຊ້ກົນຈັກ ແລະອັດຕາໂນມັດເຂົ້າໃສ່ວຽກງານຂົນສົ່ງ ແລະການບໍລິການຍົນ, ສືບຕໍ່ ການກໍ່ສ້າງ ແລະການດັດສ້າງ ຄົນໃໝ່ ໂຮງງານສ້ອມແປງ ແລະພັນຖານເຕັກນິກ ການບິນ ໃຫ້ແກ່ການບິນພົນລະເຮືອນ ໂດຍສະເພາະ ຢູ່ໃນ ເຂດພາກ ເໜືອ, ສືບຣ ແລະ ພາກຕາເວັນອອກໄກ.

ປະຕິບັດບັນດາມາດຕະການ ທີ່ແນໃສ່ ຫລຸດຜ່ອນ ການໃຊ້ ນ້ຳມັນເຊື້ອເພີ້ງ ໃຫ້ໄດ້ຫລາຍທີ່ສຸດ ດ້ວຍການນຳໃຊ້ ອຸປະ-ກອນ ເຕັກນິກການບິນ ຢ່າງຖືກຕ້ອງ, ຫລຸດຜ່ອນ ການເສັຽ ຫາຍເຊື້ອເພີ້ງ ກໍ່ເພີ່ມທະວີ ລະດັບປະຢັດ ຂອງ ເຄື່ອງຈັກ ຍົນ, ປັບປຸງ ດ້ານນ້ຳໜັກ ແລະຮູບສົ່ມ ລັກສະນະທາງການ ບິນຂອງຍົນ ແລະ ເອລີກັບເຕີ ໃຫ້ດີກ່ວາເກົ່າ.

ຄາດຄະເນການນຳໃຊ້ລະບົບການບັນຊາຍົນຢູ່ເທິງອາກາດ ແລະໜ້າດິນ ແລະການນຳໃຊ້ ອຸປະກອນວິທະຍຸສື່ສານ ເຕັກ ນິກ ທີ່ຣັບປະກັນ ໃຫ້ແກ່ການນຳໃຊ້ລະບົບອັດຕາໂນມັດ ເຂົ້າ ໃນການຄຸ້ມຄອງການສັນຈອນທາງອາກາດ, ການຂົ້ນແລະລົງ ຂອງຍົນ ແລະທົ່ງຍົກສູງລະດັບຄວາມເປັນປົກກະຕິແລະຄວາມ ປອດໄພຂອງການບິນ.

ເພີ່ມທະວີ ການຈໍລະຈອນ ຜູ້ໂດຍສານ ຂົ້ນປະມານ ๑,๗ ເທົ່ອ.

<u>ດ້ານການຂົນສົ່ງອຸດສາຫະກຳ</u>, ເພີ່ມທະວີຈົ່ງຫວະໃນການ ດັດສ້າງຄົນໃໝ່ ແລະປະກອບເຕັກນິກຄົນໃໝ່, ປັບປຸງການ

ນຳໃຊ້ຍາຍພາຫະນະໃຫ້ດີກ່ວາເກົ່າ, ສູ້ຊົນ ໃຫ້ກ້າວໄປເຖິງ ການເຂົ້າຈັງຫວະກັນດີ ລະຫວ່າງການຂົນສົ່ງ ເຄື່ອງຂອງສົ່ນ ຄ້າຂົ້ນລົດ ແລະ ລົງລົດ.

ຕ້ອງຂະຫຍາຍ ອົງການທີ່ດຳເນີນກິດຈະການ ແລ້ວ ແລະ ທີ່ພວມກໍ່ສ້າງຂົ້ນໃຫມ່ ໃຫ້ຮັບຜິດຊອບການຂົນສົ່ງ ທາງລົດໄຟ ລະຫວ່າງ ຂະແໜງຊຸດສາຫະກຳ.

ເລັ່ງລັດ ນຳໃຊ້ພາຫະນະຂົນສົ່ງ ຊະນິດແລ່ນລຽນຕິດແລະ ຊະນິດພິເສດ ແນວໃຫມ່ ເຊັ່ນ: ການຂົນສົ່ງດ້ວຍສາຍພານ, ກົງແຕເນີ ທີ່ແລ່ນດ້ວຍກຳລັງດັນ ຂອງອາກາດ,ຂອງນ້ຳແລະ ອົ່ນໆ ໂດຍສະເພາະ ຢູ່ໃນຊຸດສາຫະກຳ ຊຸດຄົ້ນແຮ່ ແລະຊຸດ ສາຫະກຳເຄມີ ກົລ ຢູ່ໃນວິສາຫະກິດ ຂອງຊຸດສາຫະກຳ ວັດ ຖຸປະກອນກໍ່ສ້າງ.

ຮັບປະກັນຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງ ເສດຖະກິດແຫ່ງຊາດ ແລະຂອງປະຊາຊົນ ກ່ຽວກັບ ການບໍລິ ການ ໂທລະຄົມມະນາຄົມ ຢ່າງເຕັມສ່ວນ ກ່ວາເກົ່າ, ພ້ອມ ທັງຍົກສູງຄຸນນະພາບ ໃນການບໍລິການ.

ສືບຕໍ່ ກໍ່ສ້າງຕາມ່າງ ໂທລະຄົມມະນາຄົມອັດຕາໂນມັດ ທີ່ ເປັນເອກະພາບ ໃນທົ່ວປະເທດ ບົນພື້ນຖານແຫ່ງການນຳໃຊ້ ລະບົບ ສີ່ສານ ອັນນຳໜ້າ, ເສີມຂະຫຍາຍ ໂທລະພາບສີ ແລະວຽກງານວິທະຍຸກະຈາຍສຽງ ແບບສຽງ ສະເຕເຣໂອ. ນຳໃຊ້ ດາວທຽມ ຢ່າງກ້ວາງຂວາງ ໃນການກະຈາຍໂທລະ ພາບ ແລະວິທະຍຸ ແບບມີຫລາຍລາຍການ, ໃນການຕິດຕໍ່ໂທ

ລະສັບ ກັບເຂດຫ່າງໄກ, ໃນການສົ່ງເມື້ອໃນໜ້ງສືພິມ ສູນ
ກາງ ດ້ວຍວິທີການສົ່ງຮູບທາງໄກ (ແບບໂທລະພາບ).

ໃນຕະຫຼອດໄລຍະຫ້າປີເພີ່ມທະວີລວງຍາວຂອງສາຍໂທລະ
ສັບ ຕິດຕໍ່ ລະຫວ່າງຕົວເມືອງຂັ້ນປະມານ ໑,໒ ເທື່ອ, ຈຳ
ນວນຫມ່ອຍໂທລະສັບ ຢູ່ໃນຕົວເມືອງ ແລະຊຸມນະບົດໃຫ້ເພີ່ມ
ຂັ້ນ ໑,ມ ເທື່ອ ຊຶ່ງໃນນັ້ນ ເພີ່ມຈຳນວນຫມ່ອຍໂທລະສັບໄປ
ຕິດຕັ້ງ ໃຫ້ປະຊາຊົນ ໑,໔ ເທື່ອ.

ຍົກສູງລະດັບການປະກອບກົນຈັກ ແລະ ລະບົບ ອັດຕາໂມ
ມັດ ເຂົ້າໃນວຽກງານການໄປສະນີ, ເພີ່ມທະວີບໍລິມາດການ
ຂົນສົ່ງ ທາງໄປສະນີ ແລະ ການຂົນສົ່ງພະລິດຕະພັນການພິມ
ຈຳຫນ່າຍ ໃຫ້ໄດ້ຢ່າງຫລວງຫລາຍ ໂດຍການນຳໃຊ້ ກົງແຕ
ເນ, ກົດ ເພີ່ມທະວີບໍລິມາດສິນຄ້າ ທີ່ສົ່ງຜ່ານທາງໄປສະນີ.

VII

ການກໍ່ສ້າງພື້ນຖານ

ໜ້າທີ່ຕົ້ນຕໍ ຂອງການກໍ່ສ້າງ ແມ່ນຮັດແນວໃດ ເພີ່ມທະ ວີ ເຫງົ້າພະລັງ ການຜະລິດຂອງປະເທດຊາດ ບົນ ພື້ນຖານ ເຕັກນິກ ອັນໃຫມ່, ກໍ່ສ້າງເຮືອນຢູ່ ແລະອຸປະກອນ ຮັບໃຊ້ ສາທາລະນະ, ສ້າງຄວາມສະດວກ ໃນເຮືອນຊານ ແລະຮັບ ໃຊ້ ວັດທະນະທໍາ-ສັງຄົມ.

ສູ້ຊົນເພື່ອກ້າວໄປເຖິງ ປັບປຸງການກໍ່ສ້າງ ໃຫ້ດີຂຶ້ນ ກ່ວາ ເກົ່າ ຢ່າງເດັດຂາດ, ຍົກສູງ ສະມັດຖະພາບ ຂອງການລົງ ທຶນພື້ນຖານ. ເອົາໃຈໃສ່ ເປັນຕົ້ນຕໍ ຮັບປະກັນ ໃຫ້ທຶນຄົງທີ່ ແລະ ກໍາລັງແຮງແຫ່ງການຜະລິດ ໄດ້ດໍາເນີນ ການ ຜະລິດ ຕາມກໍານົດ ເວລາ ທີ່ໄດ້ຄາດໝາຍໄວ້. ສຸມການລົງທຶນພື້ນ ຖານ ແລະຊຸບພະຍາກອນ ທາງດ້ານວັດຖຸ ໃສ່ສະຖານທີ່ບ່ອນ ກໍ່ສ້າງທີ່ສໍາຄັນກ່ອນໝູ່. ຕ້ອງຈໍາກັດຈໍານວນສະຖານກໍ່ສ້າງທີ່ ກໍາລັງເຮັດຢູ່ພ້ອມໆກັນ, ຫລຸດຜ່ອນກໍານົດເວລາກໍ່ສ້າງ, ຕະ

ຫລອດໄລຍະຫນຶ່ງປີ ໂຮງຈັກໂຮງງານແລະ ກິດຈະການທີ່ ບໍ່ ຜະລິດວັດຖຸ ຕ້ອງດຳເນີນການຜະລິດ ຢ່າງສະໜ່ຳ ສະເໜີ ແລະ ຄົບຖ້ວນ. ໃນປີ້ໆນີ້ ເຮັດໃຫ້ຈຳນວນສະຖານທີ່ກໍ່ສ້າງ ທີ່ບໍ່ທັນສຳເລັດ ແລະ ວັດຖຸອຸປະກອນທີ່ຍັງບໍ່ຕົກຕ້ຽ ຫລຸດຜ່ອນ ເພື່ອໃຫ້ສອດຄ່ອງກັບລະດັບ ມາດຕະຖານ.

ໃນຊ່ວໄລຍະຫ້າປີ ໂດຍອີງໃສ່ບໍ່ເກີດທຶນຮອນທ້ຽງຫມົດເພີ່ມ ທະວີ ການລົງທຶນພັນຖານ ເຂົ້າໃນ ເສດຖະກິດ ແຫ່ງຊາດ-ອ້ ຍ ຂມ ຕ ມ ໑໘-໑໕%.

ກ່ອນອື່ນຫມົດ ເລັ່ງການລົງທຶນພັນຖານ ໃສ່ການ ດັດສ້ຽງ ຄົ ມໃຫມ່ ແລະ ການປະກອບອຸປະກອນເຕັກນິກ ຄົ ມໃຫມ່ ໃຫ້ ແກ່ບັນດາວິສາຫະກິດ ແລະເລັ່ງການລົງທຶນພັນຖານ ໃສ່ບັນ ດາສະຖານທີ່ ກໍ່ສ້າງ ຊຶ່ງໄດ້ດຳເນີນມາແລ້ວ ແຕ່ຍັງບໍ່ທັນສຳ ເລັດ. ການກໍ່ສ້າງ ວິສາຫະກິດແຫ່ງໃຫມ່ ແລະການ ຂະ ຫຍາຍ ວິສາຫະກິດ ທີ່ດຳເນີນກິດຈະການແລ້ວ ຈະເຮັດໄດ້ກໍ ່ ຕ ມ ວ ່ າ ຄວາມຮຽກຮ້ອງຕ້ອງການຂອງເສດຖະກິດ ແຫ່ງ ຊາດ ໃນສິນຄ້າປະເພດໃດ ປະເພດຫນຶ່ງ ບໍ່ອາດຕອບ ສະ ໜອງໄດ້ ຢ່າງພຽງພໍ ດ້ວຍວິທີ ດັດສ້ຽງ ແລະການປະກອບ ອຸປະກອນ ຄົ ມໃຫມ່ ໃຫ້ແກ່ໂຮງຈັກໂຮງງານ ທີ່ມີຢູ່ແລ້ວ.

ປັບປຸງວຽກງານການວາງແຜນ ແລະຄິດໄລ່ມູນຄ່າ ການກໍ ສ້ຽງ ໃຫ້ຄົບ ຖ້ວນ ກ່ວ ເ ກ ່ ່ າ, ການກໍ ສ້ຽງຕາມແຜນຜັ ງ ທີ່ປະຢັດ ກ່ວ ໜ ່ ູ ແລະ ກ້ວ ໜ ້ ່ ກ ່ ວ ໜ ູ . ໃນແຜນຜັ ງ ດ ່ ້ ກ ່ ວ ໃ ຫ ້ ຄ ວ ຄ ະ ນ ເ ຖ ິ ງ ການ ເ ພ ີ ່ ມ ທ ະ ວ ິ ສ ະ ມ ັ ດ ຖ ະ ພ າ ບ ຂ ອ ງ ການ

ລ້ຽງທົ່ນພົ້ນຖານ ໂດຍອີ້ງໃສ່ ການນຳໃຊ້ຜົນສຳເລັດ ຕ່າງ ໆ ແຫ່ງຄວາມກ້າວໜ້າ ທາງດ້ານ ວິທະຍາສາດ-ເຕັກນິກແລະ ບົດຮຽນ ອັນນຳໜ້າ ແລະການປະຍັດ ຊັບພະຍາກອນ ແລະ ແຮງງານ. ປັບປຸງລະດັບ ຂອງການແກ້ໄຂບັນຫາ ການວາງ ແຜນ, ສະຖາປັດຍະກຳ ແລະການກໍ່ສ້າງ, ຫລຸດຜ່ອນຕົ້ນທຶນ ຂອງການກໍ່ສ້າງເຄຫະສະຖານ ແລະກິດຈະການ ກໍ່ ເຮ ຮ ອມ ຢູ່, ຫລຸດຜ່ອນການລ້ຽງທົ່ນພົ້ນຖານ ຕາມກຳລັງແຮງຂອງໂຮງ ງານແຕ່ລະບ່ອນ. ນຳໃຊ້ ທີ່ດິນ ຢ່າງຖືກຕ້ອງ ເໝາະສົມ ໃນການກໍ່ສ້າງ.

ເພີ່ມທະວີຄວາມຮັບຜິດຊອບ ຂອງກະຊວງ, ທະບວງກົມ, ອົງການຊຸຮອຊານ, ອົງການຈັດຕັ້ງວາງແຜນ,ອອກແບບແລະ ຄົ້ນຄ້ວາ ວິທະຍາສາດ ກ່ຽວກັບການຮັບປະກັນລະດັບ ອັນສູງ ທາງດ້ານ ເຕັກນິກ ແລະເສດຖະກິດຂອງແຜນການ ກໍ່ ສ້າງ ແລະ ກ່ຽວກັບການກຳນົດ ມູນຄ່າກໍ່ສ້າງ ໃຫ້ຖືກຕ້ອງ.

ປັບປຸງ ວຽກງານກໍ່ສ້າງ ແບບຮັບເໝົ້າ ແລະ ໃຫ້ບໍລິສັດ ຮັບເໝົ້າ ກຸ້ມຕົນເອງ. ເສີມຂະຫຍາຍ ດ້ວຍທຸກວິທີການຮູບ ການ ອັນກ້າວໜ້າ ໃນການຈັດຕັ້ງການກໍ່ສ້າງເຊັ່ນ:ຮູບການ ກໍ່ສ້າງແບບເປັນປ່ຽງ ສຳເລັດຮູບຄົບຊຸດ ທີ່ປະກອບ ເຂົ້າກັນ ໄດ້, ຮູບການກໍ່ສ້າງແບບວິທີເຊັ່ນສັນຍາເໝົ້າ ນຳມະກອນ ຈາກບ່ອນອື່ນ ມາປະຕິບັດວຽກງານ ແບບຊົ່ວຄາວໂດຍມີການ ຈັດຕັ້ງ ເປັນໜ່ວຍຜະລິດ ຄົບຊຸດ, ຮູບການປະຕິບັດ ວຽກ ງານ ແບບໃຊ້ພາກສ່ວນປະກອບສຳເລັດຮູບ ແລະອື່ນໆ.ສ້າງ

ເວ້ອມໄຂ ເພ້ອຂະຫຍາຍ ການຮັບເຫມົາເປັນຫມ່ວຍ ກໍ່ສ້າງ ແບບເຮັດໃຫ້ທຸກພາກສ່ວນ ທ່ຽວຂ້ອງພ້ອມກັນຮັບຜິດຊອບ ຕໍ່ ຜົນຂອງການກໍ່ສ້າງ ບົ່ມພ້ມຖານ ການຍົກສູງລະດັບຂອງວຽກ ງານ ກະກຽມວິສະວະກຳ ແລະວຽກງານປະກອບ ເຄ່ືອງຈັກ ແລະ ອຸປະກອນກໍ່ສ້າງ ພ້ອມທັງແຜນປະຕິບັດວຽກງານ ລະ ອຽດ.

ວາງມາດຕະການ ແນໃສ່ຫລຸດຜ່ອນ ໃຫ້ຫລາຍທ່ີສຸດ ການ ອອກແຮງງານ ທາງດ້ານຮ່າງກາຍ, ປະກອບ ເຄ່ືອງ ຈັກ ເຄ່ືອງກົນຈັກ ທ່ີມ່ປະສິດທິພາບສູງ, ລິດຂົນສ່ົ ມັນທັງລິດບັນ ທຸກ ຂະຫນາດນ້ອຍ ໃຫ້ແກ່ບັນດາອົງການຈັດຕ້ັງກໍ່ສ້າງ, ນຳ ໃຊ້ເຄ່ືອງຈັກ ແລະລິດ ດັ່ງກ່າວ ຢ່າງເຕັ່ມສ່ວນ ກ່ວາ ເກ່ົ່າ ດ້ວຍການຈັດຜຽນເຮັດວຽກ ໃຫ້ເປັນຫມວດ. ປັບປຸງການປະ ກອບ ພາຫະນະ ອຸປະກອນ ກົນຈັກ ຂະຫນາດນ້ອຍ, ເຄ່ືອງ ມ່ືໄຟຟ້າ, ກົນຈັກ ແລະ ເຄ່ືອງມ່ື ທ່ີ່ຍ້ັຍຍ້ັຍ ໃຫ້ແກ່ ບັນດາ ບໍລິສັດກໍ່ສ້າງ.

ຍົກລະດັບ ການກໍ່ສ້າງເຂຫາສະຖານ ໃຫ້ເປັນກິດຈະການ ອຸດສາຫະກຳ ແລະລະດັບການກຽມ ເຄ່ືອງສຳເລັດຮູບ,ແລະ ສ່ວນປະກອບຕ່າງໆ. ເປ່ີດກ້ວາງການນຳໃຊ້ສ່ວນປະກອບສຳ ເລັດຮູບ ທ່ີ່ມ່ສະໄຫມກ່ວາຫມູ່. ນຳໃຊ້ວັດຖຸປະກອນ ກໍ່ສ້າງ ທ່ີ່ມ່ຢ່ັບທ້ອງຖ່ິນ ໃຫ້ເຕັ່ມສ່ວນກ່ວາເກ່ົ່າ.

ເພ່ີ່ມທະວ່ີ ກຳລັງແຮງຂອງບໍລິສັດຮັບເຫມົາກໍ່ສ້າງ-ຕ່ິດຕ້ັງ ຂອງທ້ອງຖ່ິນ ຢູ່ໃນເຂດບ່ອນ ທ່ີ່ມ່ການກໍ່ສ້າງຂະຫນາດໃຫ່ຍ.

ເສີມຂະຫຍາຍຕາມ່າງ ອົງການຈັດຕັ້ງຮັບເໝົາກໍ່ສ້າງ ແບບ
ເຄື່ອນທີ່ ແລະເສີມຂະຫຍາຍສ່ວງໃຫຍ່ ສາມາດບັນຈຸ ເຄື່ອງ
ມືປະເພດເຄື່ອນຍ້າຍໄດ້.

ຮັບປະກັນສືບຕໍ່ຂະຫຍາຍ ແລະປະກອບອຸປະກອນ ເຕັກນິກ
ຄົນໃໝ່ ໃຫ້ແກ່ບໍລິສັດກໍ່ສ້າງເຮືອນ ແລະໂຮງງານ ກໍ່ ກໍ່
ສ້າງຢູ່ໃນອຸນນະບົດ, ນຳໃຊ້ກຳລັງແຮງຂອງມັນ ຢ່າງ ເຕັມ
ສ່ວນກ່ວາເກົ່າ. ເພີ່ມທະວີ ອັດຕາສ່ວນເຮືອນຢູ່ປະເພດສ້າງ
ດ້ວຍປ່ຽງສຳເລັດຮູບ ຂະໜາດໃຫຍ່ ແລະປະເພດສ້າງດ້ວຍ
ປ່ຽງສຳເລັດຮູບ ທີ່ປະກອບເຂົ້າເປັນຫ້ອງສຳເລັດຮູບ ຢູ່ໃນບໍ
ລິມາດລວມຂອງການກໍ່ສ້າງເຮືອນຢູ່.

ຢູ່ໃນບາງຂະແໜງການສະເພາະ ນຳໃຊ້ການກໍ່ສ້າງວິສາ
ຫະກິດ ໂດຍວິງໃສ່ເງິນສົມຊົມ ຊຸ້ງທະນາຄານ ອອກໃຫ້ແກ່
ບັນດາບໍລິສັດຮັບເໝົາກໍ່ສ້າງ ໃນຂອບເຂດທົ່ວ ມູນຄ່າເຕັມ
ຂອງກິດຈະການ ໃນເງື່ອນໄຂຕ້ອງມອບວິສາຫະກິດ ທີ່ກໍ່ສ້າງ
ສຳເລັດແລ້ວນັ້ນ ໃຫ້ແກ່ເຈົ້າຂອງຜູ້ສ່ັງສ້າງ.

ຍົກສູງປະສິດທິພາບ ຂອງແຮງງານ ໃນການກໍ່ສ້າງຂັ້ນຕ່ຳ
໑໕-໑໗%.

VIII

ການຂະຫຍາຍຕົວ ທາງດ້ານສັງຄົມ

ແລະການຍົກສູງຄວາມຢູ່ດີກິນດີຂອງປະຊາຊົນ

ບົນພື້ນຖານ ການຂະຫຍາຍຕົວ ທາງດ້ານ ເສດຖະກິດ, ການຍກສູງສະມັດຖະພາບ ຂອງການຜະລິດສັງຄົມ, ຕອງຮັບປະກັນ ສືບຕໍ່ເຮັດໃຫ້ການຢູ່ດີກິນດີ ຂອງປະຊາຊົນ ຂະຫຍາຍຕົວອັ້ນ, ເຮັດໃຫ້ແບບແຜນວິທີດຳລົງຊີວິດ ແບບສັງຄົມນິ ຍົມ ແລະຫມົດລະບົບການພົວພັນ ທາງດ້ານສັງຄົມ ໄດ້ຮັບການຂະຫຍາຍຕົວ.

ເພື່ອຮັບໃຊ້ ຈຸດປະສົງດັ່ງກ່າວ ໃຫ້ຄາດຄະເນ:

ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກຫລາຍກ່ວາຫມູ່ ໃຫ້ແກ່ການອອກແຮງງານ ອັນມີປະສິດທິພາບສູງ, ໃຫ້ແກ່ການ ເພີ່ມທະວີ ລັກສະນະປະດິດຄິດສ້າງ ຂອງການ ອອກ ແຮງ ງານ; ຫລຸດຜ່ອນການອອກແຮງງານດ້ວຍມື, ການອອກແຮງ ງານ ທີ່ມີລັກສະນະຂາດຊຳນິຊຳນານແລະການອອກແຮງງານ ຫນັກ ທາງຮ່າງກາຍ ຢ່າງສຸດຂີດ; ປັບປຸງວິທີປ້ອງກັນ ການ

24/VIT ການຈຳໜ່າຍ

ອອກແຮງງານ ແລະ ລະບຽບຕັກນິກ ຮັບປະກັນຄວາມປອດ
ໄພ ໃຫ້ດີກ່ວາເກົ່າ; ເພີ່ມທະວີ ການກວດກາ ມາດຕະຖານ
ແຮງງານ ແລະມາດຕະຖານການຊົມໃຊ້;

ຍົກສູງລະດັບ ແລະປັບປຸງໂຄງປະກອບ ການຊົມໃຊ້ວັດຖຸ-
ແລະການບໍລິການ ໃຫ້ດີຂຶ້ນຕື່ມ, ປັບປຸງຄຸນນະພາບ ໂຄງປະ
ກອບດ້ວກ່າວ ໃຫ້ດີຂຶ້ນຕື່ມ ແລະເປີດກ້ວາງໃຫ້ມີຫລາຍຊະນິດ
ກ່ວາເກົ່າ;

ປັບປຸງເງື່ອນໄຂ ທາງດ້ານເຮືອນຢູ່ ແລະຊຸມຊົນ ປະຈຳວັນ
ຂອງປະຊາຊົນ ໃຫ້ດີກ່ວາເກົ່າ, ໂດຍສະເພາະ ປະຊາຊົນ
ໃນເຂດຊົນນະບົດ, ເຮັດໃຫ້ອຽກເຮືອນ ການຊານເບົາບາງ
ລົງ, ເພີ່ມທະວີລະດັບວັດທະນະທຳ ໃນທຸກຂົງເຂດ ການບໍລິ
ການ;

ສ້າງເງື່ອນໄຂ ເພື່ອປັບປຸງຄອບຄົວ ໃຫ້ມີຄວາມ ແໜ້ນ
ແກ່ນ, ເປີດກ້ວາງ ນະໂຍບາຍ ຕໍ່ຄອບຄົວ ທີ່ມີລູກເຕົ້າແລະ
ຕໍ່ແມ່ຍິງ ຜູ້ເປັນແມ່ ທີ່ເຮັດວຽກງານ;

ເຮັດໃຫ້ລະດັບການສຶກສາ ແລະວັດທະນະທຳ ຂອງປະຊາ
ຊົນ ມີການເຕີບໃຫຍ່ຂະຫຍາຍຕົວ ຢ່າງບໍ່ຢຸດຢັ້ງ, ປັບ ປຸງ
ການບໍລິການ ທາງດ້ານການປິ່ນປົວ ແລະການພັກຜ່ອນ ຂອງ
ຊາວ ໂຊວຽດ, ກໍ່ສ້າງເງື່ອນໄຂ ອັນສະດວກກ່ວາເກົ່າເພື່ອ
ເຮັດໃຫ້ຄົນໄດ້ເຂົ້າຮ່ວມ ໃນການເຄື່ອນໄຫວ ອອກແຮງງານ
ຢ່າງຕັ້ງໜ້າ;

ສືບຕໍ່ເສີມຂະຫຍາຍ ປະຊາທິປະໄຕ ສັງຄົມນິຍົມ, ຍົກສູງ

ທ໊ວຄິດປະດິດສ້າງ ຂອງຊາວຜູ້ອອກແຮງງານ, ເປີດກ້ວາງ ການເຂ້າຮ່ວມ ຂອງເຂົ້າເຈົ້າ ເຂ້ົ້າໃນການຄຸ້ມຄອງ, ເປີດ ກ້ວາງການແຂ່ງຂັນ ສັງຄົມນິຍົມ ແລະຂະບວນການ ອົບ ຮົມ ທັດສະນະ ກອມມູນິດ ຕໍ່ການອອກແຮງງານ ຢ່າງສູດຂີດ;

ການຫມູນໃຊ້ ປັດໄຈ ທາງດ້ານສັງຄົມ ແຫ່ງ ການ ເຕີບ ໃຫຍ່ ,ຂະຫຍາຍຕົວ ຂອງເສດຖະກິດ ຢ່າງມີປະສິດທິພາບ, ການສົມທົບຊຸກຍູ້ ການອອກແຮງງານ ດ້ວຍວັດຖຸແລະຈິດໃຈ, ເພີ່ມທະວີ ຜົນກະທົບຂອງມັນ ຕໍ່ການຂະຫຍາຍຕົວ ຂອງການ ຜະລິດ ເພື່ອໃຫ້ໄດ້ຮັບຜົນສໍາເລັດສູດທ້າຍອັນສູງສຸດ.

ເພີ່ມທະວີ <u>ລາຍໄດ້ຕົວຈິງ</u> ຂັ້ນ ໑໓-໑໘% ຕໍ່ຫ໊ວຄົນ.

ໃຫ້ຖືເອົາການຕອບສະຫນອງ ຄວາມຮຽກຮ້ອງ ຕ້ອງການ ຂອງປະຊາຊົນ ກ່ຽວກັບສິນຄ້າ ແລະການບໍລິການນາໆ ຊະ ນິດ ເປັນຫນ້າທີ່ ອັນສໍາຄັນກ່ວາຫມູ.

ເພີ່ມທະວີ <u>ການຈໍລະຈອນ ການຄ້າຂາຍຍ່ອຍ</u> ຂອງ ລັດ ແລະ ສະຫະກອນ ຂັ້ນ ๘๘-๘๕%.

ບົນພື້ນຖານແຫ່ງການແກ້ໄຂບັນຫາ ສະບຽງອາຫານ ຢ່າງ ສະເຫມີຕົ້ນສະເຫມີປາຍ ຕ້ອງຮັບປະກັນ ເຮັດໃຫ້ ຊີວິດການ ກິນຢູ່ ຂອງປະຊາຊົນ ສືບຕໍ່ຂຶ້ນກ່ວາເກົ່າ ດ້ວຍການສົ່ງເສີມ ໃຫ້ບໍລິໂພກ ສະບຽງອາຫານ ທີ່ມີທາດຊໍ້ຽງ ຫລາຍກ່ວາ ຫມູ.

ນອກຈາກສະບຽງອາຫານແລ້ວ,ຕ້ອງຕອບສະຫນອງຄວາມ ຮຽກຮ້ອງຕ້ອງການທາງດ້ານເຄື່ອງຂອງ ບໍາລຸງວັດທະນະທໍາ

ແລະ ປັບປຸງຊ໊ວິດປະຈຳວັນ ແລະ ເຄ໋ອງອຸປະໂພກ ທ໊ຣັບໃຊ້ ພາຍໃນຄອບຄົວ ພ້ອມທັງເຄ໋ອງຂອງ ຊະນິດອ໋ນໆ. ເພ໋ມທະ ວິ ການຂາຍວັດຖຸປະກອນກໍ່ສ້າງ ໃຫ້ແກ່ປະຊາຊົນ ກໍ່ຄ໊ ການ ຂາຍ ວັດຖຸປະກອນ ແລະ ເຄ໋ອງອາໄຫລ່ຕ່າງໆ ທ໊ເຫລ໊ອ - ຈາກ ຄວາມຕ໊ອງການ ຂອງອຸດສາຫະກຳ ເພ໋ືອອະນຸມັດ ໃຫ້ ການສ້ອມແປງ ແລະ ວຽກງານອ໋ນໆພາຍໃນ ຄອບຄົວ ສະ-ດວກ ຂ້ອນ.

ເປ໊ດກ້ວ້າງ ແລະ ຜະລ໊ດສິນຄ້າແບບໃຫມ່ອອກ ເລ້ອຍໆ, ຍົກສູງ ຄຸນນະພາບຂອງສິນຄ້າ, ເພ໋ມທະວິການຂາຍ ສິນຄ້າ ຊະນິດໃຫມ່, ຊະນິດທັນສະໄຫມກໍ່ຄ໊ ສິນຄ້າຊະນິດ ທົນທານ ແຕ່ ລາຄາຖ໊ກ, ຊະນິດທ໊ປູໃນຄວາມນິຍົມ ຢ່າງກ້ວ້າງຂວ້າງ. ເຮ໊ັດໃຫ້ ມະຫາຊົນເກ໊ດມ໊ຄວາມຕ໊ອງການອັນ ເຫມາະ ສົມ ແລະ ສ້າງໃຫ້ເຂ໊ົ້າເຈ້ົ້າ ມ໊ລ໊ດນ໊ຍົມ ອັນຈ໊ຍງາມ.

ເພ໋ມທະວິ <u>ເງ໋ນເດ໊ອນຜ້ານກາງຂອງກຳມະກອນ ແລະພາ ລະກອນ</u>ຂ້ອນ ໑ນ-໑ຜ% ແລະຮອດທ້າຍປ໊ ໄລຍະແຜນການ ຫ້າ ປ໊ ຍົກລະດ໊ບຂອງເງ໋ນເດ໊ອນ ຂ້ອນຮອດ ໑ຜ໐-໑ຜ໕ ຮູບ ຕ໋ ເດ໊ອນ.

ເພ໋ມທະວິ<u>ຄ່າແຮງງານ ຂອງສະມາຊ໊ກສະຫະກອນກະເສດ</u> ໃນການອອກແຮງງານຜະລ໊ດລອມໜ່ ໃຫ້ສ່ວນລວມ ຢູ່ສະຫະ ກອນ ຂ້ອນ ໘໐-໘໔%.

ໃນດ້ານເງ໋ນເດ໊ອນຂອງກຳມະກອນ ແລະພາລະກອນ: ຕ໊ອງ ຮ໊ບປະກ໊ນ ໃຫ້ເງ໋ນເດ໊ອນ ແລະ ຄ່າບຳເນ໊ັດຂອງຜູ້ອອກແຮງ

ງານ ແຕ່ລະຄົນ ຂັ້ນນຳການປະກອບສ່ວນໆ ຕົວ ຂອງຜູ້ກ່ຽວ ເຂົ້າ ໃນການອອກແຮງງານ ແລະ ພົນງານລວມ ຂອງ ຫມູ່ ຄະນະຊາວ ຜູ້ອອກແຮງງານ ແຕ່ລະຫມູ່ ໃຫ້ຫລາຍກ່ວາເກົ່າ ເພີ່ມທະວີບົດບາດຊຸກຍູ້ ຂອງເວັ້ນເດືອນ ແລະ ບຳເນັດເຂົ້າ ໃນການຍົກສູງ ປະສິດທິພາບຂອງ ການອອກແຮງງານ, ໃນ ການປັບປຸງ ຄຸນນະພາບ ຂອງຜະລິດຕະພັນ ໃຫ້ດີກ່ວາ ເກົ່າ ແລະ ໃນການປະຢັດ ຊັບພະຍາກອນທຸກຊະນິດ; ຕ້ອງປັບປຸງ ລະບອບ ການວາງເວັ້ນເດືອນ ແລະ ມາດຕະຖານການອອກ ແຮງງານ.

ການປັບປຸງເວັ້ນເດືອນຂອງຊາວຜູ້ອອກແຮງງານປະ ເພດ ຕ່າງໆ ໃຫ້ດີຂັ້ນກວ່າເກົ່າ ໂດຍການຈຳແນກຄວາມ ສັບ ສົນ ແລະ ລະດັບຄວາມຮັບຜິດຊອບ ຕໍ່ວຽກງານ ທີ່ ປະຕິບັດມາ, ໂດຍການຍົກຖ້ເວ້ັນໄຂ ແລະລະດັບຄວາມທະວີສູມຂອງການ ອອກແຮງງານ, ພ້ອມກັນນັ້ນ ປັບປຸງເວັ້ນເດືອນ ຕາມ ຂະ ແໜງການຕ່າງໆ ຂອງເສດຖະກິດແຫ່ງຊາດ ແລະຕາມເຂດ ຕ່າງໆ ໃນປະເທດ.

ຮັບປະກັນເຮັດໃຫ້ເວັ້ນເດືອນ ຂອງຜູ້ອອກແຮງງານມີການ ເພີ່ມທະວີຂຶ້ນ ໃນນັ້ນ ລວມທັ້ງຜູ້ອອກແຮງງານທີ່ມີອັດຕາເວັ້ນ ເດືອນຕ່ຳ ບົນພື້ນຖານ ການຫລຸດຜ່ອນການອອກແຮງ ງານ ທາງຮ່າງກາຍ, ຫລຸດຜ່ອນ ການອອກແຮງງານທີ່ບໍ່ ລະດັບ ຊຳນິຊຳນານ, ແລະ ບົນພື້ນຖານ ການຍົກສູງ ລະດັບຄວາມ ຊຳນິຊຳນານ, ການລວບລວມວິຊາ ສະເພາະ ເຂົ້າກັນແລະ

ການບັນລຸຫມາກຜົນອັນສູງ ໃນການອອກແຮງງານ.

ໄປພ້ອມໆ ກັນກັບການສ້າງເງື່ອນໄຂ ແລະ ສະສົມຊັບພະ ຍາກອນໃຫ້ເລີ່ມລົງມື ຄ່ອຍຍົກສູງເງິນເດືອນຕ່ຳສຸດ ຂັ້ນຮອດ ໒໐ ຮູບ ຕໍ່ເດືອນ, ຍົກສູງ ອັດຕາເງິນເດືອນ ແລະເງິນໄດ້ ຮັບຕົວຈິງ ຂອງກຳມະກອນ ແລະພາລະກອນ, ກ່ອນອື່ນຫມົດ ແມ່ນຢູ່ໃນຂະແຫນງການຂອງເສດຖະກິດແຫ່ງຊາດ ທີ່ດຳເນີນ ການຜະລິດ. ເພື່ອບັນລຸ ເຖິງຈຸດປະສົງ ດັ່ງກ່າວ ໃຫ້ນຳໃຊ້ ຄວາມອາດສາມາດບີ່ມຊ້ອນ ໃນການເຕີບໃຫຍ່ ຂະຫຍາຍຕົວ ຂອງປະສິດທິພາບ ຂອງການອອກແຮງງານ ທີ່ມີຢູ່ໃນບັນ ດາ ສະຫະບໍລິສັດ,ວິສາຫະກິດ, ອົງການຈັດຕັ້ງ ແລະ ຂະແຫນງ ການຕ່າງໆ ຢ່າງສູດຂີດ.

ປັບປຸງລະບົບເງິນເດືອນ ໃນແຕ່ລະເຂດ ທ້ອງຖິ່ນໃຫ້ດີຂຶ້ນ ກ່ວາເກົ່າ.

ຢູ່ເຂດອູຣານ, ຢູ່ບາງເຂດ ກາຊັກສະຕານ ແລະ ຢູ່ເຂດ ພາກເຫນືອຂອງແຂວງ ໂວໂລກົດສະດ ແລະ ກີຣົບ ໃຫ້ນຳ ອັດຕາເພີ່ມທະວີພິເສດສະເພາະ ມາໃສ່ ເງິນເດືອນຂອງກຳ ມະກອນແລະພາລະກອນ ທີ່ບໍ່ທັນໄດ້ຮັບ ໃນເມື່ອກ່ອນ.

ວາງເງິນອາຍຸການເພີ່ມໃສ່ເງິນເດືອນ ໃຫ້ແກ່ກຳມະກອນ ແລະພາລະກອນ ຢູ່ໃນເຂດທິດໃຕ້ ຂອງພາກຕາເວັນອອກໄກ ແລະ ເຂດ ສິບຣ ພາກຕາເວັນອອກ.

ສິບຕ໋ ເພີ່ມທະວີຂະຫນາດ ຂອງການວາງເງິນເພີ່ມ ເຕີ່ມ ໃນການຮັດວຽກເວລາກາງຄືນ ຢູ່ໃນບາງຂະແຫນງການສະ

ເພາະ.

ໃນດ້ານການເບີກຈ່າຍ ຄ່າການອອກແຮງງານຂອງສະມາ
ຊິກ ສະຫະກອນກະເສດ ໃຫ້ຮັບປະກັນດັ່ງນີ້:

ເຮັດໃຫ້ການເບີກຈ່າຍຄ່າການອອກແຮງງານຂັ້ນກັບຫມາກ
ຜົນສຸດທ້າຍ ຂອງການອອກແຮງງານ, ຂັ້ນກັບ ປະສິດທິພາບ
ຂອງການອອກແຮງງານ ແລະຄຸນນະພາບຂອງ ຜະລິດຕະພັນ
ໃຫ້ຫຼາຍກ່ວາເກົ່າ;

ຄຽງຄູ່ ກັບການເຕີບໃຫຍ່ ຂະຫຍາຍຕົວ ຂອງ ປະສິດທິ-
ພາບຂອງການອອກແຮງງານ, ຂອງລະດັບຄວາມ ຊຳນິ ຊຳ
ນານ ແລະ ອັດຕາສ່ວນການເຂົ້າຮ່ວມ ຂອງສະມາຊິກ ສະ-
ຫະກອນກະເສດ ໃນການອອກແຮງງານ ລວມໝູ່, ຕ້ອງ-
ເຮັດໃຫ້ ລະດັບຄ່າແຮງງານ ຂອງສະມາຊິກສະຫະກອນ ກະ
ເສດໃກ້ຄຽງ ກັບ ລະດັບຄ່າອອກແຮງງານ ຢູ່ໃນວິສາຫະກິດ
ຂອງລັດ.

ວາງກຳນົດເວລາ ຕ່ຳສຸດຂອງການພັກຜ່ອນ ປະຈຳປີໂດຍ
ໄດ້ຮັບ ເງິນເດືອນເຕັມ ສຳລັບ ສະມາຊິກສະຫະກອນ ກະ-
ເສດ ໃຫ້ເທົ່າກັບ ເວລາພັກຜ່ອນ ຕ່ຳສຸດ ສຳລັບ ກຳມະ-
ກອນ ແລະ ພາລະກອນ ໃນບັນດາວິສາຫະກິດກະເສດ ຂອງ
ລັດ.

ເພີ່ມທະວີ ກອງທຶນຂອງສັງຄົມ ສຳລັບການຊຸມໃຊ້ຂຶ້ນ ๘๐%.
ເພີ່ມທະວີ ບົດບາດຂອງເງິນບຳລຸງ ແລະ ເງິນມະໂຍ ບາຍ
ໃຫ້ແກ່ ປະຊາຊົນໂດຍການນຳໃຊ້ ກອງທຶນດັ່ງກ່າວ ເຂົ້າໃນ

ການແກ້ໄຂ ບັນຫາຕ່າງໆ ທາງດ້ານການຜະລິດ ແລະ ທາງ
ດ້ານສັງຄົມ ກ່ຽວກັບ ການຂຸກຍູ້ການເພີ່ມທະວີພົນລະເມືອງ.
ຍົກສູງ ສະມັດຖະພາບ ຂອງ ການນຳໃຊ້ ທຶນຮອນທີ່ສ້າງເຂົ້າ
ໃນ ກອງທຶນຂອງສັງຄົມ ສຳລັບການຊົມໃຊ້ ໃນນັ້ນມີທຶນຮອນ
ຂອງບັນດາວິສາຫະກິດ, ສະຫະບໍລິສັດ, ອົງການຈັດຕັ້ງແລະ
ສະຫະກອນກະເສດ.

ເພີ່ມທະວີ <u>ການຈ່ອຍເຫຼືອຂອງລັດ ຕໍ່ຄອບຄົວ ທີ່ມີລູກເຕົ້າ
ແລະ ຕໍ່ແມ່ຍິງ ທີ່ຫາກໍເອົາກັນໃໝ່.</u> ກັບຄອບຄົວ ດັ່ງກ່າວ
ຕ້ອງໃຫ້ ເງິນບຳລຸງ ແລະ ເງິນນະໂຍບາຍ, ປະກອບສ່ວນ
ປັບປຸງເງື່ອນໄຂທາງດ້ານເຮືອນຊານແລະຊີວິດປະຈຳວັນຂອງ
ພວກເຂົາເຈົ້າ, ປັບປຸງແກ້ໄຂລະບົບການໃຫ້ເງິນບຳລຸງ ເດັກ
ນ້ອຍ ໃຫ້ດີຂຶ້ນຕື່ມ. ປັບປຸງການກິນແລະການບໍລິການ ເດັກ
ນ້ອຍ ຢູ່ໃນເຮືອນລ້ຽງເດັກ ແລະໂຮງຮຽນອະນຸບານ, ໂຮງ
ຮຽນກິນນອນ, ບ່ອນພັກເຊົາປະຈຳກັບໂຮງຮຽນແລະສູນລ້ຽງ
ເດັກກຳພ້າ. ສຳເລັດການເບີກຈ່າຍປຶ້ມຮຽນ ໂດຍບໍ່ເສັຍຄ່າ
ໃຫ້ແກ່ນັກຮຽນ ຢູ່ໃນໂຮງຮຽນລະບົບສາມັນ.

ຮັບປະກັນ ເຮັດໃຫ້ມີການສືບຕໍ່ ປັບປຸງ <u>ເງື່ອນໄຂໃນການ
ອອກແຮງງານ, ຊີວິດປະຈຳວັນ ແລະການພັກຜ່ອນສຳລັບແມ
ຍິງ ຜູ້ທີ່ເຮັດວຽກງານ.</u>

ນັບແຕ່ ປີ ໑໙໘໑ ເປັນຕົ້ນໄປ ຢູ່ໃນເຂດຕ່າງໆ ພາຍໃນ
ປະເທດຕ້ອງເລີ່ມຕົ້ນປະຕິບັດນະໂຍບາຍ ໃຫ້ແມ່ຍິງ ພັກຜ່ອນ
ເພື່ອລ້ຽງລູກນ້ອຍຈົນກ່ວາລູກຈະມີອາຍຸໜຶ່ງປີໂດຍໄດ້ຮັບເງິນ

ເດືອນ ພາກສ່ວນນຶ່ງ. ເປີດກ້ວາງນະໂຍບາຍຕ່າງໆ ໃຫ້ຂໍ້ສະ ດວກແກ່ ພວກແມ່ຍິງເຫລົ່ານີ້ຫລາຍຂຶ້ນໃນເວລາເກີດລູກແລະ ສຶກສາອົບຮົມລູກເຕົ້າ.

ສຳລັບແມ່ຍິງ ຜູ້ທີ່ມີລູກນ້ອຍ ສ້າງເງື່ອນໄຂ ໃຫ້ພວກເຂົາ ເຈົ້າ ໄດ້ເຮັດວຽກບໍ່ເຕັມໂມງການ ຫຼືບໍ່ເຕັມອາທິດອອກແຮງ ງານ, ເຮັດວຽກຕາມຕາຕະລາງເຄື່ອນຍ້າຍໄດ້ ກໍຄື ເຮັດ ວຽກຢູ່ກັບເຮືອນ. ວາງມາດຕະການ ອັນມີສະມັດຖະ ພາບ ເພື່ອເຮັດໃຫ້ວຽກບ້ານການເຮືອນເບົາບາງລົງ.

ເພີ່ມຈຳນວນ ສະຖານທີ່ ບ່ອນພິເສດ ຕິດຕາມ ສຸຂະພາບ ພັກຜ່ອນ ຂອງແມ່ມານໃຫ້ຫລາຍ.

ຄາດຄະເນການສືບຕໍ່ຂະຫຍາຍຕາມ່າງ ເຮືອນລ້ຽງ ເດັກ ຮຸ່ນໃຫຍ່ ແລະຮຸ່ນນ້ອຍ ຕ່ຳກ່ວາ ๕ ປີ, ຫ້ອງຮຽນ ທີ່ມີການ ເພີ່ມໂມງຮຽນອອກຕື່ມ, ຄ້າຍພັກຂອງເຍົາວະຊົນ ແລະ ສະ ຖານທີ່ອື່ນໆ ສຳລັບເດັກນ້ອຍ ໂດຍສະເພາະ ຢູ່ໃນເຂດບ່ອນ ທີ່ມີແມ່ຍິງ ເຂົ້າຮ່ວມໃນການຜະລິດຂອງສັງຄົມ ຢູ່ໃນ ລະດັບ ສູງ; ປັບປຸງວຽກງານຂອງຕາມ່າງດ້ວງກ່າວ ໃຫ້ດີກວ່າເກົ່າ. ກໍ່ສ້າງສະຖານທີ່ ສຳລັບເດັກນ້ອຍ ທີ່ບໍ່ທັນຮອດອາຍຸ ໄປເຂົ້າ ໂຮງຮຽນເທື່ອນັ້ນ ບໍ່ໃຫ້ຕ່ຳກ່ວາ ๘,๕ ລ້ານບ່ອນ.

ໃນປີ ๑๙๗๕ ມຳເອົາຈຳນວນນັກຮຽນ ຢູ່ໃນຫ້ອງຮຽນ ທີ່ ມີການເພີ່ມໂມງຮຽນ ອອກຕື່ມ ຂຶ້ນຮອດ ๑๓,๕-๑๔ ລ້ານ ຄົນ. ປັບປຸງວຽກງານ ຂອງສະໂມສອນ ເຍົາວະຊົນແລະນັກ ຮຽນ, ແລະວຽກງານຂອງສະຖານທີ່ແຫ່ງອື່ນໆ ທີ່ຢູ່ນອກໂຮງ

ธรม.

ปับปุงละบิบปะกันไพสังคมใช้ดีขึ้นกว่าเก่า. เพิ่มอัดตาเบี้ย บำนาน อันต่ำสุด อิงตามอายุกามและละดับ กามเสีย อิงคะ ให้แก่กำมะกอม, พาละกอม และสะมาอุก สะหะกอมกะเสด, ก็คือ เพิ่มเบี้ยบำนาน อันต่ำสุด ให้แก่ ลอบถือ ที่เสยผู้ล้ยงดูไป. ลาดวาง เธัดให้ เว้อมไข ทางด้าม กามปะกันไพสังคม ของสะมาอุก สะหะกอม กะเสด และ ผู้ออกแธวงาม ในอิสาหะกิด ของลัดให้ มีความสะหม่ำสะเหมีกัน.

ธับปะกันเธัดให้อัดตาเบี้ยบำนาน ที่ได้ถูก วางออก ในเมื่อก่อน สิบต่อกามล่อยๆ มาเท่าทธรมกันกับ ละดับ เบี้ยบำนาน ที่วางออกในปัดจุบันนี้ ต่ผู้ออกแธวงาม ที่ มีอุาสะเพาะ และละดับความอุำมีอุำนาม ทางด้านอิ อุาอุบ ถ้ายถือกัน.

ปะติบัดมาดตะกาม ที่แมใส่ สิบต่ปับปุงเว้อมไขทาง ด้านอุอกกามเป็นยู่ ของผู้ที่เข้าร่อม มะหาสังคามป้องกันปิตุพูม และถอบถือของนักธ์บผู้เสียสะละอุอก. เอ็าใจใส่ ผู้อาวุโส ในกามออกแธวงาม ให้หลายก่อาเก่า.

ขะหยายความอาดสามาดในกามเข้าร่อม กามออกแธวงาม เพื่อส่อมลอม ของผู้ที่ออกไปกินเบี้ยบำนาน. ปับปุง ธูบกามอุกยู้อยกวงาม ทางด้านอัดถุ ของผู้ที่ออกไปกินเบี้ยบำนาน ที่มีความสามาดออกแธวงามได้.

ເພີ່ມທະວີຕາມ່າງ ເຮືອນກິນນອນສຳລັບ ຜູ້ທີ່ ອອກໄປກິນ ເບ້ຍບຳນານ, ເພີ່ມທະວີຄວາມສະດວກສະບາຍແລະການ ບໍລິການ ທາງດ້ານສັງຄົມ ແລະຊຸ້ດປະຈຳວັນ ຢູ່ໃນ ເຮືອນ ກິນນອນດ່ວກ່າວ. ປັບປຸງການຈັດຕັ້ງການຊ່ວຍເຫຼືອປະຊາຊົນ ທາງດ້ານອົງຄະທຽມ ແລະຮັບປະກັນພາຫະນະໄປມາ ສະ ເພາະໃຫ້ແກ່ ຜູ້ທີ່ເສັຍອົງຄະ.

<u>ສົ່ງເສີມຕະຫລາດເວີນກັ້ປີນຂອງລັດ</u>.

ປະຕິບັດນະໂຍບາຍ ເຮັດໃຫ້<u>ລາຄາຂາຍຍ່ອຍ</u>ຂອງສະບຽງ ອາຫານ ແລະສິນຄ້າໃຊ້ສອຍ ອັນຕົ້ນຕໍ ຂອງລັດ ມີ <u>ຄວາມ ຫັ້ນທ່ຽງ</u> ຢ່າງສະເໝີຕົ້ນສະເໝີປາຍ. ເພີ່ມທະວີ ການ ກວດກາຂອງລັດ ແລະຂອງມະຫາຊົນ, ແລະຍົກສູງຄວາມຮັບ ຜິດຊອບ ຂອງບັນດາທະຊວງ, ທະບວງການ, ຄະນະຮັບ ຜິດ ຊອບສະຫະບໍລິສັດ, ວິສາຫະກິດ, ອົງການຈັດຕັ້ງ ມະຫາຊົນ ແລະ ອົງການຕ່າງໆ ຕໍ່ການປະຕິບັດລະບຽບວິໄນ ກ່ຽວ ກັບ ລາຄາ.

ຮັບປະກັນ ເຮັດໃຫ້ <u>ການຄ້າ ແລະຮ້ານອາຫານສາທາລະ ນະຊົນ</u> ສົ່ງເສີມການຂະຫຍາຍຕົວອອກ.

ເປີດກ້ວາງຕາມ່າງການຄ້າຂາຍຍ່ອຍ, ປັບປຸງພັ້ມຖານວັດ ຖຸ ແລະເຕັກນິກ ຂອງການຄ້າຂອງລັດ ແລະຂອງ ລວມໝູ່. ປັບປຸງ ການຈັດຕັ້ງການລົ້ມລອງການຄ້າຂອງລັດ ໃຫ້ດີ ຂຶ້ນ ຕື່ມ. ເອົາໃຈໃສ່ເປັນພິເສດ ຕໍ່ການກໍ່ສ້າງຮ້ານຄ້າ ຂາຍ ເຄື່ອງ ແບບວິທີຮັບໃຊ້ຕົນເອງ, ຮ້ານຄ້າຂາຍເຄື່ອງ ທຸກຊະ

ນິດ, ຮ້ານຄ້າສະເພາະຂາຍເຄື່ອງວິຊາສະເພາະໃດນຶ່ງແລະ ສູນການຄ້າຂະໜາດໃຫຍ່. ເພີ່ມທະວີ ຕາມ່າງຮ້ານຄ້າຂາຍ ເຄື່ອງຜະລິດຕະພັນຂອງບັນດາກະຊວງ ແລະສະຫະບໍລິສັດອຸດ ສາຫະກຳ ກໍ່ຮ້ານຄ້າຂາຍເຄື່ອງຜະລິດຕະພັນຂອງນິຄົມ,ສະ ຫະກອນກະເສດ, ແລະສະຫະບໍລິສັດຂອງນິຄົມ ແລະ ສະຫະ ກອນກະເສດ ເພື່ອຂາຍຜັກ ແລະຜະລິດຕະພັນຊະນິດ ເປັນ ໜາກ.

ຍົກສູງລະດັບ ການບໍລິການປະຊາຊົນ ທາງດ້ານ ການຄ້າ ອັນກ້າວໜ້າ. ປັບປຸງການຂາຍສິນຄ້າ ແບບວິທີຮັບໃຊ້ ຕົນ ເອງ, ແບບສ່ຳລ່ວງໜ້າ ຢູ່ຕາມສະຖານທີ່ ບ່ອນ ເຮັດວຽກ ແລະ ບ່ອນຢູ່ກໍ່ດ້ວຍວິທີການສົ່ງຝາກໄປທາງໄປສະນີ. ເພີ່ມ ທະວີ ການຈັດສົ່ງສິນຄ້າ ຊະນິດມີການຫຸ້ມຫໍ່ ຕາມນ້ຳໜັກໄປ ສະໜອງ ຕາມ່າງການຄ້າ.

ເພີ່ມທະວີ ບົດບາດຂອງຮ້ານອາຫານແລະຮ້ານຂາຍນ້ຳສາ ທາລະນະຊຶມ ເພື່ອຕອບສະໜອງ ຄວາມຕ້ອງການຂອງ ປະ ຊາຊົນ, ຄາດວ່າງເຮັດໃຫ້ ຮ້ານອາຫານ ແລະຮ້ານຂາຍນ້ຳ ສາທາລະນະຊຶມ ມີການຂະຫຍາຍຕົວ ດ້ວຍຈ່ຳຫວະ ອັນກ້າວ ໄປກ່ອນຂັ້ນນຶ່ງ, ເພີ່ມທະວີການຫັນເອົາຂະແໜງດ່ຳກ່າວ ໄປເປັນ ອຸດສາຫະກຳ. ປັບປຸງການຮັບປະກັນອາຫານ ຮ້ອມ ທຸກຊະນິດ ຢູ່ຕາມບ່ອນເຮັດວຽກ ແລະບ່ອນຮຽນ ໃຫ້ແກ່ ກຳ ມະກອນ,ພາລະກອນ, ສະມາຊິກສະຫະກອນກະເສດແລະນັກ ຮຽນ ນັກສຶກສາ. ເປີດກ້ວ່າງຕາມ່າງ ວິສາຫະກິດ ຮ້ານອາ

ທາມສາທາລະນະຊົນ ໃຫ້ຫຼາຍຂຶ້ນ, ຍົກສູງ ລະດັບ ການ ບໍລິການ ປະຊາຊົນ. ຂະຫຍາຍຕາມ ຫ່ວງ ວິສາຫະກິດ ຮ້ານ ອາຫານ ສາທາລະນະຊົນ ແຕ່ວອາຫານບຳລຸງສະເພາະ.

ນຳເອົາ ເຕັກໂນໂລຊີ ອັນນຳໜ້າເຂົ້າໃສ່ ການຂົນສົ່ງ, ການເກັບມ້ຽນ, ການປຸງແຕ່ງແລະການຂາຍສິນຄ້າ,ນຳເອົາ ອຸປະກອນ ຂອງການຄ້າ ແລະການທຳຄວາມເຢັນ ອັນທັນສະ ໄໝ, ເຄື່ອງຈັກ ແລະລະບົບກວດຄຸ້ມ ແລະຫຸ້ມຫໍ່ ສິນຄ້າ ຕາມນ້ຳໜັກ ອັນມີປະສິດທິພາບສູງ ແລະຄົບຊຸດ ເຂົ້າສູ່ ຂະ ແໜງການດ່ວນ. ປັບປຸງສາຍພົວພັນທາງດ້ານເສດຖະກິດ ລະຫ່ວາງ ວິສາຫະກິດ ແລະອົງການຈັດຕັ້ງ ອຸດສາຫະກຳ , ກະເສດ ແລະການຄ້າ. ເພີ່ມທະວີ ບົດບາດຂອງສັນຍາກ່ຽວ ກັບການເຄື່ອນໄຫວ ເສດຖະກິດ ໃນການວາງແຜນການ ຜະ ລິດ ແລະຈຳໜ່າຍສິນຄ້າ ໃຊ້ສອຍປະຈຳວັນ.

ປະຕິບັດມາດຕະການ ທີ່ແນໃສ່ລວມສູນສິນຄ້າສະສົມ ຢູ່ໃນ ລະບົບການຄ້າຂາຍຍົກເປັນຕົ້ນຕໍ. ເພີ່ມທະວີຄວາມ ຮັບ ຜິດ ຊອບ ຂອງບັນດາສາງ ຮັບໃຊ້ການຄ້າຂາຍຍົກ ຕ່ ການ ສະ ໜອງສິນຄ້າ ຊະນິດຕ່າງໆ ອັນຈຳເປັນ ໃຫ້ແກ່ຮ້ານຄ້າຍ່ອຍ ລຽນຕົດ, ແລະຍົກສູງ ຄວາມຮັບຜິດຊອບ ຂອງບັນດາ ຮ້ານ ຄ້າ ຕ່ການເຮັດໃຫ້ມີສິນຄ້າ ອັນຈຳເປັນ ຕາມຊະນິດ ທີ່ ໄດ້ ການົດໄວ້.

ຢູ່ໃນການຄ້າ ແລະອຸດສາຫະກຳ ປັບປຸງວຽກງານການສຶກ ສາອົບຮົມ ຄວາມຕ້ອງການຂອງຜູ້ຊ, ຕົດສົນຈຸດພິເສດ ສະ

ເພາະ ຂອງຄວາມຕ້ອງການຂອງປະຊາຊົນສ່ວນຕ່າງໆ ແລະ ໃນເຂດຕ່າງໆ ພາຍໃນປະເທດ.

ໃນຂັ້ນຕໍ່ໄປ ອຳນວຍຄວາມສະດວກ ຢ່າງສູດຊຶດ ໃຫ້ແກ່ ການຂະຫຍາຍ ລະບົບສະຫະກອນຊົມໃຊ້, ການຍົກສູງຫົວຄິດ ປະດິດສ້າງ ໃນການດຳເນີນວຽກງານເສດຖະກິດ ຂອງ ສະ ຫະກອນອັນນີ້ ກໍຄືການຍົກສູງດ້ານຕັ້ງໜ້າຂອງມັນ ເພື່ອ ແນ ໃສ່ປັບປຸງການບໍລິການ ການຄ້າ ແລະຮ້ານອາຫານສາທາລະ ນະຊົນ ຢູ່ໃນເຂດຊົນນະບົດ ໃຫ້ດີກ່ວາເກົ່າ, ການເພີ່ມທະວີ ຊັບພະຍາກອນ ທາງດ້ານວັດຖຸດິບ ແລະສະບຽງອາຫານ.

ຢູ່ຕາມວິສາຫະກິດ ໃນລະບົບສະຫະກອນ ການຊົມໃຊ້ເພີ່ມ ທະວີການຜະລິດ ສິນຄ້າ ອັນຈຳເປັນ ສຳລັບ ປະຊາຊົນ ບົນ ພື້ນຖານການນຳໃຊ້ວັດຖຸປະກອນ ແລະວັດຖຸດິບທ້ອງຖິ່ນ ຢ່າງ ມີສະມັດຖະພາບສູງກ່ວາເກົ່າ, ເພີ່ມທະວີ ການລ້ຽງສັດໃຫຍ່ ແລະເປັດໄກ່. ການລ້ຽງປາ ຢູ່ໃນໜອງ ຫນ ຢູ່ ພາຍໃນ. ປະຕິບັດການຊື້ສະບຽງອາຫານ ນຳປະຊາຊົນ ແລະ ສະ ຫະ ກອນກະເສດ ຢ່າງຕັ້ງໜ້າກ່ວາເກົ່າ, ຂະຫຍາຍການຄ້າສະ ບຽງອາຫານດ້ວງກ່າວ ຢູ່ໃນຕົວເມືອງ ແລະຢູ່ໃນເຂດໃຈກາງ ອຸດສາຫະກຳ, ນຳໃຊ້ຄວາມອາດສາມາດ ໃນການເພີ່ມທະວີ ການຮັບຊື້ ນ້ຳເຜິ້ງ, ການເກັບຜັກ ແລະ ໜາກ ໄມ້ ປ່າ, ເຫັດ, ໜາກນຸ໋ ແລະຢາພື້ນເມືອງ ໃຫ້ເຕັມສ່ວນກ່ວາເກົ່າ.

ເສີມຂະຫຍາຍຕາມ່າງ ຕະຫລາດ ສະຫະກອນ ແລະປັບປຸງ ມັນໃຫ້ດີກ່ວາເກົ່າ. ໃນການຊ່ວຍເຫຼືອ ແກ່ປະຊາຊົນໃນການ

ຂົນສົ່ງ ແລະຈຳໜ່າຍ ຜະລິດຕະພັນກະສິກຳ ທີ່ເຫຼືອຢູ່ ຈາກ ການຜະລິດ ຢູ່ຕາມສ່ວນຄົວ, ຢູ່ຕາມໜ່ວຍສາມັກຄີປູກໝາກ ໄມ້, ປູກຜັກ ແລະອື່ນໆ.

ຂະຫຍາຍ ຕາມ່າງຮ້ານຄ້າຂາຍເຄື່ອງຕໍ່ ທີ່ໄດ້ຮັບມາຈາກ ປະຊາຊົນ ແລະສະຫະກອນກະເສດ ຢ່າງຫຼວງຫຼາຍ.

ປັບປຸງ ການບໍລິການປະຈຳວັນ ໃຫ້ແກ່ປະຊາຊົນໃຫ້ດີກ່ວາ ເກົ່າ ຢ່າງຫຼວງຫຼາຍ. ເພີ່ມທະວີບໍລິມາດການບໍລິການປະຈຳ ວັນ ຂຶ້ນປະມານ ๑,๔-๑,๕ ເທື່ອ. ຍົກສູງຄຸນນະພາບ ໃນ ການປະຕິບັດວຽກງານການບໍລິການ ແລະເພີ່ມທະວີ ລະດັບ ໃນການບໍລິການ. ຄາດວ່າງການຂະຫຍາຍການບໍລິການ ປະ ຈຳວັນຢູ່ໃນເຂດຊົນນະບົດ ແລະຢູ່ເຂດພາກຕາເວັນອອກຂອງ ປະເທດ.

ຮັບປະກັນ ການຂະຫຍາຍວຽກງານ ຮັບການຝາກເງິນປະ ຢັດ, ປັບປຸງ ຮູບການບໍລິການປະຊາຊົນ ດ້ວຍຄົງ ຝາກເງິນ ປະຢັດ ໃຫ້ດີຂຶ້ນຕື່ມ. ຄາດວ່າງ ການນຳເອົາອຸປະກອນເຕັກ ນິກຄິດໄລ່ ແລະອຸປະກອນ ອັນຈຳເປັນ ໄປປະກອບໃຫ້ຄົງຄ່ົງ ກ່ວາ.

ຂະຫຍາຍ ການປະກັນໄພ ຂອງລັດຕໍ່ນຸກຄົນ ແລະ ຊັບສິນ ຂອງພົນລະເມືອງ.

ປັບປຸງ ລະບົບເຮັດວຽກງານຂອງວິສາຫະກິດ ການຄ້າ, ຮ້ານອາຫານສາທາລະນະຊົນ, ການບໍລິການປະຈຳວັນ, ອົງ ການຈັດຕັ້ງອື່ນ ໃນຂົງເຂດການບໍລິການ ເພື່ອສ້າງຄວາມສະ

ດວກສະບາຍ ໃນລະດັບອັນສູງສຸດ ໃຫ້ແກ່ ຜູ້ອອກແຮງງານ. ເພີ່ມທະວີການກວດກາ ຂອງມວນຊົນ ຕ້ອຽກງານ ຂອງວິສະຫະກິດ, ແລະອົງການຈັດຕັ້ງດັ່ງກ່າວ.

ປັບປຸງ ເງື່ອນໄຂ ທາງດ້ານເຮືອນຊານຂອງຊາວໂຮງຽດ ຢ່າງສະເໝີຕົ້ນສະເໝີປາຍ, ເພີ່ມທະວີ ລະດັບ ຄວາມສະດວກສະບາຍ ຂອງບ່ອນຢູ່. ຂະຫຍາຍ ຕາມ່າງຫໍພັກ ສຳລັບຊາວໜຸ່ມ ຢູ່ກັບວິສາຫະກິດ ແລະອົງການຈັດຕັ້ງ.ປັບປຸງການບໍລິການ ຢູ່ໃນຫໍພັກດັ່ງກ່າວ ໃຫ້ດີກ່ວາເກົ່າ. ກໍ່ສ້າງເຮືອນຢູ່ ໜ ສ ໜ ທີ່ເມືອທົ່ລວມ ໕໓໐-໕໔໐ ລ້ານ ແມັດມົນທົນ, ຄາດວ່າງການກໍ່ສ້າງເຮືອນຢູ່ ເປັນລະດັບໜຶ່ງ ເພື່ອຮັບປະກັນ ບ່ອນຢູ່ ໃຫ້ແກ່ ຜູ້ອອກແຮງງານ ຢູ່ໃນວິສາຫະກິດ ກໍ່ສ້າງຂຶ້ນໃໝ່ ຢູ່ໃນເຂດບຸກເບີກໃໝ່ ແລະຢູ່ໃນເຂດຊຸມນະບົດ.ປະຕິບັດການແບ່ງປັບເມືອທີ່ ບ່ອນຢູ່ຂອງລັດ ກໍ່ສ້າງຂຶ້ນໃໝ່ນັ້ນ, ໂດຍທົ່ວໄປແລ້ວ ໃຫ້ປະຕິບັດຕາມຫຼັກການ ແກ້ໄຂຫ້ອງຂະນິດເປັນຊຸມ ສະເພາະ ໃຫ້ແກ່ ແຕ່ລະຄອບຄົວ.

ເພີ່ມທະວີ ຄວາມເອົາໃຈໃສ່ ຕໍ່ນຫາການກໍ່ສ້າງບູລະນະຕົວເມືອງ ແລະບ້ານ ຢ່າງຄົບຊຸດ. ໃນສ່ວນໃຫຍ່ ປະຕິບັດໃຫ້ສຳເລັດ ການຫັນໄປໃສ່ ການກໍ່ສ້າງເຮືອນຢູ່ ຕາມແຜນເປັນຕົວແບບທີ່ມີການປັບປຸງ ວິທີການຈັດວາງຫ້ອງ ເປັນຊຸມ ໃຫ້ດີຂຶ້ນຕື່ມ, ແລະປ່ຽນແປງເງື່ອນໄຂໃນການພັກເຊົ່າ.

ເພີ່ມທະວີ ບົດບາດຂອງສະຫະກອນກໍ່ສ້າງເຮືອນຊານ,ສືບຕໍ່ປັບປຸງ ເງື່ອນໄຂເຮືອນຊານ ໃຫ້ແກ່ປະຊາຊົນ ໃຫ້ດີ ກ່ວາ

ເກົ່າ. ເປີດກ້ວາງຄວາມອາດສາມາດ ໃນການກໍ່ສ້າງເຮືອນ ອາພ່ວມຕົວ ໂດຍສະເພາະ ຢູ່ໃນຕົວເມືອງນ້ອຍ, ບ້ານ ທີ່ ລັກຊະນະແບບຕົວເມືອງ ແລະຢູ່ໃນເຂດຊົນນະບົດ. ໃຫ້ການ ຊ່ວຍເຫຼືອແກ່ ຜູ້ອອກແຮງງານ ໃນການ ກໍ່ສ້າງ ເຮືອນອາພ ແບບລວມໝູ່ ແລະແບບສ່ວນຕົວ ໂດຍການໃຊ້ຄັງເງິນ ອຸກຍູ້ ຂອງສະຫະບໍລິສັດ ແລະຂອງວິສະຫະກິດ.

ປະຕິບັດ ມາດຕະການ ທີ່ແນໃສ່ປັບປຸງການນຳໃຊ້ ແລະ ການປົກປັກຮັກສາ ເຮືອນອາພ ໃຫ້ດີກ່ວາເກົ່າ. ຂະ ຫຍາຍ ການບໍລິການ ປະຊາຊົນ ທາງດ້ານຮັບໃຊ້ຄວາມສະດວກ ໃນ ເຮືອນອາພ, ເພີ່ມທະວີການຮັບປະກັນ ລະບົບນ້ຳຮ້ອນ ແລະ ອາຍອຸ່ນ ແລະນ້ຳປະປາ ແບບລວມສູນ ໃຫ້ແກ່ຕົວເມືອງແລະ ເຂດເຕົ້າໂຮມປະຊາຊົນ, ປັບປຸງ ການຈັດແຈ່ງ ແລະປູກຕົ້ນ ໄມ້, ໃນແຕ່ລະລຸ້ມເມືອງ ຈະຕ້ອງແບ່ງເອົາ ສະຖານທີ່ແລະ ເດີ່ນ ເພື່ອຮັບໃຊ້ວຽກງານກິລາ, ການຍະກຳ, ວຽກ ງານ ວັດທະນະທຳ ແລະວຽກງານສຶກສາອົບຮົມ.

ຮັບປະກັນ ສືບຕໍ່ເສີມຂະຫຍາຍ ລະບົບ <u>ການສຶກສາ ແຫ່ງ ຊາດ</u>, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະເທດ ກ່ຽວກັບນັກວິຊາການແລະກຳມະກອນຜູ້ມີລະດັບຄວາມຊຳນິຊຳ ນານຢ່າງເຕັມສ່ວນກ່ວາເກົ່າ. ຍົກສູງສະມັດຖະພາບຂອງວຽກ ງານຂອງທຸກຕ່ອງໂສ້ແລະທຸກຮູບການໆສຶກສາແລະການກໍ່ສ້າງ ພະນັກງານ. ເສີມຂະຫຍາຍແລະປັບປຸງການຮຽນຕອນ ແລງ ແລະການຮຽນໂດຍທາງຈົດໝາຍໃຫ້ດີກ່ວາເກົ່າ.

ປັບປຸງຮູບການ ແລະແບບການສຶກສາ ອົບຮົມນ້ຳໃຈ ອອກ
ແຮງງານ, ຄຸນສົມບັດ ແລະຄວາມຮັບຮູ້ ກ່ຽວກັບຄວາມງາມ
ຢູ່ໃນໂຮງຮຽນ. ເພີ່ມທະວີອຸປະກອນການສອນທາງ ວິຊາຊີບ
ໃຫ້ແກ່ຊາວໜຸ່ມ. ສ້າງເງື່ອນໄຂເພື່ອຄ່ອຍໆ ກ້າວຂຶ້ນ ໃຫ້
ເດັກນ້ອຍ ເລີ່ມຮຽນໜັງສືແຕ່ອາຍຸ ຜ ປີ ຢູ່ໃນຫ້ອງ ກຽມ
ຂອງໂຮງຮຽນທົ່ວໄປ.

ຄາດວ່າງການສືບຕໍ່ເສີມຂະຫຍາຍຕາມ ຫ່ວງໂຮງຮຽນ ວິຊາ
ຊີບ ຊັ້ນຕົ້ນ ໃຫ້ເປັນບໍ່ເກີດອັນນຶ່ງ ທີ່ສຳຄັນ ກ່ວາໜູ ໃນການ
ສະໜອງ ພະນັກງານ ກຳມະກອນ ໃຫ້ແກ່ເສດຖະກິດ ແຫ່ງ
ຊາດ. ໃນໄລຍະ ປີ ໑໙໘໐-໑໙໘໕ ນຳເອົາຈຳນວນກຳມະ
ກອນ ວິຊາຊີບ ທີ່ລະດັບຄວາມຊຳນິຊຳນານ ໃຫ້ຮຽນ ຈົບ
ໂຮງຮຽນຕ່ຳກ່ວາ ຊັ້ນຮອດ ໑ຝ ລ້ານຄົນ; ເພີ່ມທະວີ ການ
ກໍ່ສ້າງກຳມະກອນ ວິຊາຊີບ ໃຫ້ມີລະດັບການສຶກສາ ຊັ້ນກ່ຽ
ຊັ້ນ ໑,ຝ ເທື່ອ.

ປັບປຸງການກໍ່ສ້າງ ແລະການຍົກລະດັບຄວາມຊຳນິຊຳນານ
ຂອງພະນັກງານ ຢູ່ກັບການຜະລິດ.

ກໍ່ສ້າງນັກວິຊາການຊັ້ນສູງ ແລະຊັ້ນກາງປະມານ ໑໐ລ້ານ
ຄົນ. ປະຕິບັດມາດຕາການ ທີ່ແນໃສ່ ຍົກສູງຄຸນນະພາບ ໃນ
ການກໍ່ສ້າງ ນັກວິຊາການ ແລະປັບປຸງການນຳໃຊ້ ພວກເຂົາ
ເຈົ້າ ເຂົ້າໃນ ເສດຖະກິດແຫ່ງຊາດ ໃຫ້ດີກ່ວາເກົ່າ.

ເສີມຂະຫຍາຍ <u>ວັດທະນະທຳ ແລະສິນລະປະສັງຄົມນິຍົມ</u>,
